# CHAMPA 占芭 ຈຳປາ

08/2015 ສະບັບທີ 119



## ວັດທະນະທຳເຈິນສີ່ເສຽງດັງກ້ອງທົ່ວໂລກ

## ລະດູບານໃຫມ່ເຕັມເມືອງພ້ອມກັບອາລົມແຫ່ງດອກໄມ້ຫອມ

## ທ່ານນາຍົກທອງສິ້ງ ທຳມະວົງຢ້ຽມຢາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ

ISSN 1673-3266

9 771673 326056 08>

Value Related To History
Creation Leading To Future

心以致遠
行于維新




ເກີດມາຈາກປີ 1912

ນ້ຳໃຈກວ້າງຂວາງສູງສົ່ງ
ມຸ່ງໝັ້ນການປ່ຽນແປງໃໝ່

富滇銀行
FUDIAN BANK
ທະນາຄານຟູດຽນ

www.fudian-bank.com 网上银行 | www.087196533.com 手机银行 | 0871-96533 24小时服务热线

ທະນາຄານອິນເຕີເນັດ ທະນາຄານໂທລະສັບມືຖື ສາຍດ່ວນບໍລິການ 24 ຊົ່ວໂມງ



**Hotel service:**
Ticketing & Reservation, Lao Airlines flight check in at the hotel, Tour desk, Souvenir shop, Car rental, Airport transfer, Restaurant, Swimming pool, Meeting room.





Muangthong Hotel
With a boutique feel, Muangthong hotel is impressive complex of 4, two storey buildings, built around a central courtyard and swimming pool. The building with large wooden pillars are of modern Lao design with a French colonial flavor and traditional Lao roofs, with 09 premier and 24 delux rooms.

Room Facility:
Free wifi, coffee/tea facility, room amenity, mini bar, LCD TV, safety box.

Location:
Muangthong hotel is located at Ban Thatluang, Luangprabang District, just 5-10 minutes to night market by walk or city center and 10 minutes from airport by car.

ໂຮງແຮມເມືອງທອງ
Muangthong Hotel

For more information or reservation, please visit our website:
www.muangthonglpb.com
Tel: +856-71-254976; Fax: +856-71-252974
Email: reservation@muangthonglpb.com,
mthotel@laoairlines.com
Or please contact the nearest Lao Airlines offices.

Muangthong Hotel
Ban Thatluang, ouparathKhambua Road
Luangprabang, Lao PDR

本公司位于老挝万象安居建材市场内。是集彩钢瓦、复合板、消声卷帘门、钢结构、活动板房制作安装于一体的专业生产、批发、零售企业。公司拥有全自动化复合板、彩钢瓦机器生产线，可以满足客户的个性化设计要求。设计，定做安全头盔等其他各种泡沫包装制品。本公司坚持诚信经营、质量第一的经营理念，努力将自身打造成老挝境内的行业标杆企业。

公司地址：老挝万象市13号公路5公里处万象安居建材市场内

ບໍລິສັດເຮືອນແປ້ນເຄື່ອນທີ່ເຫຼັກສີຫວັນເຈຍລາວ

ບໍລິສັດຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີລາວ,ເປັນວິສາຫະກິດສະເພາະຕົວໃນການຜະລິດ,ຂາຍສົ່ງ,ຂາຍຍ້ອຍເຊິ່ງເຕົ້າໂຮມກະເບື້ອງເຫຼັກ:ໄມ້ອັດ,ປະຕູມ້ວນທີ່ຜ່ອນສຽງ,ໂຄງປະກອບເຫຼັກ,ຜະລິດເຮືອນແປ້ນເຄື່ອນທີ່ແລະຕິດຕັ້ງເປັນອັນໜຶ່ງອັນດຽວ.ບໍລິສັດໄດ້ມີສາຍການຜະລິດໄມ້ອັດ,ກະເບື້ອງເຫຼັກສີດ້ວຍກົນຈັກໂອໂຕມະຕິກ,ສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການໃນການອອກແບບບຸກຄະລິກຂອງລູກຄ້າໄດ້.ການອອກແບບ ສັ່ງຈອງໝວກເຫຼັກນິລະໄພ ແລະ ຜະລິດຕະພັນຫຸ້ມຫໍ່ດ້ວຍສະໂນທຸກຊະນິດບໍລິສັດຍຶດຖືຈິດສຳນຶກດຳເນີນທຸລະກິດໄວ້ເນື້ອເຊື່ອໃຈ,ຄຸນນະພາບເປັນອັນດັບທີໜຶ່ງ,ພະຍາຍາມປະດິດສ້າງຕົນເອງກາຍເປັນວິສາຫະກິດແບບຢ່າງພາຍໃນດິນລາວ.

ສະຖານທີ່ຂອງບໍລິສັດ: ຕັ້ງຢູ່ພາຍໃນຕະຫລາດວັດສະດຸກໍ່ສ້າງອານຈີວຽງຈັນຫຼັກ 5 ທາງເລກ 13 ນະຄອນຫຼວງວຽງຈັນ

ວັນເຈຍສັງກະສີ-ແຜ່ນສັງກະສີອັດຟອງສະໂນ ຂາຍສົ່ງ ແລະ ຂາຍຍ່ອຍ ແຜ່ນສັງກະສີ ແຜ່ນສັດໂຟມ ປະຕູມ້ວນ ເກັບສຽງຮັບຕິດຕັ້ງ ໂຄງຫລັງຄາ ຫ້ອງເຄື່ອນຍ້າຍໄດ້ຜະລິດ ແລະ ຕິດຕັ້ງນິຍຸເຈຍ

**老挝万杰彩钢**

**活动板房有限公司**




















Tel： 021 720509 ； 020 54606278 （chinese ） 020 55557178 （ Lao ）

Mob： 0086 13758972039 （China

ໂຮງແຮມເມືອງທອງ

*Muangthong Hotel*



孟通酒店

孟通酒店充满精致的氛围。酒店拥有令人印象深刻的四要素。酒店是一个两层楼的建筑，围绕一个中心庭院建成，还拥有一个游泳池。酒店的大型木头立柱充满法国气息的老挝现代设计，屋顶则是老挝传统风格。酒店拥有9间高级房间和24间豪华房。

房间设施：免费wifi 泡茶/咖啡的用具 迷你吧 液晶电视 保险箱

旅游琅勃拉邦便捷舒适

自2014年7月1日至9月30日止到琅勃拉邦旅游的客人可乘飞机由万象-琅勃拉邦-万象,总价为1.460.000吉普：巴色-琅勃拉邦-巴色总价为1.700.000吉普，可享受：1.机票内含税费 2.免费住孟通酒店2晚上 3.免费早餐 4.可以在酒店办登机手续和出机票 5.可用车接送琅勃拉邦机场到酒店。




www.muangthonglpb.com

ການບິນລາວ
**Lao Airlines**

ຈຳປາໂຮລິເດ
*Champa Holidays*

# 云南建工集团有限公司

# ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ



云南建工集团有限公司是在云南建工集团总公司基础上，于2009年11月6日改制而成。目前，集团已发展成为集工程总承包、房地产开发、城市建设投资开发、建筑工程施工、机电设备安装、商品混凝土生产、路桥市政工程施工、钢结构工程施工、水利水电工程施工、地基工程施工、建材与设备供销、建筑科研、勘察设计、建筑劳务于一体的多层次大型企业集团；是云南省政府国资委履行出资人职责的20户省管企业和15户省属重要骨干企业之一。集团现有全资子公司、控股公司和直管企事业单位31个；现有在职职工16000人，各类专业技术人员7797人，其中具有高级职称的751人。

近年来，集团努力进行结构调整，千方百计拓展市场，综合实力显著增强，为云南的经济建设和社会发展做出了显著贡献。2013年完成总产值434.23亿元，完成竣工面积828.1万平方米。科技水平显著提高，国际市场的开拓能力不断增强。截至2013年12月，集团累计获得全国建筑工程鲁班奖22项，国家优质工程银质奖32项，詹天佑土木工程大奖提名奖1项，全国用户满意工程13项，全国和省级以上科技进步奖400多项，获部省级优质工程奖390项，连续9次入选中国承包商60强。截至2013年9月，集团公司连续22次入选中国企业500强。集团先后在也门、南非、泰国、老挝、乌干达、伊拉克、马尔代夫、毛里求斯、赤道几内亚、柬埔寨等国家承接各类工程，并荣获老挝政府颁发的“发展勋章”、“劳动勋章”等荣誉。2010年至2013年，集团公司连续四年进入美国《工程新闻记录》（ENR）杂志全球最大225家国际承包商排行榜，创造了良好的国际声誉。集团以高效、优质的服务和重合同、守信用的严谨作风，赢得了广大客户、行业主管部门、金融机构的充分信赖，连年被评为AA级企业，享有较高的商誉，“云南建工”品牌已经成为中国国内建筑业界的知名品牌。

在实现较快发展的基础上，集团全力加快战略转型的步伐，加快企业的股份制改造，将集团进一步发展成拥有设计、科研、施工、咨询、投融资建设一体化发展能力的核心竞争力更强的现代大型建筑企业集团和中国西部一流建工集团。

ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດແມ່ນບໍລິສັດທີ່ປ່ຽນແປງມາຈາກພື້ນຖານບໍລິສັດແມ່ວິສະວະກຳກໍ່ສ້າງຢຸນນານໃນວັນທີ 6 ພະຈິກ 2009.ປັດຈຸບັນນີ້,ບໍລິສັດໄດ້ພັດທະນາກາຍເປັນກຸ່ມວິສາຫະກິດຂະໜາດໃຫຍ່ທີ່ມີຫຼາຍຂັ້ນລະດັບເຊິ່ງເຕົ້າໂຮມການຮັບເໝົາລວມເອົາທາງດ້ານວິສະວະກຳ,ພັດທະນາເຄຫາສະຖານທີ່ດິນ,ພັດທະນາການລົງທຶນສ້າງສາຕົວເມືອງ,ການກໍ່ສ້າງວິສະວະກຳ,ການຕິດຕັ້ງເຄື່ອງອຸປະກອນກົນຈັກໄຟຟ້າ,ການຜະລິດທຸລະກິດເບຕົງ,ກໍ່ສ້າງຂົວທາງຜັງເມືອງ,ກໍ່ສ້າງວິສະວະກຳໂຄງປະກອບເຫຼັກ,ກໍ່ສ້າງຊົນລະປະທານ ແລະ ເຂື່ອນໄຟຟ້ານ້ຳຕົກ,ກໍ່ສ້າງວິສະວະກຳພື້ນຖານ,ການສະໜອງ ແລະ ຈຳໜ່າຍວັດສະດຸກໍ່ສ້າງ ແລະ ເຄື່ອງອຸປະກອນ,ການຄົ້ນຄວ້າສະຖາປັດຕະຍະກຳ,ການສຳຫຼວດອອກແບບ,ການກໍ່ສ້າງ ແລະ ແຮງງານ ແລະ ອື່ນໆເປັນອັນໜຶ່ງອັນດຽວກັນ; ແມ່ນ 1 ໃນວິສາຫະກິດຫລັກແຫຼ່ງທີ່ສຳຄັນ 15 ແຫ່ງຂຶ້ນກັບແຂວງ ແລະ 20 ແຫ່ງສັງກັດແຂວງຄຸ້ມຄອງເຊິ່ງແມ່ນຄະນະກຳມະການຄຸ້ມຄອງຊັບສິນຂອງລັດປະຕິບັດພາລະໜ້າທີ່ຂອງຜູ້ອອກທຶນ.ປັດຈຸບັນນີ້,ກຸ່ມບໍລິສັດມີບໍລິສັດລູກທີ່ມີທຶນທັງໝົດ,ບໍລິສັດຖືຫຸ້ນ, ແລະ ຫົວໜ່ວຍວິສາຫະກິດຄຸ້ມຄອງໂດຍກົງ 31 ບໍລິສັດ.ມີພະນັກງານພະລາກອນ 16,000 ກວ່າຄົນ,ມີພະນັກງານວິຊາການປະເພດຕ່າງໆ 7797 ຄົນ,ໃນນັ້ນ,ຜູ້ທີ່ມີຕຳແໜ່ງຊັ້ນສູງ 751 ຄົນ.

ຫວ່າງປີມໍ່ໆມານີ້,ກຸ່ມບໍລິສັດພະຍາຍາມດຳເນີນການປັບປຸງໂຄງປະກອບ,ຂະຫຍາຍຕະຫລາດໃຫ້ກວ້າງອອກດ້ວຍທຸກວິທີ,ກຳລັງສັງລວມຂອງກຸ່ມບໍລິສັດໄດ້ເພີ່ມຂຶ້ນຢ່າງເດັ່ນຊັດ.ໄດ້ປະກອບສວນອັນພົ້ນເດັ່ນເຂົ້າໃນການສ້າງສາເສດຖະກິດ ແລະ ການພັດທະນາສັງຄົມຂອງແຂວງຢຸນນານ.ໃນປີ 2013,ໄດ້ສຳເລັດຍອດມູນຄ່າການຜະລິດ 43,423 ຕື້ຢວນຈີນ,ເນື້ອທີ່ກໍ່ສ້າງໄດ້ປະຕິບັດສຳເລັດ 828,1 ໝື່ນຕາແມັດ.ລະດັບວິທະຍາສາດເຕັກໂນໂລຊີໄດ້ຍົກສູງຂຶ້ນຢ່າງຊັດເຈນ,ຄວາມສາມາດບຸກເບີກຕະຫລາດສາກົນໄດ້ເພີ່ມຂຶ້ນຢ່າງຕໍ່ເນື່ອງ.ຈົນເຖິງເດືອນທັນວາປີ 2013,ກຸ່ມບໍລິສັດລວມໄດ້ຮັບລາງວັນລູປານວິສະວະກຳກໍ່ສ້າງທົ່ວປະເທດ 22 ລາຍການ,ລາງວັນເງິນວິສະວະກຳດີເລີດແຫ່ງຊາດ 32 ລາຍການ,ມະຫາລາງວັນສະຖາປັດຕະຍະກຳດ້ານດິນ ແລະ ໄມ້ຈັນທຽນຢຽວສະເໜີລາຍຊື່ 1 ລາຍ,ວິສະວະກຳທີ່ລູກຄ້າທົ່ວປະເທດເພິ່ງພໍໃຈ 13 ລາຍ,ລາງວັນກ້າວໜ້າດ້ານວິທະຍາສາດເຕັກໂນໂລຊີທົ່ວປະເທດ ແລະ ຂັ້ນແຂວງຂຶ້ນໄປ 400 ກວ່າລາຍ,ໄດ້ຮັບລາງວັນວິສະວະກຳດີເລີດຂັ້ນແຂວງ 390 ລາຍ,ໄດ້ຖືກຄັດເລືອກເຂົ້າໃນຖັນແຖວນັກທຸລະກິດຮັບເໝົາ 60 ແຂວງແກ່ນຂອງຈີນລຽນຕິດ 9 ເທື່ອ,ຈົນເຖິງເດືອນກັນຍາ 2013,ກຸ່ມບໍລິສັດໄດ້ຖືກເລືອກເຂົ້າສູ່ຖັນແຖວ 500 ວິສາຫະກິດແຂງແກ່ນຂອງຈີນລຽນຕິດ 22 ເທື່ອ.ກຸ່ມບໍລິສັດໄດ້ຮັບເໝົາໂຄງການປະເພດຕ່າງໆຢູ່ຕ່າງປະເທດເຊັ່ນ:ເຢແມນ,ອະຟຼິກກາໃຕ້,ໄທ,ລາວ,ອູການດາ,ອີລັກ,ມານໄດຟ໌,ໂມຣິດ,ກີເນເອກົວເຕີ,ກຳປູເຈຍ ແລະ ປະເທດອື່ນໆ,ໄດ້ຮັບກຽດຕິຍົດຈາກລັດຖະບານລາວໂດຍການປະດັບຫລຽນໄຊພັດທະນາ,ຫຼຽນໄຊແຮງງານໃຫ້ແກ່ກຸ່ມບໍລິສັດ.ໃນປີ 2010-2013,ກຸ່ມບໍລິສັດໄດ້ຖືກຈັດເຂົ້າໃນສາລະບານນັກທຸລະກິດຮັບເໝົາກໍ່ສ້າງສາກົນ 225 ບໍລິສັດທີ່ໃຫຍ່ສຸດໃນໂລກຂອງວາລະສານ ENR ບັນທຶກຂ່າວວິສະວະກຳຂອງອາເມລິກາ,ໄດ້ສ້າງຊື່ສຽງສາກົນທີ່ດີເດັ່ນ.ກຸ່ມບໍລິສັດຖືເອົາການບໍລິການທີ່ມີປະສິດທິພາບສູງ ແລະ ມີຄຸນນະພາບດີເລີດ ແລະ ທ່ວງທ່າທຳນອງທີ່ເຂັ້ມງວດໃນການນັບຖືສັນຍາ,ປະຕິບັດຕາມຄຳໝັ້ນສັນຍາ,ໄດ້ຮັບຄວາມເຊື່ອໃຈຢ່າງເຕັມທີ່ຈາກລູກຄ້າອັນກວ້າງໃຫຍ່ໄພສານ,ກົມກອງຄຸ້ມຄອງຂະແໜງການວິສາຫະກິດ,ວົງການການເງິນ,ໄດ້ຮັບການຕີລາຄາເປັນວິສາຫະກິດຂັ້ນ AA ຫລາຍປີລຽນຕິດ,ໄດ້ຮັບນາມມະຍົດຂັ້ນສູງ."ຍີ່ຫໍ້ດ້ານວິສະວະກຳກໍ່ສ້າງຢຸນນານ"ໄດ້ກາຍເປັນ"ຍີ່ຫໍ້ດັງທີ່ມີຊື່ສຽງ"ໃນວົງການວິສະວະກຳກໍ່ສ້າງພາຍໃນປະເທດ.

ບົນພື້ນຖານແຫ່ງການພັດທະນາຕົວຈິງທີ່ໄວສົມຄວນນັ້ນ,ກຸ່ມບໍລິສັດໄດ້ອອກແຮງເລັ່ງລັດບາດກ້າວຫັນປ່ຽນທາງດ້ານຍຸດທະສາດ,ເລັ່ງລັດການປັບປຸງລະບົບຫຸ້ນສ່ວນຂອງວິສາຫະກິດ,ຈະພັດທະນາກຸ່ມບໍລິສັດໃຫ້ກາຍເປັນກຸ່ມບໍລິສັດກໍ່ສ້າງແຖວໜ້າໃນພາກຕາເວັນຕົກຂອງຈີນ ແລະ ເປັນກຸ່ມວິສາຫະກິດວິສະວະກຳກໍ່ສ້າງທັນສະໄໝຂະໜາດໃຫຍ່ທີ່ມີແກນກາງແຫ່ງຄວາມສາມາດແກ່ງແຍ້ງທີ່ຍິ່ງເຂັ້ມແຂງກວ່າເກົ່າໃນດ້ານການລະດົມທຶນກໍ່ສ້າງເປັນອັນໜຶ່ງອັນດຽວກັນ,ກາຍເປັນທີ່ປຶກສາ,ການກໍ່ສ້າງ,ການຄົ້ນຄ້ວາວິທະຍາສາດ ແລະ ການອອກແບບ.




ທ່ານທອ□ສິ□ ທຳມະວົ□ນາຍົກລັດຖະມົນຕີແຫ່□ ສປປ ລາວຖ່າຍຮູບຮ່ວມກັນກັບທ່ານເຊີນເວີນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າ□ຢຸນນານ

老挝总理通辛·塔马冯与云南建工集团有限公司董事长陈文山合影

云南建工集团有限公司 供图

# ສາລະບານ

08/2015 ສະບັບທີ 119












## ສາລະຄະດີພິເສດ 本刊特稿

08.ທ່ານນາຍົກທອງສິງ ທຳມະວົງຢ້ຽມຢາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ

12.ວັດທະນະທຳຈີນສົ່ງສຽງດັງກ້ອງທົ່ວໂລກ

## ໜຶ່ງແລວທາງ ໜຶ່ງເສັ້ນທາງ "一带一路"

16. "ໜຶ່ງແລວທາງ ໜຶ່ງເສັ້ນທາງ "ສ້າງໂອກາດທີ່ດີສຳລັບວິສາຫະກິດຈີນທີ່ "ກ້າວສູ່ພາຍນອກ"

## ຄວາມໄຝ່ຝັນຂອງຈີນ 中国梦

20.ທ່າທຽນສິນ

## ປະຕູເມືອງຈີນ 中国之窗

22.ວິສາຫະກິດຈີນຄ້ຳຊູພາບພົດທີ່ດີຂອງສິນຄ້າຍີ່ຫໍ້ຈີນ

26. ເຮັດໃຫ້ສີຂຽວປະດັບດິນແດນປະເທດຈີນງາມຍິ່ງຂຶ້ນ

## ການໄປມາຫາສູ່ກັນສັນຖະວະໄມຕີຈິດ 友好往来

30.ການຄ້າທາງອິນເຕີເນັດຂ້າມຊາດຢູ່ອາຊີຕາເວັນອອກສຽງໃຕ້ຈະເລີນຂື້ນ ປະເທດລາວກຽມພ້ອມແລ້ວ

## ລວມຈຸດຢຸນນານ 聚焦云南

34. ແຂວງຢຸນນານສ້າງຊື່ສຽງໃຫ້ແກ່ຜະລິດຕະພັນຕ່າງໆ

## ການທ່ອງທ່ຽວທົ່ວສະນາຈອນ 旅游纵横

38.ລະດູບານໃໝ່ເຕັມເມືອງພ້ອມກັບອາລົມແຫ່ງດອກໄມ້ຫອມ

42.ປ່າຊາຍສີ—ມະຫັດສະຈັນທຳມະຊາດທີ່ເຫັນຍາກໃນໂລກ

## ລຽບຊົມວັດທະນະທຳ 文化博览

46.ສິລະປະກຳປະຊາຊົນຮ້ອຍປີ— ຕັດສະຫຼັກເຄື່ອງປັ້ນດິນເຜົາ

48. ຫີນແກະສະຫຼັກຣຸຍອ່ານະ ສິລະປະແກະສະຫຼັກນິກາຍພາກໃຕ້ຈີນ

## ໂຮງຮຽນຊື່ດັງທີ່ມີສະເໜ່ 魅力名校

50.ມະຫາວິທະຍາໄລສ້າງຄູຢຸນນານ

## ປະຊາຊາດຈີນ 中华民族

52.ເຜົ່າເຕືອງາງ

## ບໍລິການເພື່ອທ່ານ 为您服务

53.ການແນະນຳເຄື່ອງຊົງນ້ຳຊາປະເພດຕ່າງໆ

## ຮຽນພາສາຈີນ 学汉语

56.ຮຽນພາສາຈີນ



发行范围：国内外公开发行
出版日期：每月五日
邮发代号：64 – 36
国际标准刊号：ISSN 1673 – 3266
国内统一刊号：CN53 – 1200/D


地址：云南省昆明市环城西路577号
编辑部电话：86–871–64112975
办公室电话：86–871–64101644
传真：86–871–64112975
邮编：650034
邮箱：ynzhanba@163.com

《占芭》杂志社驻老挝代表处：
地址：万象市苏发努冯路湄公酒店二栋2211 室
电话：00856–21–254866


广告经营许可证号：5300004000052
印刷：昆明富新春彩色印务有限公司

ພິມຈຳໜ່າຍເປີດເຜີຍ: ພາຍໃນແລະຕ່າງປະເທດ
ອອກຈຳໜ່າຍ: ວັນທີ 5 ທຸກເດືອນ
ລະຫັດວາລະສານມາດຖານສາກົນ: ISSN 1673–3266
ລະຫັດວາລະສານປະເທດຈີນ: CN53–1200/D


ສະຖານທີ່: ຖະໜົນທວນເຊີນຊີລູເຮືອນເລກທີ 577
ລະຫັດໄປສະນີ: 650034
ໂທ: 86–871–64112975 64101644
ແຟກ: 86–871–64112975
Email:ynzhanba@163.com

ຫ້ອງການຕາງໜ້າສຳນັກພິມວາລະສານ《ຈຳປາ》ສປ ຈີນປະຈຳນະຄອນຫຼວງວຽງຈັນ ສປປ ລາວ
ທີ່ ຢູ່:ຫ້ອງ 2211 ຕຶກທີ 2 ໂຮງແຮມແມ່ຂອງ ຖະໜົນສຸພານຸວົງ ນະຄອນຫຼວງວຽງຈັນ
ເບີ ໂທ: 00856-21-254866


ເລກໃບປາຕັງທຸລະກິດໂຄສະນາ: 5300004000052

RMB ￥10



主 管 中华人民共和国国务院新闻办公室
主 办 云南省人民政府新闻办公室
协 办 云南建工集团有限公司
编辑出版 《占芭》杂志社

总 顾 问 赵 金 卯稳国
顾 问 张红苹 宣宇才 蔡春生
张瑞才 李联斌 刘 荣
社 长 李 茜
副 社 长 吴静波 田虎青 海 江

总 编 辑 杨 云
总编室主任 禹正玉
总编室副主任 汪伟云
编辑总监 王志谦
编辑部副主任 苏雯雯
翻 译 北京外国语大学亚非学院
李小元 吴敦信 刘仁和
老挝文译审 刘仁和
老挝文编辑 白 艳
美术总监 祝 群
网络总监 张守义
总监助理 张俊宏
网络部副主任 李 涛
编 辑 李文君 施艳琼 李沁颖
发行部主任 邹和平
发 行 陈 龙
编 务 陆 蕊 何如兰

ເຈົ້າໜ້າທີ່ຄຸ້ມຄອງໂດຍ ຫ້ອງການຂ່າວຄະນະລັດຖະບານ ສປ ຈີນ
ຈັດທຳໂດຍ ຫ້ອງການຂ່າວປົກຄອງແຂວງຢຸນນານ
ອົງການປະສານງານ ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານຈຳກັດ
ຮຽບຮຽງພິມຈຳໜ່າຍ ສຳນັກພິມວາລະສານ《ຈຳປາ》

ທີ່ປຶກສາໃຫຍ່ ຈາວຈິນ ເມົາເວີນກົວ
ທີ່ປຶກສາ ຈ່າງຫົງພິງ ຊຽນຢູຍໄຊ ໄຊຊຸນແຊງ
ຈ່າງຢູ້ຍໄຊ ລີລຽນປີ່ນ ລິວຢົງ
ຜູ້ອຳນວຍການໃຫຍ່ ລີສ້ຽນ
ຮອງຜູ້ອຳນວຍການໃຫຍ່ ອູຈິນໂປ ທຽນຫູຊິນ ໄຮຈຽງ
ຫົວໜ້າບັນນາທິການໃຫຍ່ ຢາງຢູນ
ຫົວໜ້າພິມຈຳໜ່າຍ ຢູຍເຈີງຢູຍ
ຮອງຫົວໜ້າພິມຈຳໜ່າຍ ຫວ່າງເວີຍຢູນ
ຫົວໜ້າບັນນາທິການ ຫວາງຈື້ຊ່ຽນ
ຮອງຫົວໜ້າພະແນກບັນນາທິການ ຊູ່ເວີນເວີນ
ຜູ້ແປພາສາລາວ ມະຫາວິທະຍາໄລພາສາຕ່າງປະເທດປັກກິ່ງ
ຫຼີຊຽວຢວນ ອູດົນສິນ ລິວເຢີນເຫີ
ຜູ້ກວດແກ້ພາສາລາວ ລິວເຢີນເຫີ
ບັນນາທິການພາສາລາວ ປາຍຍຽນ
ຜູ້ຄຸມງານຝ່າຍສິລະປະ ຈູ້ສິນ
ຜູ້ຄຸມງານຝ່າຍອິນເຕີເນັດ ຈາງເຊີຢີ ຜູ້ຊ່ວຍຜູ້ຄຸມງານ ຈາງຈຸນຮອງ
ຮອງຫົວໜ້າພະແນກອິນເຕີເນັດ ລີທາວ ບັນນາທິການ ລີເວີນຈູນ ຊື່ຢຽນສົງ ລີຊິ່ງຢິງ
ຫົວໜ້າພະແນກແຈກຈ່າຍ ໂຈວເຮີພິງ
ພິມຈຳໜ່າຍແຈກຈ່າຍ ແຊງລົງ
ພະນັກງານຝ່າຍປົກຄອງ ລູຢູຍ ເຫຢູລານ

文、图 / 云南建工集团有限公司

# ທ່ານນາຍົກທອງສິງ ທຳມະວົງຢ້ຽມຢາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ





ທ່ານທອ□ສີ□ ທຳມະວົ□ນາຍົກລັດຖະມົນຕີແຫ່□ ສປປ ລາວຖ່າຍຮູບຮ່ວມກັນກັບທ່ານເຊີນເວີນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າ□ຢຸນນານ

通辛・塔马冯与云南建工集团有限公司董事长陈文山合影

## 老挝总理通辛・塔马冯视察云南建工集团

2015 年 6 月 12 日，在第 3 届中国—南亚博览会暨第 23 届中国昆明进出口商品交易会开幕仪式后，老挝总理通辛・塔马冯率老挝工贸部部长凯玛尼・普色纳，外交部副部长萨勒姆赛・叩玛西塔，老挝驻中国大使叟穆迪・本叩等老挝代表团一行访问云南建工集团。

ວັນທີ 12 ມິຖຸນາປີ 2015,ຫຼັງຈາກພິທີໄຂງານວາງສະແດງສິນຄ້າຈີນ-ອາຊີໃຕ້ຄັ້ງທີ 3 ແລະ ງານຕະຫຼາດນັດສິນຄ້າຂາເຂົ້າຂາອອກຄຸນມິງຈີນຄັ້ງທີ 23,ທ່ານ ທອງສິງ ທຳມະວົງ,ນາຍົກລັດຖະມົນຕີລາວໄດ້ນຳພາຄະນະຜູ້ແທນລາວທີ່ມີທ່ານນາງ ເຂັມມະນີ ພົນເສນາ,ລັດຖະມົນຕີວ່າການກະຊວງອຸດສາຫະກຳ ແລະ ການຄ້າ,ທ່ານ ສະເຫຼີມໄຊ ກົມມະສິດ,ລັດຖະມົນຕີຊ່ວຍວ່າການກະຊວງການຕ່າງປະເທດລາວ,ທ່ານສົມດີ ບຸນຄຸ້ມ,ເອກອັກຄະລັດຖະທູດລາວປະຈຳຈີນ ແລະ ທ່ານອື່ນໆໄປຢ້ຽມຢາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ.



ທ່ານທອ□ສີ□ ທຳມະວົ□ນາຍົກລັດຖະມົນຕີແຫ່□ ສປປ ລາວຖ່າຍຮູບຮ່ວມກັນກັບທ່ານ ລິວຢົງ ຜູ້ອຳນວຍການໃຫຍ່ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າ□ຢຸນນານ

通辛・塔马冯与云南建工集团有限公司总经理刘勇合影

ທ່ານ ຈົ່ງມຽນ,ຮອງເລຂາຄະນະພັກແຂວງຢຸນນານ,ທ່ານ ເສີນເວີນສ່ານ,ເລຂາຄະນະພັກ,ປະທານຄະນະບໍລິຫານກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ,ທ່ານລິວຢົງ,ຮອງເລຂາຄະນະພັກທັງເປັນຜູ້ອຳນວຍການໃຫຍ່ກຸ່ມບໍລິສັດ,ທ່ານ ຫົງເຈົ້ງຮວາ,ຜູ້ວ່າການທະນາຄານພັດທະນາແຫ່ງຊາດຈີນສາຂາຢຸນນານ,ທ່ານ ຈົ່ງຊູ່ຈຸ້ນ,ຮອງຜູ້ວ່າທະນາຄານພັດທະນາແຫ່ງຊາດຈີນສາຂາຢຸນນານໄດ້ຕ້ອນຮັບທ່ານ ທອງສິງ ທຳມະວົງ ພ້ອມຄະນະທີ່ໄປຢ້ຽມຢາມກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານ.

ທ່ານ ທອງສິງ ທຳມະວົງ ພ້ອມຄະນະໄດ້ຢ້ຽມຢາມສຳນັກງານໃຫຍ່ຂອງກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໂດຍພາຍໃຕ້ການພາທາງຂອງທ່ານຈົ່ງມຽນ,ທ່ານເສີນເວີນຊ່ານ,ທ່ານຫົງເຈົ້ງຮວາ ແລະ ທ່ານລິວຢົງ. ທ່ານ ເສີນເວີນຊ່ານ ໄດ້ແຈ້ງໃຫ້ຊາບສະພາບການພັດທະນາຂອງກຸ່ມບໍລິສັດໃນຊຸມປີມໍ່ໆມານີ້,ການເປີດກວ້າງຕະຫຼາດຢູ່ລາວໃນປະຈຸບັນ,ແລະ ສະພາບການລົງທຶນແລະ ການກໍ່ສ້າງຂອງໂຄງການເຂດພັດທະນາສັງລວມໄຊເສດຖາ,ແລະ ໂຄງການວຽງຈັນເຊັນເຕີ.

ທ່ານ ຈົ່ງມຽນ ກ່າວວ່າ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ຕັ້ງໜ້າເສີມຂະຫຍາຍທ່າແຮງຂອງຕົນ,ກຳແໜ້ນກາລະໂອກາດຂອງການກໍ່ສ້າງ "ໜຶ່ງແລວທາງ ໜຶ່ງເສັ້ນທາງ",ພະຍາຍາມເປີດກວ້າງຕະຫຼາດຢູ່ຕ່າງປະເທດ,ປະຈຸບັນໄດ້ກາຍເປັນຜູ້ນຳໜ້າຂອງວິສາຫະກິດແຂວງຢຸນນານໃນຍຸດທະສາດ"ກ້າວໄປພາຍນອກ". ຢູ່ປະເທດລາວ,ກຸ່ມບໍລິສັດວິສະວະກຳກໍ່ສ້າງຢຸນນານໄດ້ສ້າງແບບຢ່າງທີ່ດີສຳລັບວິສາຫະກິດຈີນຈຳນວນຫຼວງຫຼາຍທີ່"ກ້າວສູ່ພາຍນອກ",ຫວັງວ່າກຸ່ມບໍລິສັດວິສະວະກຳ



ທ່ານທອ□ສີ□ ທຳມະວົ□ ນາຍົກລັດຖະມົນຕີແຫ່□ ສປປ ລາວພ້ອມດ້ວຍຄະນະຢ້ຽມຢາມຕຶກອາຄານຫ້ອງການກຸ່ມບໍລິສັດວິສະວະກຳກໍ່ສ້າ□ຢຸນນານ

通辛・塔马冯一行参观云南建工集团办公室大楼

ກໍ່ສ້າງປຸນນານປີ່ນອ້ອມສະພາບການລວມຂອງຍຸດທະສາດ "ໜຶ່ງແລວທາງ ໜຶ່ງເສັ້ນທາງ",ເລັ່ງລັດຊຸກຍູ້ໂຄງການເຂດພັດທະນາສັງລວມໄຊເສດຖາ ແລະ ໂຄງການພື້ນຖານໂຄງລ່າງອື່ນໆ.

ທ່ານ ເສີນເວີນຊ່ານ ໄດ້ສະແດງຄວາມຂອບໃຈຕໍ່ຄວາມເອົາໃຈໃສ່ ແລະ ການສະໜັບສະໜູນຂອງລັດຖະບານລາວ. ທ່ານກ່າວວ່າ,ພາຍໃຕ້ຄວາມເອົາໃຈໃສ່ ແລະ ການສະໜັບສະໜູນຂອງລັດຖະບານລາວ,ຮັບປະກັນວຽງຈັນເຊັນເຕີເປີດບໍລິການຕາມເວລາກຳນົດ,ແລະຮັບປະກັນໂຄງການເຂດພັດທະນາສັງລວມໄຊເສດຖາມີຄວາມຄືບໜ້າຕາມແຜນການ.ຕໍ່ໄປ,ພວກຂ້າພະເຈົ້າຈະເສີມຂະຫຍາຍຄວາມສາມາດດ້ານການລົງທຶນລະດົມທຶນ,ແລະ ຄວາມສາມາດດ້ານການຮັບເໝົາໂຄງການຂອງກຸ່ມບໍລິສັດ,ເຊື່ອມໂຍງເຂົ້າການສ້າງສາເສດຖະກິດສັງຄົມຂອງລາວ,ປະກອບສ່ວນຂອງຕົນເຂົ້າໃນການພັດທະນາຂອງລາວ,ຫວັງວ່າລັດຖະບານລາວໃຫ້ການສະໜັບສະໜູນແກ່ການພັດທະນາຂອງພວກຂ້າພະເຈົ້າຄືໄດ້ເຮັດຜ່ານມາ.

ທ່ານ ທອງສິງ ທຳມະວົງ ກ່າວວ່າ,ລັດຖະບານລາວກັບກຸ່ມບໍລິສັດວິສະວະກຳກໍ່ສ້າງປຸນນານໄດ້ສ້າງສາຍພົວພັນຮ່ວມມືເປັນຢ່າງດີແລ້ວ, ໂດຍສະເພາະແມ່ນຊຸມປີມໍ່ໆມານີ້,ກຸ່ມບໍລິສັດວິສະວະກຳກໍ່ສ້າງປຸນນານໄດ້ລົງທຶນ ແລະ ກໍ່ສ້າງໂຄງການສຳຄັນຈຳນວນຫຼາຍທີ່ກ່ຽວພັນເຖິງແຜນການພັດທະນາແຫ່ງລັດ ແລະ ຊີວິດການເປັນຢູ່ຂອງປະຊາຊົນລາວເຊິ່ງຊຸກຍູ້ການພັດທະນາເສດຖະກິດຂອງລາວ,ລັດຖະບານສະແດງຄວາມຂອບໃຈຕໍ່ເລື່ອງນີ້,ຫວັງວ່າກຸ່ມບໍລິສັດວິສະວະກຳກໍ່ສ້າງປຸນນານໃຫ້ຄວາມສຳຄັນຕໍ່ຕະຫຼາດລາວຄືໄດ້ເຮັດໃນຜ່ານມາ,ເລັ່ງລັດຊຸກຍູ້ໂຄງການພັດທະນາສັງລວມໄຊເສດຖາ ແລະ ໂຄງການອື່ນໆ,ລັດຖະບານລາວຈະຮັບໃຊ້ ແລະ ສະໜັບສະໜູນກຸ່ມບໍລິສັດວິສະວະກຳກໍ່ສ້າງປຸນນານໃຫ້ດີ.ສຸດທ້າຍ,ສອງຝ່າຍໄດ້ມອບເຄື່ອງທີ່ລະນຶກໃຫ້ແກ່ກັນ.



ທ່ານ ເຊີນເວີນຊານ ເລຂາຄະນະພັກ,ປະທານກຸ່ມບໍລິສັດວິສະວະກຳກໍ່ສ້າ□ປຸນນານແນະນຳສະພາບການພັດທະນາຂອ□ກຸ່ມບໍລິສັດແກ່ທ່ານ ທອ□ສິ□ ທຳມະວົ□ນາຍົກລັດຖະມົນຕີແຫ່□ ສປປ ລາວ
陈文山向通辛・塔马冯介绍集团发展情况



《占芭》老挝全国广告招商总代理
——LAO FUTURE 传媒公司

扫一扫，掌握老挝最新资讯

ຍິນດີຕ້ອນຮັບຂໍເຊີນທຸກໆທ່ານມາລົງໂຄສະນານຳພວກເຮົາ
ພວກເຮົາເນັ້ນໃສ່ສ່ວນຫລາຍແມ່ນດ້ານການເສດຖະກິດ,
ການເມືອງ,ການສຶກສາ,ວັດທະນາທຳ,ການທ່ອງທ່ຽວ ແລະ ອື່ນໆ

老挝资讯网
www.360laos.com 搜索一下
商务服务 二手买卖 吃喝玩乐 人才招聘
www.360laos.com
新闻资讯 政策法规 招标投资 风土民情

# ວັດທະນະທຳຈີນສົ່ງສຽງດັງກ້ອງທົ່ວໂລກ

## 中国文化唱响世界

6 月 8 日，艳阳当空。在 6.8 米高巨幅中国结的映衬下，米兰世博会迎来中国国家馆日。当日，中国文化的独特魅力令来自全球各地的游客们流连忘返。5 月 28 日，纽约哈德逊河畔书香袭人。“中国主宾”成为美国书展上的关键词，2000 多平方米的展台成功地让世界感知中国的活力。

人类文明犹如瑰丽的世界风情画，西洋画、中国画，彼此交织，堪称绝美；人类文明仿佛世界交响曲，西洋乐、中国风，珠联璧合，渐入佳境。

ວັນທີ 8 ມິຖຸນາປີ 2015,ຢູ່ໃຕ້ທ້ອງຟ້າທີ່ມີແສງຕາເວັນທີ່ແຈ້ງສະຫວ່າງ,ພາຍໃຕ້ການປະດັບປະດາດ້ວຍຂອດຈີນທີ່ສູງເຖິງ 6,8 ແມັດນັ້ນ,ງານວາງສະແດງໂລກມີລາໂນໄດ້ຈັດກິດຈະກຳ“ວັນຫໍວາງສະແດງປະເທດຈີນ”. ສະເໜ່ພິເສດຂອງວັດທະນະທຳຈີນໄດ້ດຶງດູດຜູ້ຊົມຈາກແຫ່ງຕ່າງໆຂອງໂລກ.ວັນທີ 28 ພຶດສະພາ 2015,ຢູ່ແຄມແມ່ນ້ຳຮັດຊັນຂອງນິວຢອກໄດ້ເຕັມໄປດ້ວຍກິ່ນຫອມຂອງປຶ້ມ.“ປະເທດຈີນທີ່ເປັນປະເທດກຽດຕິຍົດ”ໄດ້ກາຍເປັນຄຳສັບອັນສຳຄັນໃນງານວາງສະແດງປຶ້ມຂອງອາເມລິກາ.ຕູ້ວາງສະແດງທີ່ມີເນື້ອທີ່ 2000 ກວ່າຕາແມັດເຮັດໃຫ້ທົ່ວໂລກສຳຜັດເຖິງພະລັງຊີວິດຊີວາຂອງຈີນ.

ຄວາມສີວິໄລຂອງມະນຸດເໝືອນດັ່ງຮູບແຕ້ມທີ່ມີສີສັນຕ່າງໆຂອງໂລກ,ຮູບແຕ້ມຕາເວັນຕົກ,ຮູບແຕ້ມຈີນໄດ້ເຊື່ອມສານເຂົ້າກັນ ແລະ ກັນ,ສົມຊື່ເປັນສິ່ງງົດງາມຍອດຢ້ຽມ; ຄວາມສີວິໄລຂອງມະນຸດເໝືອນດັ່ງດົນຕີຊິມໂຟນີ,ດົນຕີຕາເວັນຕົກ ແລະ ດົນຕີສີສັນຈີນ,ເຊື່ອມໂຍງເຂົ້າກັນ,ແລະ ຄ່ອຍໆກ້າວເຂົ້າສູ່ສະພາບທີ່ກົມກຽວກັນ.



ວັນທີ 17 ເດືອນ 5 ,ນັກສະແດ□ □ີ້ວເສຊວນຜູ້ໜຶ່ງກຳລັງສະແດງປ່ຽນໜ້າໃນພິທີແຕ່□ການເຄື່ອນໄຫວ "ຄວາມຮູ້ສຶກຮັບຮູ້ປະເທດຈີນ"ສັປະດາອາຊີປາຊີຟິກທີ່ແບກແລງເຢຍລະມັນ
5 月 17 日，在德国柏林，一名川剧演员在柏林亚太周“感知中国”活动开幕式上表演变脸 新华社 图



ວັນທີ 20 ເດືອນ 2 ,ຄະນະດົນຕີຊົນເຜົ່າໂຮງລະຄອນຮ້ອງລະບຳແຂວງຫູນານຈີນໄດ້ດຳເນີນການສະແດງໃນສູນວັດທະນະທຳຈີນທີ່ຊິດນີອົດສະຕຣາລີ
2 月 20 日，中国湖南省歌舞剧院民族乐团在澳大利亚悉尼中国文化中心表演 新华社 图

ເມື່ອ “ສີແດງຈີນ”ເຊື່ອມໂຍງເຂົ້າສູ່“ຫຼາກຫຼາຍສີສັນຂອງໂລກ”

ໃນບຸນກຸດຈີນປີມະແມ,ທ່ານ ບັນກີມູນ,ເລຂາທິການໃຫຍ່ສະຫະປະຊາຊາດໄດ້ຂຽນໜັງສືຈີນ “ຄອບຄົວກົມກຽວ,ປະສົບຄວາມຈະເລີນຮຸ່ງເຮືອງໃນທຸກສິ່ງທຸກຢ່າງ” ເຊິ່ງສະແດງໃຫ້ຄວາມອວຍພອນຕໍ່ປະຊາຊົນຈີນ; ເຈົ້າຊາຍວິນລຽມຂອງອັງກິດໄດ້ອັດວິດີໂອເປັນພິເສດ ແລະ ອວຍພອນບຸນກຸດຈີນມາຍັງປະຊາຊົນຈີນ; ທ່ານອາບອດ,ນາຍົກລັດຖະມົນຕີອົສຕຼາລີໄດ້ພາຄອບຄົວໄປອວຍພອນບຸນກຸດຈີນໃຫ້ແກ່ຈີນຕ່າງດ້າວ ແລະ ເຊື້ອສາຍຈີນຢູ່ຄຸ້ມໄຊນາທາວຂອງຊິດນີ.

ຢູ່ວັງລູເວຂອງຝຣັ່ງ,ຄະນະບໍລິຫານວັງລູເວປະກາດວ່າຈະເປີດບໍລິການສະໜອງຂໍ້ມູນຂ່າວສານເປັນພາສາຈີນກ່ຽວກັບສິ່ງວາງສະແດງອັນສຳຄັນ,ການແນະນຳກິດຈະກຳ,ແລະ ແຜນທີ່ນຳທາງ;ຢູ່ຫໍພິພິດທະພັນນິວຢອກ, “ຈີນ: ຈີ້ນຮວ່າສຸຍເຢ້”ໄດ້ກາຍເປັນຫົວຂໍ້ຫຼັກຂອງການນຸ່ງຖືໃນງານລາຕີກຸສົນປະຈຳປີ,ຜົມສີຄຳຕາສີຂຽວປະດັບປະດາດ້ວຍຊຸດຊີພາວຈີນເຊິ່ງກາຍເປັນສີສັນທີ່ໜ້າສົນໃຈ.

ຈາກຄຳອວຍພອນບຸນກຸດຈີນຂອງບຸກຄົນສຳຄັນທາງການເມືອງຂອງຕ່າງປະເທດ,ຮອດສ່ວນຮ່ວມຢ່າງມີຄວາມກະຕືລືລົ້ນຂອງມະຫາຊົນ,ຈາກເຄື່ອງປະດັບປະດາທີ່ເປັນສີແດງຈີນຢູ່ໃນຮ້ານຄ້າຮອດຂໍ້ມູນພາສາຈີນຢູ່ໃນຫໍພິພິທະພັນ,ນີ້ບໍ່ພຽງແຕ່ສະແດງໃຫ້ເຫັນຄວາມເຄົາລົບ ແລະ ຄວາມຮັບຮູ້ຂອງໂລກທີ່ມີຕໍ່ວັດທະນະທຳຈີນເທົ່ານັ້ນ,ຍັງເປັນສິ່ງຢັ້ງຢືນເຖິງວັດທະນະທຳຈີນກັບວັດທະນະທຳຫຼາກຫຼາຍຂອງໂລກຢູ່ຮ່ວມກັນຢ່າງກົມກຽວກັນ.

“ແຕ່ລະເທື່ອເມື່ອເປີດປະຕູບານໜຶ່ງ,ຫຼັງຈາກນັ້ນມີປະຕູອີກບານໜຶ່ງ,ທຸກມື້ກໍ່ຄືແນວນີ້.”ທ່ານ ເຊັດບູມ,ຜູ້ກຳກັບງານສິນລະປະເຣີຊິງໄດ້ໃຊ້ຄຳສັບ“ສະເທືອນໃຈ”ເພື່ອສະແດງຄວາມຮູ້ສຶກຂອງຕົນຕໍ່ຄວາມຫຼາກຫຼາຍ ແລະ ລັກ




"ເຫຼົ້າຂອຍຈີນ" ມີຊື່ດັ່ງໃນຮ້ານຄ້າຕະຫລາດໄທ
"中国红" 扮靓泰国商场 半 清 图

ສະນະສືບທອດດ້ານປະຫວັດສາດຂອງວັດທະນະທຳຈີນ.

ທ່ານກາບລາ, ຫົວໜ້າສະຖາບັນຄົ້ນຄວ້າຈີນ ແລະ ອາຊີປາຊີຟິກເປຊີນກ່າວວ່າ,ຈີນເປັນປະເທດທີ່ມີມູນເຊື້ອແລກປ່ຽນກັບຄວາມສີວິໄລອື່ນໆມາແຕ່ບູຮານ,ເປັນແບບຢ່າງສຳລັບໂລກປະຈຸບັນ ແລະ ອະນາຄົດ,ໄດ້ສະແດງຕໍ່ຊາວໂລກວ່າ,ຄວາມສີວິໄລທີ່ຕ່າງກັນສາມາດຢູ່ຮ່ວມກັນຢ່າງກົມກຽວໂດຍຜ່ານການແລກປ່ຽນ.

ເມື່ອ ຊາ ພົບກັບ ກາເຟ

ວັດທະນະທຳ"ເຫີ(ແປວ່າກົມກຽວ)"ຝັງເລິກຢູ່ໃນນ້ຳໃຈຂອງປະຊາຊາດຈີນ,ເຮັດໃຫ້ວັດທະນະທຳຈີນກ້າວສູ່ພາຍນອກຢ່າງຕັ້ງໜ້າ,ມີການຕອບຮັບທີ່ດີກັບໂລກ:

-ປີ 2014,ຈີນກັບອົງການຈັດຕັ້ງພາກພື້ນໄດ້ຈັດປີແລກປ່ຽນວັດທະນະທຳຈີນ-ອາຊຽນຄັ້ງທຳອິດ,ໂດຍຜ່ານ 100 ກວ່າກິດຈະກຳເພື່ອວາງສະແດງໝາກຜົນອັນຈົບງາມໃນການແລກປ່ຽນ ແລະ ການຮ່ວມມືດ້ານວັດທະນະທຳລະຫວ່າງຈີນກັບປະເທດອາຊຽນ;

-ປີ 2015,ງານດົນຕີເສບພື້ນເມືອງຈີນພາຍໃຕ້ຫົວຂໍ້"ຕັ້ງໃຈຟັງສຽງຈີນ"ໄດ້ເປີດສາກໃຫ້ແກ່ກິດຈະກຳປີແລກປ່ຽນວັດທະນະທຳຈີນ-ການາດາ;

-ປີ 2015,ໃນໄລຍະຢ້ຽມຢາມຈີນ,ເຈົ້າຊາຍວິລຽມຂອງອັງກິດໄດ້ຈຳຕາໃຫ້ແກ່ຮູບປັ້ນ"ແກະນ້ອຍໂຊນ"ດ້ວຍບົກຟອຍ,ເປີດລະດູວັດທະນະທຳອັງກິດໃນກິດຈະກຳປີແລກປ່ຽນວັດທະນະທຳຈີນ-ອັງກິດ.

ຄວາມແຕກຕ່າງກັນລະຫວ່າງວັດທະນະທຳຈີນກັບຕ່າງປະເທດ,ເໝືອນດັ່ງຊາກັບກາເຟ,ຕ່າງກໍ່ມີຈຸດດີຂອງຕົນ,ມີຄວາມແຕກຕ່າງແຕ່ຢູ່ຮ່ວມກັນຢ່າງກົມກຽວ.ເມື່ອວັດທະນະທຳຈີນກ້າວສູ່ພາຍນອກ,ເມື່ອຊາພົບກັບກາເຟ,ໄດ້ແຕ້ມຮູບອັນດີງາມທີ່ວັດທະນະທຳ ແລະ ຄວາມສີວິໄລທີ່ແຕກຕ່າງກັນໃນໂລກຕ່າງກໍ່ເປັ່ງແສງປະກາຍຂອງໃຜລາວ ແລະ ຢູ່ຮ່ວມກັນຢ່າງກົມກຽວກັນ.

ທ່ານ ກາຕາລິນ ໂບໂຈອີ, ອະດີດປະທານກອງປະຊຸມອົງການຢູເນັສໂກເຫັນວ່າ,ຈີນເນັ້ນໜັກເຖິງການອະນຸລັກ ແລະ ເຄົາລົບຄວາມຫຼາກຫຼາຍຂອງຄວາມສີວິໄລ,ນີ້ມີຄວາມສຳຄັນຫຼາຍ.ການສົນທະນາລະຫວ່າງຄວາມສີວິໄລ ແລະ ວັດທະນະທຳທີ່ຕ່າງກັນແມ່ນເຄື່ອງມືທີ່ດີສຳລັບການລົບລ້າງຄວາມເຂົ້າໃຈຜິດຕໍ່ກັນ.

ເມື່ອ"ກຳປັ່ນຈີນ"ເດີນທາງຜ່ານທະເລແຫ່ງຈິດໃຈ

ຈາກນູແອນເຊລັງທີ່ຕາເວັນອອກກ່ອນໝູ່,ຮອດຣາວາຍທີ່ຕາເວັນຕົກຊ້າສຸດ,ສະຖາບັນຂົງຈື້ທີ່ສ້າງຂຶ້ນໃນຂອບເຂດທົ່ວໂລກ,ເຮັດໃຫ້ໂລກສຳຜັດກັບວັດທະນະທຳຈີນຢ່າງໃກ້ຊິດ.ໂດຍໃຊ້ພາສາເປັນສື່ກາງ,ວັດທະນະທຳເປັນຂົວຕິດຕໍ່,ສະຖາບັນຂົງຈື້ໄດ້ກາຍເປັນຍີ່ຫໍ້ຊື່ດັງສຳລັບການແລກປ່ຽນດ້ານວັດທະນະທຳລະຫວ່າງຈີນກັບໂລກ.

ທ່ານ ລົວເມີຍຈູ່ນ,ຜູ້ອຳນວຍການຝ່າຍເຢຍລະມັນຂອງສະຖາບັນຂົງຈື້ມະຫາວິທະຍາໄລເສລີແບັກແລັງກ່າວວ່າ,ນັກສຶກສາຫຼາຍຄົນຂອງສະຖາບັນດັ່ງກ່າວມີຄວາມຫ້າວຫັນຫຼາຍຕໍ່ການຮຽນພາສາຈີນ,ແລະ ຢາກຮູ້ຈັກຮູ້ກ່ຽວກັບຈີນ,"ມີນັກສຶກສາຄົນໜຶ່ງຈົນກະທັ້ງຂັບລົດຕັ້ງເປັນ 70 ກິໂລແມັດເພື່ອມາຮຽນພາສາຈີນ."

ຄົນຕ່າງປະເທດຈຳນວນໜຶ່ງໄດ້ກາຍເປັນທູດເຜີຍແຜ່ວັດທະນະທຳຈີນ.ຣາບີບາລາຮຽນຢູ່ຈີນ,ຫຼັງຈາກຮຽນຈົບແລ້ວໄດ້ນຳເອົາຢາພື້ນເມືອງຈີນເມືອປາເລັສຕິນເພື່ອປິ່ນປົວຄົນເຈັບ.ພໍ່ເຖົ້າຕາວາເລັສຂອງເປຊີນໄດ້ຕັ້ງໃຈຄົ້ນຄວ້າປະເທດຈີນ,ໄດ້ຂຽນປຶ້ມ 8 ເຫຼັ້ມ ແລະ ບົດຄວາມ 500 ກວ່າບົດກ່ຽວກັບຈີນ,ແລະ ກ່າວປາຖະກະຖາຫຼາຍຮ້ອຍຄັ້ງກ່ຽວກັບຈີນ,ເຮັດໃຫ້ຄົນເປຊີນຮັບຮູ້ກ່ຽວກັບຈີນ ແລະ ເຂົ້າໃກ້ຊິດກັບຈີນ.

"ຄົບຄ້າດ້ວຍຄວາມຈິງໃຈ,ຈຶ່ງສາມາດດຳເນີນໄປເປັນເວລາດົນນານ".ເມື່ອຫຼາຍຮ້ອຍປີກ່ອນ,ກຳປັ່ນຂອງຈີນທີ່ເຕັມໄປດ້ວຍຜ້າໄໝ ແລະ ເຄື່ອງປັ້ນດິນເຜົາໄດ້ຜ່ານຄື້ນນ້ຳສີຂຽວ,ຫວ່ານໄມແຫ່ງມິດຕະພາບ.ໃນທົດສະວັດທີ 2 ຂອງສະຕະວັດທີ 21,ກຳປັ່ນວັດທະນະທຳຈີນທີ່ຖືຫັດສະນະເຄົາລົບ ແລະ ໄວ້ເນື້ອເຊື່ອໃຈກັນ,ເຕົ້າໂຮມຄວາມເຫັນທີ່ຄືກັນ,ສະຫງວນຄວາມເຫັນທີ່ແຕກຕ່າງກັນ,ຕ່າງຝ່າຍຕ່າງມີຜົນປະໂຫຍດນັ້ນຈະເດີນທາງໄປທາງໄກ,ຮ່ວມກັບໂລກບັນເລງສຽງດົນຕີຢ່າງຈົບງາມ.




ວັນທີ 28 ເດືອນ 5,ມີຜູ້ຊົມໜຶ່ງຊົມເບິ່ງງານວາງສະແດງຮູບພາບ《ຫວນຄືນນຳກັນະ ເລື່ອງບັນທຶກແທ້ຈິງລະຫວ່າງ□ຈີນ-ອາເມລິກາຮ່ວມກັນໃນສົງຄາມຕໍ່ຕານ》
5 月 28 日，在美国纽约，一名观众欣赏《共同的记忆：中美抗战纪实》图片展
新华社 图

图 / 新华社

# "ໜຶ່ງແລວທາງ ໜຶ່ງເສັ້ນທາງ" ສ້າງໂອກາດ ທີ່ດີສຳລັບວິສາຫະກິດຈີນທີ່ "ກ້າວສູ່ພາຍນອກ"

## “一带一路”中国企业“走出去”好契机

“第四届全球智库峰会”2015年6月26–27日在北京举办。来自世界各国的数百名专家学者、智库代表围绕“全球可持续发展：2015年后的新路径”这一主题进行探讨。与会者认为，随着全球经济的联系的日益紧密，“一带一路”的建设推进和区域的互联互通，国际产能合作的逐步升温，世界各国与中国的合作意愿不断加强，中国企业迎来了“走出去”好契机。

ວັນທີ 26-27 ມິຖຸນາ ປີ 2015,“ກອງປະຊຸມສຸດຍອດຄັງປັນຍາໂລກຄັ້ງທີ 4”ຈັດຂຶ້ນຢູ່ນະຄອນຫຼວງປັກກິ່ງ,ຊ່ຽວຊານ ແລະ ຜູ້ຕາງໜ້າຄັງປັນຍາຫຼາຍຮ້ອຍທ່ານຈາກປະເທດຕ່າງໆໃນໂລກ,ໄດ້ປຶກສາຫາລືກັນໂດຍປິ່ນອ້ອມຫົວຂໍ້ຫຼັກທີ່ວ່າ“ການພັດທະນາແບບຍືນຍົງຂອງໂລກ: ຊ່ອງທາງໃໝ່ຫຼັງປີ 2015”.

ທ່ານ ເຈີ້ງຈີ່ເຈ,ຜູ້ວ່າການທະນາຄານພັດທະນາແຫ່ງຊາດຈີນກ່າວວ່າ,ໃນຂະບວນການໂລກາພິວັດລົງສູ່ລວງເລິກ,ຄວນເລັ່ງລັດປັບປຸງລະບຽບການດ້ານການຄ້າສາກົນ,ການລົງທຶນສາກົນ ແລະ ເສດຖະກິດ ແລະ ການທະນາຄານສາກົນ,“ການນຳເຂົ້າ”ໃນລະດັບສູງ ແລະ “ກ້າວສູ່ພາຍນອກ”ດ້ວຍຂະໜາດໃຫຍ່ນັ້ນຄວນກາຍເປັນຈຸດພິເສດອັນສຳຄັນໃນການເປີດປະຕູສູ່ພາຍນອກໃນໄລຍະໃໝ່.

ທ່ານເຫັນວ່າ,ປະຈຸບັນ, ເສດຖະກິດຈີນພວມປະເຊີນກັບໂອກາດທີ່ພັດທະນາຢ່າງວ່ອງໄວ,ແຕ່ປີ 2002 ຮອດປີ 2013,ຍອດມູນຄ່າການລົງທຶນຂອງຈີນຢູ່ຕ່າງປະເທດໄດ້ເພີ່ມຂຶ້ນ 40% ຕໍ່ປີ. ປີ 2013,ການລົງທຶນໂດຍກົງທີ່ບໍ່ແມ່ນຂົງເຂດການທະນາຄານຢູ່ຕ່າງປະເທດຂອງຈີນ.ມີເຖິງ 102,9 ຕື້ໂດລາ.ຄຽງຄູ່ກັບສາຍພົວພັນທາງເສດຖະກິດຂອງທົ່ວໂລກນັບມື້ນັບແໜ້ນແຟ້ນຍິ່ງຂຶ້ນ,ການກໍ່ສ້າງ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”,ແລະ ການເຊື່ອມຈອດກັນລະຫວ່າງພາກພື້ນ,ການຮ່ວມມືດ້ານກຳລັງການຜະລິດສາກົນນັບມື້ນັບດີຂຶ້ນ,ປະເທດຕ່າງໆໃນໂລກຈະມີຄວາມປາຖະໜາທີ່ຢາກຮ່ວມມືກັບຈີນນັບມື້ນັບຫຼາຍຂຶ້ນ.



ທະນາຄານກະສິກຳສາຂາຢູນນານ ແລະ ທະນາຄານໄທໄດ້ລົງເຊັນສັນຍາການຮ່ວມມືທີ່ຄຸນໝິງ
农行云南省分行与泰国银行在昆明签署合作协议



“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ແມ່ນຍຸດທະສາດລະດັບຊາດຂອງຈີນ,ກໍ່ມີສ່ວນຮ່ວມຂອງທົ່ວໂລກ,ພົວພັນເຖິງປະຊາກອນ 40% ຂອງໂລກ,ແລະ 50 ກວ່າປະເທດ.ບັນດາປະເທດແມ່ນປະຊາຄົມຮ່ວມຜົນປະໂຫຍດ,ກໍ່ແມ່ນປະຊາຄົມຮ່ວມຊະຕາກຳ.ໃນຂະບວນການກໍ່ສ້າງ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”,ວິສາຫະກິດໄດ້ແບກຫາບໜ້າທີ່ແນວໃດ.

ທ່ານ ເສິນຢັ໋ງເຈີ້ງ,ຜູ້ອຳນວຍການໃຫຍ່ຂອງບໍລິສັດໂທລະຄົມມະນາຄົມສາກົນອິສຕຼາລີກ່າວວ່າ,ຂ້າພະເຈົ້າເອງຄິດວ່າ,ໃຊ້ຄວາມເວົ້າຂອງຄົນຈີນວ່າ,ເປັນເລື່ອງທີ່ສອດຄ່ອງກັບທ່າອ່ຽງ,ສ້າງທ່າອ່ຽງ ແລະ ສວຍໃຊ້ທ່າອ່ຽງ.ຈີນກັບປະເທດອື່ນໆຮ່ວມກັນລົງທຶນ,ວິສາຫະກິດ ແລະ ປະເທດທີ່ຢູ່ໃນຂອບເຂດ ”ໜຶ່ງແລວທາງ ໜຶ່ງເສັ້ນທາງ”ນັ້ນຈະໄດ້ຮັບການພັດທະນາຢ່າງຫຼວງຫຼາຍ. ໂດຍໄປຕາມທ່າອ່ຽງດັ່ງກ່າວ,ວິສາຫະກິດປະເພດຕ່າງໆລ້ວນແຕ່ຈະໄດ້ຮັບກາລະໂອກາດແຫ່ງການພັດທະນາ.

ທ່ານ ວາງຊວນລິນ ຂອງກົມທີ 4 ກຸ່ມບໍລິສັດທາງລົດໄຟຈີນທີ່ເປັນຜູ້ເຂົ້າຮ່ວມອັນສຳຄັນຂອງ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ນັ້ນກ່າວວ່າ,ກົມທີ 4 ກຸ່ມບໍລິສັດທາງລົດໄຟຈີນເປັນວິສາຫະກິດສັງຄົມ,ສະນັ້ນ,ເທື່ອນີ້ລັດຖະບານສະເໜີຍຸດທະສາດ “ໜຶ່ງແລວທາງ ໜຶ່ງເສັ້ນທາງ”ແມ່ນໂອກາດທີ່ດີສຳລັບບໍລິສັດພວກຂ້າພະເຈົ້າກ້າວສູ່ພາຍນອກ.ເວົ້າສຳລັບບັນດາປະເທດຢູ່ຕາມ“ໜຶ່ງແລວທາງ ໜຶ່ງເສັ້ນທາງ”ແລ້ວ,ການບັນລຸການພັດທະນາແບບຍືນຍົງກໍ່ແມ່ນໂອກາດທີ່ດີ.ທີ່ຈິງແລ້ວ,ຂ້າພະເຈົ້າເຫັນວ່າ, ແມ່ນແບ່ງປັນບົດຮຽນ ແລະ ໝາກຜົນແຫ່ງການປະຕິຮູບ ແລະ ການເປີດປະຕູສູ່ພາຍນອກຂອງຈີນໃນໄລຍະ 30 ປີຜ່ານມານັ້ນກັບບັນດາປະເທດໃນໂລກ.



"ໝາຍເລກທຽນມ້າ "ຕູ້ລົດໄຟບັນທຸກສິນຄ້າສາກົນລະຫວ່າງ□ຈີນ-ເອີຣົບຄັ້□ປະຖົມມະລຶກເລີ່ມອອກຈາກຄິວລົດໃຕ້ສະຖານີລົດໄຟການຊູຈີນໄປຫາອາລາມູທູກາຊັກສະຖານ
由中国甘肃发往哈萨克斯坦阿拉木图的首趟中欧国际货运班列“天马号”从甘肃武威南车站始发

ທ່ານ ວາງຊວນລິນ ກ່າວເນັ້ນວ່າ,ໃນຂະບວນການກ້າວສູ່ພາຍນອກນັ້ນ,ບໍ່ຄວນໄປນຳຜູ້ອື່ນຢ່າງປິດຫູປິດຕາ,ຄວນສຳຫຼວດຄົ້ນຄວ້າໃຫ້ຈະແຈ້ງແລ້ວຈຶ່ງກ້າວສູ່ພາຍນອກ,ຄວນຖອດຖອນບົດຮຽນນຳ 500 ບໍລິສັດເຂັ້ມແຂງຂອງໂລກທີ່ຈັດສັນຊັບພະຍາກອນໃນຂອບເຂດທົ່ວໂລກ.

ທ່ານ ເສິນຢັ໋ງເຈີ້ງ ສະເໜີວ່າ,ວິສາຫະກິດຂ້າມຊາດກ່ອນອື່ນຕ້ອງກຳນົດຍຸດທະສາດໃນລະດັບທົ່ວໂລກ, ແລະ ວາງແຜນຕາມຍຸດທະສາດດັ່ງກ່າວ.

ທ່ານ ປາງປວນຊີ໋ງ,ຫົວໜ້າຜູ້ບໍລິຫານງານຂອງສະຖາບັນຄົ້ນຄວ້າຍຸດໂທບາຍ ແລະ ການນຳພາອາຊີ

ຂອງມະເລເຊຍໄດ້ວິເຄາະຫົວຂໍ້ດັ່ງກ່າວຈາກສາຍຕາຂອງຄັງປັນຍາມະເລເຊຍ.ທ່ານເຫັນວ່າ,ກ່ອນອື່ນຄວນດຳເນີນການສຳຫຼວດການຕະຫຼາດໃຫ້ດີ,ຄວນຮັບຮູ້ຕະຫຼາດທີ່ຈະລົງທຶນໃສ່,ດັ່ງນັ້ນຈຶ່ງສາມາດຊອກຫາຄູ່ຮ່ວມມື,ພ້ອມກັນນັ້ນການຈັດວາງແຜນການຍຸດທະສາດກໍ່ມີຄວາມຈຳເປັນ.

ໃນເວລາຕອບຄຳຖາມກ່ຽວກັບວິສາຫະກິດຮົງກົງເຮັດແນວໃດຈຶ່ງສາມາດດຳເນີນພຶດຕິກຳຫັນເປັນສາກົນໃຫ້ດີນັ້ນ,ທ່ານ ເສີນຈິ່ງເວີຍ ທີ່ມາຈາກຮົງກົງຈີນກ່າວວ່າ,ໃນຂະບວນການລິເລີ່ມ ແລະ ກໍ່ສ້າງ"ໜຶ່ງແລວທາງ ໜຶ່ງເສັ້ນທາງ"ນັ້ນ,ຄວນເສີມຂະຫຍາຍບົດບາດຂົວຕິດຕໍ່ຂອງຮົງກົງ.ຊຸກຍູ້ດ້ວຍພະລັງແຮງຂອງຕະຫຼາດ,ໂດຍສະເພາະແມ່ນເສີມຂະຫຍາຍບົດບາດຂອງຈີນຕ່າງດ້າວ ແລະ ເຊື້ອສາຍຈີນຢູ່ຕ່າງປະເທດ.ເພາະວ່າຈີນຕ່າງດ້າວ ແລະ ເຊື້ອສາຍຈີນຮັບຮູ້ສະພາບການຂອງທ້ອງຖິ່ນທີ່ເຂົາເຈົ້າຢູ່ນັ້ນເປັນຢ່າງດີ,ແລະ ມີສາຍພົວພັນທີ່ດີກວ່າອົງການປົກຄອງ,ວິສາຫະກິດ,ວົງການການເມືອງ ແລະ ການຄ້າຂອງທ້ອງຖິ່ນແຫ່ງນັ້ນ.ປັບປຸງໃຫ້ເປັນພື້ນຖານນີ້ອັນໜັກແໜ້ນ,ແລະ ຈະເພີ່ມຄວາມໄວ້ເນື້ອເຊື່ອໃຈກັນລະຫວ່າງລັດຖະບານ.ໃນດ້ານນີ້,ຄວນເສີມຂະຫຍາຍບົດບາດຂອງສະພາການຄ້າ ແລະ ຄັງປັນຍາ,ເພື່ອຊ່ວຍເຫຼືອຊຸກຍູ້ແຜນການ"ໜຶ່ງແລວທາງ ໜຶ່ງເສັ້ນທາງ".ຂ້າພະເຈົ້າຫວັງວ່າຜ່ານຈາກຍຸດທະສາດ"ໜຶ່ງແລວທາງ ໜຶ່ງເສັ້ນທາງ", ຈະເພີ່ມທະວີການພົວພັນລະຫວ່າງປະເທດຕ່າງໆ,ພ້ອມທັງເພີ່ມທະວີການສະໜອງພະລັງງານ.

ຍຸດທະສາດ"ໜຶ່ງແລວທາງໜຶ່ງເສັ້ນທາງ"ພົວພັນເຖິງ 53 ປະເທດ ແລະ 94 ຕົວເມືອງເຊິ່ງມີຈຸດພິເສດອັນສັບສົນຂອງພາກພື້ນຕ່າງໆ,ວັດທະນະທຳຕ່າງໆ ແລະ ດ້ານອື່ນໆ. ວິສາຫະກິດຄວນນຳໃຊ້ພະລັງແຮງຂອງຕົນແນວໃດເພື່ອບັນລຸການພັດທະນາແບບຍືນຍົງຂອງທົ່ວສັງຄົມ? ທ່ານຈ່າງສ້ຽວຊຽງ,ຜູ້ອຳນວຍການໃຫຍ່ປະຈຳການຂອງສູນແລກປ່ຽນເສດຖະກິດສາກົນຈີນ,ຫົວໜ້າກົມປະຕິບັດງານກ່າວເພີ່ມເຕີມວ່າ,ຄວາມຕ້ອງການຂອງຕະຫຼາດຈະຊຸກຍູ້ໃຫ້ວິສາຫະກິດ ແລະ ຜະລິດຕະພັນຍົກລະດັບໃຫ້ສູງຂຶ້ນໃນທາງດ້ານເຕັກໂນໂລຊີອຸປະກອນ,ການຜະລິດ,ຄຸນນະພາບຂອງຜະລິດຕະພັນ ແລະ ອື່ນໆ,ຄວາມເຄັ່ງຕຶງຂອງສະພາບແວດລ້ອມດ້ານພະລັງງານກໍ່ຈະເຮັດໃຫ້ວິສາຫະກິດອັນສຳຄັນໃນຕະຫຼາດໃຫ້ຄວາມສຳຄັນຫຼາຍກວ່າເກົ່າຕໍ່ການນຳໃຊ້ວິທະຍາສາດເຕັກໂນໂລຊີທີ່ກ້າວໜ້າເພື່ອບັນລຸການພັດທະນາຂອງຕົນ.



ຂ່າວວິທະຍຸສາກົນກາຊັກສະຖານະ ຍູ້ແຮງ "1 ແລວທາງ 1 ເສັ້ນທາງ" ສະທ້ອນໃຫ້ເຫັນພະລັງຂອງຈີນ
哈电国际：发力"一带一路"彰显中国"动力"




# ບໍລິສັດລາວເຈແລ່ມເຈົ້າຈຳກັດ

老挝成捷企业有限公司







ທ່ານ ຮວງ ຈິນພູ ປະທານບໍລິສັດ
黄金浦 董事长

昆明门市部：昆明市白龙路世博大道387号
豪都家具三楼
电话：13759179402
老挝厂址：老挝万象市塔德路八公里处
电话：856-21-314880
856-20-55763908
传真：856-21-314882

ທີ່ຢູ່:ຫຼັກ 8 ຖະໜົນທ່າເດື່ອນະຄອນຫຼວງວຽງຈັນ
ເບີໂທ: 856-21-314880
ມືຖື: 856-20-55763908
ແຟກ: 856-21-314882











文 / 楚 然 图 / 新华社

# ທ່າທຽນສິນ

## 天津港

位于京津城市带和环渤海经济圈的交汇点上的天津港，被人们誉为“渤海湾里的一颗明珠”。它是中国北方对外开放的门户，连通海上和陆上两个“丝绸之路”的重要节点，是连接东北亚与中西亚的纽带。



ທ່າທຽນສິນຕັ້ງຢູ່ຈຸດເຊື່ອມຈອດກັນລະຫວ່າງແຖບຕົວເມືອງປັກກິ່ງ-ທຽນສິນ ແລະ ວົງເສດຖະກິດຮອບທະເລໂປໄຫ,ໄດ້ຖືກເອີ້ນວ່າ “ມຸກໄສໃນອ່າວທະເລໂປໄຫ”, ແມ່ນທາງອອກທີ່ພາກເໜືອຂອງຈີນເປີດປະຕູສູ່ພາຍນອກ,ດ່ານການຄ້າກັບຕ່າງປະເທດໃຫຍ່ທີ 2 ຂອງຈີນ, ເປັນສະຖານທີ່ສຳຄັນທີ່ເຊື່ອມຕໍ່ເສັ້ນທາງສາຍໄໝທາງບົກ ແລະ ທາງທະເລ,ກໍ່ແມ່ນບ່ອນເຊື່ອມຕໍ່ອາຊີຕາເວັນອອກສຽງເໜືອກັບອາຊີກາງ ແລະ ອາຊີຕາເວັນຕົກ.

ທ່າທຽນສິນແມ່ນທ່ານ້ຳເລິກທຽມທີ່ມີລະດັບສູງສຸດໃນໂລກ,ປະຈຸບັນ,ຄວາມເລິກຂອງທາງນ້ຳຫຼັກມີເຖິງ 22.0 ແມັດ,ກຳປັ່ນຂະໜາດ 3 ແສນໂຕນສາມາດເຂົ້າອອກທ່າຕາມຄື້ນກະແສ.ປີ 2013,ທາງເດີນເຮືອແບບຫຼາຍເລັນຢູ່ທ່າທຽນສິນໄດ້ທົດລອງເປີດບໍລິການ,ຄວາມສາມາດຂອງທາງເດີນເຮືອໄດ້ຍົກລະດັບໃຫ້ສູງຂຶ້ນບົນພື້ນຖານການເດີນເຮືອສອງທິດ.ທ່າທຽນສິນກໍ່ແມ່ນທ່າສັງລວມໃຫຍ່ທີ່ສຸດຢູ່ພາກເໜືອຂອງຈີນ,ກວມເນື້ອທີ່ທາງບົກ 132 ກິໂລຕາແມັດ,ມີບ່ອນຈອດປະເພດຕ່າງໆລວມ 160 ບ່ອນ,ໃນນັ້ນ,ບ່ອນຈອດທີ່ມີລະດັບໝື່ນໂຕນຂຶ້ນໄປ 103 ບ່ອນ.

ປະຈຸບັນ,ທ່າທຽນສິນປະກອບດ້ວຍຫຼາຍພາກສ່ວນ, ເຊັ່ນ,ເຂດທ່າເປີຍຈ່ຽງ,ເຂດທ່ານານຈ່ຽງ,ເຂດທ່າຕົ່ງຈ່ຽງ,ພາກໃຕ້ຂອງເຂດເສດຖະກິດລິນກາງ,ພາກຕາເວັນອອກຂອງເຂດທ່າຕ້າກາງ ແລະ ອື່ນໆ.ເຂດທ່າເປີຍຈ່ຽງມີບໍລິການຂົນຖ່າຍຕູ້ຄອນເທັນເນີ ແລະ ສິນຄ້າຂະໜາດນ້ອຍເປັນຫຼັກ;ເຂດທ່ານານຈ່ຽງມີບໍລິການຂົນຖ່າຍສິນຄ້າຍ່ອຍປະເພດແຫ້ງ ແລະ ປະເພດນ້ຳເປັນຕົ້ນຕໍ; ເຂດທ່າຕົ່ງຈ່ຽງມີບໍລິການຂົນຖ່າຍຕູ້ຄອນເທັນເນີ,ການຂົນສົ່ງໂດຍກຳປັ່ນສາກົນ,ການຈໍລະຈອນສິນຄ້າສາກົນ, ການຄ້າສາກົນ,ການທະນາຄານອອກທ່າເປັນຕົ້ນຕໍ,ພາກຕາເວັນຕົກຂອງເຂດທ່າຕົ່ງຈ່ຽງພວມປັບປຸງບໍລິການທີ່ຄົບຊຸດສຳລັບຕົວເມືອງ; ພາກໃຕ້ເຂດເສດຖະກິດລິນກາງຖືການຂົນຖ່າຍສີຄ້າ,ຈໍລະຈອນສິນຄ້າແບບສັງລວມ,ການຜະລິດເຄື່ອງຈັກ,ການປຸງແຕ່ງອຸດສາຫະກຳເບົາ,ສະບຽງອາຫານ,ນ້ຳມັນ ແລະ ອາຫານ,ຂະແໜງພະລັງງານ,ແລະ ຂະແໜງການຢຸກຢາເປັນທິດທາງພັດທະນາອັນຕົ້ນຕໍ; ພາກຕາເວັນອອກເຂດທ່າຕ້າກາງເປັນເຂດທ່າໃໝ່ທີ່ຖືການຂົນຖ່າຍຖ່ານຫີນ,ຫີນແຮ່ ແລະ ສິນຄ້າງວດໃຫຍ່ຊະນິດອື່ນໆເປັນຕົ້ນຕໍ.

ທ່າທຽນສິນມີການພົວພັນກັບພາຍນອກຢ່າງກວ້າງຂວາງ,ມີສາຍພົວພັນດ້ານການຄ້າກັບທ່າກຳປັ່ນ 500 ກວ່າແຫ່ງຂອງ 180 ກວ່າປະເທດ ແລະ ເຂດແຄວ້ນໃນທົ່ວໂລກ,ແຕ່ລະເດືອນມີຖ້ຽວກຳປັ່ນ 500 ກວ່າຖ້ຽວທີ່ໄປສູ່ທ່າກຳປັ່ນແຫ່ງຕ່າງໆຂອງໂລກໂດຍກົງ.

ໃນຖານະເປັນທ່າກຳປັ່ນທີ່ມີສະມັດຖະພາບຢ່າງຄົບຖ້ວນທີ່ສຸດຢູ່ເຂດແຄມທະເລຂອງຈີນ,ທ່າທຽນສິນບ່ອນຈອດທີ່ຈັດແບ່ງຕາມບົດບາດສະເພາະ,ເຊັ່ນ,ຕູ້ຄອນເທັນເນີ,ຫີນແຮ່,ຖ່ານຫີນ,ນ້ຳມັນດິບກໍ່ຄືຜະລິດຕະພັນສຳຮອງ, ເຫຼັກກ້າ,ເຄື່ອງຈັກຂະໜາດໃຫຍ່,ລົດບັນທຸກສິນຄ້າ,ອາຍແກັດທຳມະຊາດທາດແຫຼວ,ສະບຽງອາຫານ,ກຳປັ່ນໂດຍສານສາກົນ,ແລະ ອື່ນໆ.

ທ່າທຽນສິນມີການບໍລິການຢ່າງຄົບຖ້ວນ,ທັງສາມາດຊຸກຍູ້ການພັດທະນາຂອງເຂດອ້ອມຂ້າງ,ແມ່ນທ່າກຳປັ່ນພຽງແຫ່ງດຽວຂອງຈີນທີ່ມີທາງຜ່ານ 3 ສາຍທີ່ເຊື່ອມຈອດອາຊີກັບເອີລົບ;ສູນບໍລິການການຄ້າ ແລະ ການເດີນກຳປັ່ນສາກົນທຽນສິນທີ່ໄດ້ສ້າງສຳເລັດແລ້ວນັ້ນໜຶ່ງໃນສູນບໍລິການການເດີນກຳປັ່ນແບບປະຕູດຽວທີ່ມີຂະໜາດໃຫຍ່ທີ່ສຸດຂອງຈີນໃນປະຈຸບັນ;ໄດ້ປະຕິບັດຮູບການຜ່ານດ່ານແບບ“ແຈ້ງເທື່ອດຽວ,ກວດເທື່ອດຽວ, ປ່ອຍຜ່ານດ່ານເທື່ອດຽວ”,ສະພາບແວດລ້ອມແຫ່ງການຜ່ານດ່ານໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ; 5 ສູນທຸລະກິດພາກພື້ນ,23“ທ່າແບບບໍ່ມີນ້ຳ”ແລະ ສູນຈໍລະຈອນສິນຄ້າທີ່ສ້າງຕັ້ງຢູ່ເຂດໃນ,ໄດ້ບູລະນະລະບົບເຄືອຂ່າຍຈໍລະຈອນສິນຄ້າທີ່ປົກຫຸ້ມເຂດໃນຈີນ.

# ວິສາຫະກິດຈີນຄ້ຳຊູພາບພົດທີ່ດີຂອງສິນຄ້າຍີ່ຫໍ້ຈີນ

## 中国企业托起品牌群像

从廉价的加工产品，到高精尖的装备制造业；从初级产品和半成品，到风驰电掣的高铁；从以价取胜的初级阶段，到推向全球的“中国标准”……30 多年过去，逐步走向海外的中国企业和中国品牌，在不断书写着自己的中国故事。

ຈາກຜະລິດຕະພັນປຸງແຕ່ງທີ່ລາຄາຖືກ,ຮອດຂະແໜງການຜະລິດເຄື່ອງຈັກທີ່ໃຊ້ເຕັກນິກສູງ; ຈາກຜະລິດຕະພັນເບື້ອງຕົ້ນ ແລະ ເຄິ່ງສຳເລັດຮູບ,ຮອດລົດໄຟຄວາມໄວສູງ; ຈາກໄລຍະເບື້ອງຕົ້ນທີ່ໃຊ້ທ່າແຮງດ້ານລາຄາຖືກ,ຮອດ “ມາດຕະຖານຈີນ”ທີ່ແຜ່ຂະຫຍາຍໄປສູ່ທົ່ວໂລກ... 30 ກວ່າປີຜ່ານໄປ,ວິສາຫະກິດຈີນ ແລະ ຍີ່ຫໍ້ຈີນທີ່ກ້າວສູ່ຕ່າງປະເທດເທື່ອລະກ້າວ,ພວມບັນທຶກນິທານຈີນຂອງຕົນຢ່າງບໍ່ຢຸດຢັ້ງ.

ຍຶດຖືຄຸນນະພາບເປັນຊີວິດຂອງວິສາຫະກິດ

ເມື່ອເວົ້າເຖິງວິສາຫະກິດຈີນໃຫ້ຄວາມສຳຄັນຕໍ່ຄຸນນະພາບ,ເລື່ອງທີ່ມີຊື່ສຽງທີ່ສຸດກໍ່ແມ່ນ“ໄຫເອີທຸບຕູ້ເຢັນ”. ປີ 1985,ຫຼັງຈາກເກັບຄືນຕູ້ເຢັນ 70 ກວ່າໜ່ວຍທີ່ຜູ້ບໍລິໂພກລາຍງານວ່າມີບັນຫາດ້ານຄຸນນະພາບແລ້ວ,ທ່ານຈ່າງຣຸ່ຍມິນທີ່ເປັນຜູ້ອຳນວຍການໂຮງງານໄຫເອີໃນເວລານັ້ນກໍ່ສັ່ງໃຫ້ທຸບມ້າງຕູ້ເຢັນເຫຼົ່ານີ້,ແລະ ກ່າວວ່າ“ຜະລິດຕະພັນທີ່ມີຂໍ້ບົກຜ່ອງກໍ່ແມ່ນຜະລິດຕະພັນທີ່ບໍ່ໄດ້ມາດຕະຖານ”. ຈາກໂຮງງານຂະໜາດນ້ອຍຂອງທ້ອງຖິ່ນກາຍມາເປັນ“ກະສັດສີຂາວ”ທີ່ແຜ່ຂະຫຍາຍຢູ່ໃນທົ່ວໂລກ,ນິທານຂອງຍີ່ຫໍ້ໄຫເອີຂອງຈີນ,ໄດ້ສ່ອງແສງເຖິງວິສາຫະກິດຈີນມີຄວາມສະແຫວງຫາຕໍ່ຄຸນນະພາບສູງຢ່າງບໍ່ລົດລະ.


ກຳມະກອນກຳລັງເຮັດວຽກຢູ່ສາຍການຜະລິດຈັກປ່ອງຢ້ຽມແອເຢັນໃນຖານທີ່ໝັ້ນຂອ□ບໍລິສັດການຜະລິດເກີລີ້(ເບຼຊິນ)ນະຄອນມະໜາວເບຼຊິນຈຳກັດ
工人在巴西玛瑙斯市的格力（巴西）有限公司生产基地的空调窗机生产线上工作 新华社 图

ບໍລິສັດຈິ່ງລຽນຈົ້ງເຄີກໍ່ມີປະສົບການທີ່ຄ້າຍຄືກັນ. ບໍລິສັດນີ້ເປັນບໍລິສັດໃຫຍ່ດ້ານເຄື່ອງຈັກວິສະວະກຳໃນປະຈຸບັນ,ເລີ່ມຫັນປ່ຽນເສັ້ນທາງການພັດທະນາໃນ 20 ກວ່າປີກ່ອນ.ປີ 1993,ປ້ຳເບຕົງລຸ້ນທຳອິດທີ່ເຂົາເຈົ້າຜະລິດນັ້ນໄດ້ຮັບຄວາມນິຍົມຊົມຊອບຈາກຕະຫຼາດ,ແຕ່ໃນປີທີ 2,ບໍລິສັດຕົກລົງຢຸດການຜະລິດ.ສາເຫດມີແຕ່ຢ່າງດຽວ,ຄື: ອີງຕາມສຽງຕອບຮັບຈາກຕະຫຼາດສະແດງໃຫ້ເຫັນວ່າ,ຜະລິດຕະພັນດັ່ງກ່າວມີຂໍ້ບົກຜ່ອງດ້ານຄຸນນະພາບ.

ບໍ່ຍອມຮັບຂໍ້ບົກຜ່ອງທີ່ມີຢູ່ໃນຜະລິດຕະພັນຂອງຕົນ, ບໍ່ສົ່ງຜະລິດຕະພັນທີ່ມີຂໍ້ບົກຜ່ອງເຂົ້າສູ່ຕະຫຼາດ.ກໍ່ແມ່ນພາຍໃຕ້ການຊຸກຍູ້ຂອງທັດສະນະແນວນີ້,ໃນເດືອນກໍລະກົດປີນັ້ນ,ບໍລິສັດຈິ່ງລຽນຈົ້ງເຄີໄດ້ຄົ້ນຄວ້າຜະລິດປ້ຳເບຕົງລຸ້ນທີ 2,ພ້ອມທັງເອົາເຄື່ອງຈັກໃໝ່ແລກປ່ຽນເຄື່ອງຈັກເກົ່າທີ່ຂາຍອອກໃນເມື່ອກ່ອນ.

20 ປີຜ່ານໄປແລ້ວຢ່າງໄວວາ,ໃນງານວາງສະແດງໂລກມີລານທີ່ຈັດຂຶ້ນໃນປີນີ້,ໃນຖານະເປັນຈັກຍົກນ້ຳໜັກຍີ່ຫໍ້ຈີນພຽງຢ່າງດຽວທີ່ຢູ່ໃນສວນວາງສະແດງໂລກນັ້ນ,ຈັກຍົກນ້ຳໜັກຂະໜາດ ZTC350 ຂອງບໍລິສັດຈິ່ງລຽນຈົ້ງເຄີໄດ້ເຮັດວຽກລຽນຕິດ 5 ເດືອນ, ໂດຍເຮັດ


ກຸ່ມບໍລິສັດຖອ□ເຢີນຖັ□ປັກກິ່□ໄດ້ເປີດສາຂາຢູ່ລອນດອນອັງກິດ
北京同仁堂集团公司在英国伦敦开设的分店 新华社 图

ວຽກຫຼາຍກວ່າ 10 ຊົ່ວໂມງຕໍ່ມື້, ແລະ ປາກົດມີຄວາມໝັ້ນທ່ຽງ,ແມ່ນຢຳ ແລະ ບໍ່ໄດ້ຕິດຂັດຈັກເທື່ອ,ໄດ້ຮັບຄວາມຍ້ອງຍໍຢ່າງຫຼວງຫຼາຍ.

ກຳເອົາເຕັກນິກໃຈກາງຢູ່ໃນກຳມືຂອງຕົນ

ບໍລິສັດລົດຍົນຊາງອ່ານເຂົ້າສູ່ຂະແໜງການລົດຍົນເລີ່ມແຕ່ປີ 1984,ປະລິມານຈຳໜ່າຍຜະລິດຕະພັນຍີ່ຫໍ້ຂອງຕົນໄດ້ເປັນອັນດັບ 1 ລຽນຕິດ 8 ປີຢູ່ຈີນ.ປະຈຸບັນ, ຍອດປະລິມານຈຳໜ່າຍລົດຍົນຍີ່ຫໍ້ຊາງອ່ານໄດ້ຫຼາຍກວ່າ 10 ລ້ານຄັນ,ຮັກສາອັນດັບ 1 ພາຍໃນວິສາຫະກິດທີ່ເປັນຍີ່ຫໍ້ຕົນຂອງປະເທດຈີນ.

ເມື່ອທວນຄືນເຖິງການພັດທະນາໃນ 30 ປີຜ່ານມາ, ຄົນຊາງອ່ານມີຄວາມຮູ້ສຶກຢ່າງເລິກເຊິ່ງວ່າ,ເຕັກນິກ

ໃຈກາງຊື້ມາບໍ່ໄດ້,ແລກມາບໍ່ໄດ້,ລອກແບບມາບໍ່ໄດ້. ບໍລິສັດລົດຍົນຊາງອ່ານໄດ້ຍຶດໝັ້ນນຳໃຊ້ 5% ຂອງມູນຄ່າຈຳໜ່າຍທຸກປີເຂົ້າໃນວຽກງານການຄົ້ນຄວ້າ,ໄດ້ສຳເລັດການທົດລອງຕຳກັນຂອງລົດໄຟຟ້າຈີນເປັນຄັ້ງທຳອິດ,ການທົດລອງຕຳກັນຄັ້ງທຳອິດຕາມມາດຕະຖານຄວາມປອດໄພ 5 ດາວໃໝ່ຂອງຈີນ, ແລະ ໄດ້ສຳເລັດການທົດລອງຕຳກັນ ແລະ ປິ່ນຕົວຕາມມາດຕະຖານອາເມລິກາເໜືອ;ເລີ່ມແຕ່ປີ 2003,ລົດຍົນຊາງອ່ານກໍ່ໄດ້ສ້າງສູນຄົ້ນຄວ້າຢູ່ນະຄອນຈຸງກິ່ງ,ນະຄອນຊຽງໄຮ,ນະຄອນຫຼວງປັກກິ່ງ,ຕູຣິນຂອງອີຕາລີ,ໂຢໂກຮະມະຂອງຍີ່ປຸ່ນ,ໂນຕິງຮາມຂອງອັງກິດ,ແລະ ເດໂຕອິດ(ດີທຼອຍ) ຂອງອາເມລິກາ,ກຳລັງດ້ານການຄົ້ນຄວ້າພັດທະນາຄອງອັນດັບ 1 ໃນຂະແໜງການລົດຍົນຂອງຈີນລຽນຕິດ 3 ຄັ້ງໃນ 6 ປີ.

ກຸ່ມບໍລິສັດໄຮເຊັນສ໌ກໍ່ມີປະສົບການແນວນີ້.ປີ 2011, ບໍລິສັດໃຫຍ່ດ້ານໂທລະທັດແຫ່ງນີ້ໄດ້ປະສົບສິ່ງທ້າທາຍອັນຂ້ຽວຂາດຈາກວິສາຫະກິດຂອງຍີ່ປຸ່ນ ແລະ ສ.ເກົາຫຼີ.ວິສາຫະກິດຍີ່ປຸ່ນ ແລະ ສ.ເກົາຫຼີໄດ້ຄົ້ນຄວ້າຜະລິດຕະພັນໜ້າຈໍ OLED,ອັນໄດ້ທົດແທນເຕັກນິກເກົ່າຂອງວິສາຫະກິດທີ່ນຳໃຊ້ຢ່າງກວ້າງຂວາງກ່ອນໜ້ານີ້,ເຮັດໃຫ້ວິສາຫະກິດຈີນປະເຊີນກັບຄວາມຫຍຸ້ງຍາກທີ່ເຄື່ອງປະກອບສຳຄັນຕ່າງໆຖືກວິສາຫະກິດຕ່າງປະເທດຄອບຄຸມໄວ້.

ເຮັດແນວໃດຈຶ່ງແກ້ໄຂໄດ້?ມີແຕ່ຄົ້ນຄວ້າເຕັກນິກຢ່າງເປັນເຈົ້າຕົນເອງ. ຄົນໄຮເຊັນສ໌ໄດ້ຕັ້ງໃຈຄົ້ນຄວ້າເຕັກນິກ,ໄດ້ຮັບສິດທິບັດເຕັກນິກ 170 ກວ່າລາຍການ, ແລະ ຄົ້ນຄວ້າໄດ້ເຕັກນິກ ULED,ໄດ້ຕອບສະໜອງຄວາມຕ້ອງການດ້ານສາຍຕາຂອງລູກຄ້າດ້ວຍຕົ້ນທຶນຕໍ່າ.ປະຈຸບັນ, ULED ໄດ້ກາຍເປັນເຕັກນິກຕົ້ນຕໍດ້ານຄຸນນະພາບຮູບພາບຂອງໂລກ. ນີ້ເປັນຂະບວນການອັນລຳບາກທີ່ຄົນໄຮເຊັນສ໌ທີ່ເລີ່ມຈາກສູນ,ແລະ ຊອກຄົ້ນຢ່າງບໍ່ລົດລະ.



ເຮືອບິນບໍ່ມີຄົນຂັບເຊິ່ງປະດິດຄິດສ້າງດ້ວຍຕົນເອງ
自主研发的无人飞机 半 清 图

ຖືເອົາວິສາຫະກິດແມ່ນຕົວແທນແກ່ພາບພົດຂອງຈີນ

ທ່ານ ບາລາມ ບາຕູລີ ກາຟາ,ຫົວໜ້າກົມທາງລົດໄຟກະຊວງຄົມມະນາຄົມນີເຊຣີກ່າວວ່າ,“ມາດຕະຖານຈີນໃນການກໍ່ສ້າງທາງລົດໄຟ,ສາມາດປຽບທຽບກັບມາດຕະຖານຂອງປະເທດທັງໝົດຂອງເອີລົບ!” ປີກາຍນີ້,ບໍລິສັດກໍ່ສ້າງທາງລົດໄຟຈີນໄດ້ຊະນະການປະມູນໂຄງການລົດໄຟແຄມທະເລຂອງນີເຊຣີ,ຍອດມູນຄ່າໂຄງການຮັບເໝົາມີເຖິງ 11 ຕື້ 970 ລ້ານໂດລາ,ບໍ່ພຽງແຕ່ສ້າງສະຖິຕິສູງສຸດຂອງມູນຄ່າສັນຍາໂຄງການດ່ຽວທີ່ບໍລິສັດຈີນຮັບເໝົາໂຄງການຢູ່ຕ່າງປະເທດເທົ່ານັ້ນ, ແລະ ໃນທົ່ວເສັ້ນທາງລົດໄຟລ້ວນແຕ່ແມ່ນນຳໃຊ້ມາດຕະຖານເຕັກນິກຂອງທາງລົດໄຟຈີນ.

ທາງລົດໄຟແບບທັນສະໄໝທີ່ຍາວທີ່ສຸດຂອງອາຟຼິກາ, ໂຄງການເຮືອນຢູ່ຂະໜາດໃຫຍ່ທີ່ສຸດຂອງຊິມບາເວ, ໂຄງການນ້ຳດື່ມຂອງປະຊາຊົນຊໍາບີ, ໂຮງໝໍດີທີ່ສຸດຢູ່ພາກພື້ນກາເລບີ,ທຸກໂຄງການທີ່ສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນທ້ອງຖິ່ນນັ້ນ,ລ້ວນແຕ່ມີສ່ວນປະກອບຂອງກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນ.

ເນື່ອງຈາກໄດ້ປະກອບສ່ວນຢ່າງພົ້ນເດັ່ນ,ທ່ານ ຊາວປາວກ່າງ,ຮອງປະທານຄະນະບໍລິຫານງານທັງເປັນຮອງເລຂາຄະນະພັກບໍລິສັດກໍ່ສ້າງຈີນ-ອາຟຼິກາທີ່ສັງກັດກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນ,ໄດ້ຮັບນາມມະຍົດ“ເຈົ້າກົກເຫຼົ່າ”ທີ່ມອບໂດຍສອງລັດຂອງນີເຊຣີ; ໃນເວລາລົດຍົນທີ່ມີກາໝາຍ“CRCC”ປາກົດຕົວຂຶ້ນ,ປະຊາຊົນນີເຊຣີກໍ່ຈະໄຊໂຍໂຮ່ຮ້ອງເພື່ອສະແດງຄວາມຍິນດີຕ້ອນຮັບ;


ເປຍອາໂນກາງຈູຈຽງກວາງໂຈວໄດ້ຈຳໜ່າຍໄປ 100 ກວ່າປະເທດ ແລະ ເຂດແຄວ້ນ,ໄດ້ກວມເອົາ 10% ຂຶ້ນໄປຂອງຕະຫລາດເອີຣົບ ແລະ ອາເມລິກາ
广州珠江钢琴销往世界 100 多个国家和地区，占有欧美市场 10% 以上的份额
新华社 图

ຢູ່ອັງໂກລາ,ເພື່ອລະນຶກສ່ວນຮ່ວມຂອງກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນເຂົ້າໃນພາລະກິດສ້າງສາຄືນໃໝ່ຫຼັງສົງຄາມຂອງອັງໂກລາ,ລັດຖະບານອັງໂກລາບັນທຶກຊື່ຂອງພະແນກທີ 20 ຂອງກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນດ້ວຍພາສາປ້ອກຕຸຍການຢູ່ສອງຟາກທາງລົດໄຟເບັນໂກລາ, ແລະ ຈະສ້າງອະນຸສາວະລີມິດຕະພາບຈີນ-ອັງໂກລາຢູ່ເຂດໃກ້ນະຄອນຫຼວງລູອັນດາເພື່ອລະນຶກກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນທີ່ປະຕິບັດໂຄງການ,ອົບຮົມນັກວິຊາການ,ສ້າງເສັ້ນທາງ,ສ້າງໂຮງຮຽນຢູ່ອັງໂກລາ,ເຮັດໃຫ້ປະຊາຊົນອາຟຼິກາສຳຜັດກັບໄມຕີຈິດມິດຕະພາບຈາກປະເທດຈີນຢ່າງແທ້ຈິງ.

ການກະທຳແນວນີ້,ກໍ່າເນີດມາຈາກອຸດົມການທີ່ໜັກແໜ້ນ; ວິສາຫະກິດທີ່ກ້າວສູ່ພາຍນອກນັ້ນ,ບໍ່ພຽງແຕ່ຄວນດຳເນີນການຮ່ວມມືດ້ານການຄ້າແບບຕ່າງຝ່າຍຕ່າງມີຜົນປະໂຫຍດເທົ່ານັ້ນ,ຍັງຄວນເປັນຕົວແທນແກ່ພາບພົດຂອງປະເທດຈີນ.

# ເຮັດໃຫ້ສີຂຽວປະດັບດິນແດນປະເທດຈີນງາມຍິ່ງຂຶ້ນ

## 让绿色扮靓中华大地

目前中国森林面积已达 2.08 亿公顷（约 30 亿亩），森林覆盖率 21.63%，森林蓄积 151.37 亿立方米。为了更加良好的生态环境，近年来，中国相继采取了一系列重大举措，一手抓天然林保护，一手抓植树造林。中华大地正如春风化雨，涌起绿色潮。

ປະຈຸບັນ,ເນື້ອທີ່ປ່າໄມ້ຈີນມີເຖິງ 208 ລ້ານເຮັກຕາ, ອັດຕາປົກຫຸ້ມຂອງປ່າໄມ້ແມ່ນ 21,63%,ປະລິມານສະສົມປ່າໄມ້ແມ່ນ 15 ຕື້ 137 ລ້ານແມັດກ້ອນ.ເພື່ອປັບປຸງສິ່ງແວດລ້ອມໃຫ້ດີຂຶ້ນກວ່າເກົ່າ,ໃນຊຸມປີມໍ່ໆມານີ້,ຈີນໄດ້ໃຊ້ມາດຕະການອັນສຳຄັນຕ່າງໆ, ໃນດ້ານໜຶ່ງອະນຸລັກປ່າທຳມະຊາດ, ອີກດ້ານໜຶ່ງປູກຕົ້ນໄມ້ໃໝ່.ດິນແດນປະເທດຈີນເໝືອນດັ່ງຫຼັງນ້ຳຝົນລະດູບານໃໝ່,ກະແສຄື້ນສີຂຽວຂະຫຍາຍກວ້າງອອກ.

ນາງຈູ່ໄຊສີນ,ເກືອບໝົດທຸກຄືນຢູ່ກົນປ່າໄມ້ຈ່ານເຫີແຂວງເຫີ່ຍໂລງຈ່ຽງລ້ອນແຕ່ຮັບຮູ້ເປັນຢ່າງດີ.ແຂວງເຫີ່ຍໂລງຈ່ຽງແມ່ນເຂດປ້ອງກັນໄຟໄໝ້ປ່າຈຸດໜັກລະດັບຊາດ.ນາງຈູ່ໄຊສີນເປັນຫົວໜ້າປະຈຳປ້ອມຕິດຕາມຊີ້ງຟູຂອງເຂດປ່າໄມ້ຈ່ານເຫີ.ນາງໄດ້ເຮັດວຽກປົກປ້ອງປ່າໄມ້ເປັນເວລາ 20 ກວ່າປີແລ້ວ,ເຄີຍມີສະຖິຕິທີ່ປະຈຳປ້ອມຕິດຕາມລຽນຕິດ 15 ວັນ.ຮັບຂໍ້ມູນ ແລະ ສົ່ງຕໍ່ຂໍ້ມູນໝື່ນກວ່າສະບັບບໍ່ເຄີຍເກີດຄວາມຜິດພາດຈັກເທື່ອ. ໂດຍຜ່ານຈາກກ້ອງສ່ອງໄກ,ນາງໄດ້ເຝົ້າຮັກສາປ່າໄມ້ຜືນນີ້ຢ່າງດຸໝັ່ນຂະຫຍາຍພຽນ.ມື້ຕໍ່ມື້,ປີຕໍ່ປີ,ນາງໄດ້ຕິດຕາມກວດກາປ່າໄມ້ຢູ່ອ້ອມຂ້າງຫຼາຍກວ່າຮ້ອຍເທື່ອຕໍ່ມື້,ມີຄວາມຮັບຮູ້ຢ່າງລະອຽດດີຕໍ່ພູຜາແມ່ນ້ຳຢູ່ໃນສາຍຕາ,ຢູ່ບ່ອນໃດເກີດມີຄວັນໄຟເພີ່ນບໍ່ເຄີຍພາດໄປຈັກເທື່ອ.

ເລື່ອງນາງຈູ່ໄຊສີນໄດ້ສະແດງໃຫ້ເຫັນສະຕິປົກປ້ອງປ່າໄມ້ຂອງນັກຕິດຕາມປ່າໄມ້ຜູ້ທຳມະດາ.ການປົກປ້ອງປ່າໄມ້ສີຂຽວ,ບໍ່ພຽງແຕ່ແມ່ນສະຕິຕື່ນຕົວຂອງປະຊາຊົນທຳມະດາເທົ່ານັ້ນ,ຍັງມີຄວາມຮັບຜິດຊອບຂອງຜູ້ນຳພັກ ແລະ ລັດຖະບານຈີນ.



ປັກກິ່ງ: ປູກສ້າງປ່າໄມ້ໃນທົ່ງພຽງເພື່ອປະດິດສ້າງນະຄອນຫຼວງສີຂຽວ
北京：平原造林打造绿色首都 新华社 图

ໃນ 3 ປີລຽນຕິດຜ່ານມາ,ຢູ່ແຄມນ້ຳຢົງຕິ້ງເຂດເຜິ່ງໄທຊານເມືອງປັກກິ່ງ,ຢູ່ສະປັບນ້ຳໜອງທອນເສີງຢູ່ເຂດໄທຕ້ຽນເຊິ່ງເປັນໂຄງການຍ້າຍນ້ຳພາກໃຕ້ມາສູ່ພາກເໜືອຈີນ,ແລະ ຢູ່ຕາແສງຊຸ່ນເຫີເຂດຊາວຢາງ, ທ່ານສີຈິ້ນຜິງ ແລະ ຜູ້ນຳພັກ,ລັດອື່ນໆໄດ້ນຳໜ້າເຂົ້າຮ່ວມການປູກຕົ້ນໄມ້,ປະຕິບັດພັນທະພົນລະເມືອງທີ່ລະບຸໄວ້ໃນກົດໝາຍ.

ທ່ານເລຂາທິການໃຫຍ່ ສີຈິ້ນຜິງ ໄດ້ເຂົ້າຮ່ວມການປູກຕົ້ນໄມ້ຂອງນະຄອນຫຼວງປັກກິ່ງ 3 ປີລຽນຕິດແລ້ວ, ແລະ ອອກຄຳຊີ້ນຳອັນສຳຄັນ.ປີ 2013,ທ່ານ ສີຈິ້ນຜິງ ຊີ້ອອກວ່າ,ຄວນດຳເນີນກິດຈະກຳປູກຕົ້ນໄມ້ຕໍ່ໄປຢ່າງສືບເນື່ອງຖາວອນ,ສ້າງເງື່ອນໄຂດ້ານລະບົບນິເວດທີ່ດີກວ່າເກົ່າໃຫ້ແກ່ຄວາມໃຝ່ຝັນຈີນທີ່ສ້າງສຳເລັດສັງຄົມອິ່ມໜຳສຳລານຢ່າງຮອບດ້ານ,ແລະ ບັນລຸການຟື້ນຊີບອັນຍິ່ງໃຫຍ່ຂອງປະຊາຊາດຈີນ. ປີ 2014, ທ່ານສີຈິ້ນຜິງ ກ່າວເນັ້ນວ່າ,ການພັດທະນາປ່າໄມ້ແມ່ນບັນຫາກົກຮາກທີ່ກ່ຽວພັນເຖິງການພັດທະນາແບບຍືນຍົງຂອງເສດ



ສຽງລະຄັງທີ່ມາຈາກປ່າ
钟声传自深林中 半 清 图



ທະນອງເຊີ່ຊີ່ຮູຕາວັນຄ່ຳຄ້ອຍທີ່ຢາງໂຈ່ວ
日暮扬州瘦西湖 半 清 图

ຖະກິດ-ສັງຄົມ.ຄວນເພີ່ມຄວາມແຮງໃນການປູກຕົ້ນໄມ້, ເປີດກວ້າງເນື້ອທີ່ຂອງປ່າໄມ້,ຍົກສູງຄຸນນະພາບຂອງປ່າໄມ້,ເສີມສ້າງບົດບາດຂອງລະບົບນິເວດ,ປົກປ້ອງສິ່ງແວດລ້ອມໃຫ້ດີ. ປີ 2015, ທ່ານ ສີຈິ້ນຜິງ ເນັ້ນໜັກຕື່ມອີກວ່າ,ການປູກຕົ້ນໄມ້ແມ່ນຊ່ອງທາງອັນສຳຄັນທີ່ເຮັດໃຫ້ຟ້າໃສ,ດິນຂຽວ ແລະ ນ້ຳສະອາດ,ແມ່ນໂຄງການປັບປຸງຊີວິດການເປັນຢູ່ທີ່ຈະສ້າງຜົນປະໂຫຍດທົ່ວໄປ.ຄວນຍຶດໝັ້ນປຸກລະດົມທົ່ວປວງຊົນເຂົ້າຮ່ວມການປູກຕົ້ນໄມ້, ພະຍາຍາມເຮັດໃຫ້ການສ້າງສາປະເທດຈີນໃຫ້ສວຍງາມໃຫ້ເປັນການເຄື່ອນໄຫວແບບເປັນເຈົ້າການຂອງປະຊາຊົນ.

ທ່ານເລຂາທິການໃຫຍ່ ສີຈິ້ນຜິງ ເອົາໃຈໃສ່ເປັນຢ່າງສູງຕໍ່ການກໍ່ສ້າງຄວາມສີວິໄລດ້ານລະບົບນິເວດ ແລະ ອອກຄຳຊີ້ນຳອັນສຳຄັນຕໍ່ວຽກງານປູກຕົ້ນໄມ້,ເໝືອນດັ່ງກະແສລົມນຳເອົານ້ຳຝົນມາໃນລະດູບານໃໝ່,ເຮັດໃຫ້ດິນແດນປະເທດຈີນມີຄື້ນກະແສສີຂຽວຂະຫຍາຍກວ້າງອອກ.

ມາດຕະການຕ່າງໆເລັ່ງລັດການປະຕິຮູບວຽກງານການປ່າໄມ້

ໃນຊຸມປີມໍ່ໆມານີ້,ຈີນໄດ້ນຳໃຊ້ມາດຕະການອັນສຳຄັນຕ່າງໆ,ໃນດ້ານໜຶ່ງອະນຸລັກປ່າໄມ້ທຳມະຊາດ,ໃນອີກດ້ານໜຶ່ງເລັ່ງລັດປູກຕົ້ນໄມ້.ຕົວຢ່າງວ່າ,ໄດ້ເລີ່ມດຳເນີນການປະຕິຮູບເຂດປ່າໄມ້ແຫ່ງລັດ; ຢຸດຕິການຕັດຟັນຕົ້ນໄມ້ທຳມະຊາດເພື່ອຈຸດປະສົງການຄ້າຢູ່ເຂດປ່າໄມ້ແຫ່ງຊາດຂອງພາກຕາເວັນອອກສ່ຽງເໜືອ ແລະ ເຂດມົງໂກໃນຈີນ,ເພື່ອປົກປ້ອງປ່າໄມ້ທຳມະຊາດຢ່າງຮອບດ້ານ; ດຳເນີນການຟື້ນຟູດິນປູກຝັງໃຫ້ເປັນປ່າໄມ້ຄືນໃໝ່, ປີ 2014 ໄດ້ສຳເລັດໜ້າທີ່ຟື້ນຟູດິນປູກຝັງໃຫ້ເປັນປ່າໄມ້ຄືນໃໝ່ເປັນເນື້ອທີ່ 3 ແສນກວ່າເຮັກຕາ,ປີ 2015, ໄດ້ກຳນົດໜ້າທີ່ຟື້ນຟູດິນປູກຝັງໃຫ້ເປັນປ່າໄມ້ 6 ແສນກວ່າເຮັກຕາ; ລົງມືກໍ່ສ້າງແຫຼ່ງຜະລິດສະສົມລຳໄມ້ທົ່ວປະເທດ,ເຊິ່ງວາດທຳອິດໄດ້ກຳນົດປ່າສະສົມລຳໄມ້ລະດັບຊາດ 1 ລ້ານເຮັກຕາ.

ພາຍໃຕ້ການຊຸກຍູ້ຂອງໂຄງການຈຸດໜັກຕ່າງໆ, ເຊັ່ນ,ໂຄງການອະນຸລັກປ່າທຳມະຊາດ,ລະບົບປ່າປ້ອງກັນຢູ່ພາກເໜືອ ແລະ ຍ່ານກາງຍ່ານໃຕ້ແມ່ນ້ຳຢາງເຊກຽງ,ໂຄງການຟື້ນຟູດິນປູກຝັງໃຫ້ເປັນປ່າໄມ້ ແລະ ທົ່ງຫຍ້າ, ແລະໂຄງການອື່ນໆ, ວຽກງານປູກຕົ້ນໄມ້ເພື່ອແຜ່ຂະຫຍາຍສີຂຽວນັ້ນໄດ້ຮັກສາການພັດທະນາຢ່າງສືບເນື່ອງ ແລະ ວ່ອງໄວ.

ທ່ານຈ້າວຊູຊົງ, ຫົວໜ້າກົມປ່າໄມ້ແຫ່ງຊາດຈີນກ່າວວ່າ,ປະເທດທີ່ສວຍງາມ,ສີຂຽວເປັນພື້ນຖານ, ມີແຕ່ສືບຕໍ່ຊຸກຍູ້ການເສີມສ້າງດິນແດນທີ່ປົກຫຸ້ມດ້ວຍພືດ,ເຊັ່ນ,ປ່າໄມ້,ດິນທາມເປັນຕົ້ນ,ເຮັດໃຫ້ດິນແດນຂອງປະເທດຊາດປົກຫຸ້ມດ້ວຍສີຂຽວ,ຈຶ່ງຈະມີພື້ນຖານແຫ່ງຄວາມສວຍງາມ,ຈຶ່ງຈະມີລະບົບນິເວດທີ່ດີງາມ.





文 / 龙攀

# ການຄ້າທາງອິນເຕີເນັດຂ້າມຊາດຢູ່ອາຊີຕາເວັນອອກສຽງໃຕ້ຈະເລີນຂຶ້ນ ປະເທດລາວກຽມພ້ອມແລ້ວ



## 东南亚跨境电商火热 老挝蓄势待发

据联合国贸发会议预计，2015 年的跨境电子商务将占到世界贸易总额的 30%—40%，之后会更高。

东南亚作为全球 B2C（网上购物网站）电商发展第二快的市场，其中的菲律宾互联网普及率增长最快，马来西亚进入新兴 B2C 电商市场前三十的排名，而泰国和越南也在移动商务方面表现出了高速增长的潜力。随着消费者的不断加入，老挝的网购市场蓄势待发。

ການຄ້າທາງອິນເຕີເນັດຂ້າມຊາດ,ໝາຍເຖິງການເຄື່ອນໄຫວການຄ້າສາກົນທີ່ຜູ້ຄ້າຂາຍຂອງປະເທດຕ່າງກັນດຳເນີນການຄ້າຂາຍ ແລະ ຊຳລະບັນຊີໂດຍຜ່ານເວທີການຄ້າທາງອິນເຕີເນັດ ແລະ ຂົນສົ່ງສິນຄ້າຜ່ານບໍລິສັດຈໍລະຈອນສິນຄ້າແລ້ວສຳເລັດການຄ້າຂາຍ.ໃນຖານະເປັນຮູບການການຄ້າແບບໃໝ່,ມັນແມ່ນອາໄສອິນເຕີເນັດ ແລະ ການຈໍລະຈອນສິນຄ້າສາກົນ,ໃຫ້ຜູ້ຊື້ກັບຜູ້ຂາຍພົວພັນໂດຍກົງເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ,ມີທ່າແຮງທີ່ຂໍ້ຈຳກັດໜ້ອຍ,ຂັ້ນຕອນໜ້ອຍ,ຕົ້ນທຶນຕ່ຳ,ເວລາຮອບໝູນວຽນສັ້ນ ແລະ ອື່ນໆ,ໄດ້ພັດທະນາຢ່າງວ່ອງໄວໃນທົ່ວໂລກ.ກອງປະຊຸມການຄ້າ ແລະ ການພັດທະນາສະຫະປະຊາຊາດຄາດຄະເນວ່າ,ປີ 2015,ການຄ້າທາງອິນເຕີເນັດຂ້າມຊາດຈະກວມ 30-40% ຂອງຍອດມູນຄ່າການຄ້າໂລກ,ໃນອະນາຄົດຈະສູງກວ່ານີ້ຕື່ມອີກ.

ອາຊີຕາເວັນອອກສຽງໃຕ້ເປັນຕະຫຼາດທີ່ພັດທະນາໄວອັນດັບສອງໃນດ້ານ B2C (ເວັບໄຊຈຳໜ່າຍສິນຄ້າທາງອິນເຕີເນັດ)ຂອງໂລກ.ໃນນັ້ນ,ອັດຕາເຜີຍແຜ່ອິນເຕີເນັດຂອງຟີລິບປິນແມ່ນເພີ່ມຂຶ້ນໄວທີ່ສຸດ,ມາເລເຊຍເຂົ້າສູ່ 30 ອັນດັບທຳອິດຂອງຕະຫຼາດ B2C ທີ່ຈະເລີນໃໝ່,ສຳລັບໄທ ແລະ ຫວຽດນາມກໍ່ໄດ້ສະແດງໃຫ້ເຫັນກຳລັງບົ່ມຊ້ອນທີ່ເຕີບໂຕຢ່າງວ່ອງໄວໃນດ້ານການຄ້າດ້ວຍອຸປະກອນສື່ສານເຄື່ອນທີ່.

ໃນການຄ້າທາງອິນເຕີເນັດຂ້າມຊາດຢູ່ມາເລເຊຍ,ພົນລະເມືອງມັກຊື້ສິນຄ້າຈາກອາເມລິກາ,ຈີນ ແລະ ສະຫະພາບເອີລົບຫຼາຍທີ່ສຸດ,ຕົວຢ່າງວ່າ, AMAZON ຂອງອາເມລິກາ, taobao ຂອງຈີນ ແລະ Asos ຂອງອັງກິດລ້ວນແຕ່ໄດ້ຮັບຄວາມນິຍົມຊົມຊອບຢ່າງຫຼວງຫຼາຍຢູ່ມາເລເຊຍ.ຜົນການສຳຫຼວດສະແດງໃຫ້ເຫັນວ່າ,ຢູ່ມາເລເຊຍມີປະມານ 20 ລ້ານຄົນນຳໃຊ້ອິນເຕີເນັດ,5 ລ້ານຄົນຈະເຂົ້າສູ່ຖັນແຖວຜູ້ໃຊ້ອິນເຕີເນັດໃນປີໜ້າ.ສຳລັບການຄ້າທາງອິນເຕີເນັດຂ້າມຊາດຢູ່ອາຊີຕາເວັນອອກສຽງໃຕ້ນັ້ນ,ບໍ່ພຽງແຕ່ແມ່ນປະຊາຊົນຊື້ສິນຄ້າຕ່າງປະເທດເທົ່ານັ້ນ,ຜະລິດຕະພັນຂອງອາຊີຕາເວັນອອກສຽງໃຕ້ກໍ່ໄດ້ເຂົ້າສູ່ຕະຫຼາດການຄ້າທາງອິນເຕີເນັດຂ້າມຊາດ.ບໍລິສັດ King Power, ກຸ່ມບໍລິສັດສິນຄ້າປອດພາສີໃຫຍ່ທີ່ສຸດຂອງໄທໄດ້ເຂົ້າສູ່ຕະຫຼາດຈີນດ້ວຍຮູບການທາງອິນເຕີເນັດຂ້າມຊາດ,ຮ້ານອິນເຕີເນັດຂອງເຂົາໄດ້ເປີດບໍລິການຢູ່ເວັບໄຊ tmall ຢ່າງເປັນທາງການໃນວັນທີ 1 ມິຖຸນາ ປີ 2014. ຫວ່າງມໍ່ໆມານີ້,ຢູ່ນະຄອນຫຼວງບາງກອກ,ທະນາຄານໄຄ່ໄທ້ຂອງໄທໄດ້ເຊັນສັນຍາຮ່ວມມືກັບບໍລິສັດອາລີບາບາທີ່ເປັນບໍລິສັດການຄ້າທາງອິນເຕີເນັດທີ່ເຂັ້ມແຂງທີ່ສຸດຂອງຈີນ,ນຳເອົາສິນຄ້າຂອງວິສາຫະກິດປານກາງ ແລະ ນ້ອຍຂອງໄທເຂົ້າສູ່ຕະຫຼາດການຄ້າອິນເຕີເນັດ, ເພື່ອເພີ່ມທະວີຄວາມຮັບຮູ້ຂອງລູກຄ້າຕໍ່ຜະລິດຕະພັນຂອງໄທ ແລະ ໂອກາດສົ່ງສິນຄ້າໄປຈຳໜ່າຍຢູ່ຕ່າງປະເທດ.ພ້ອມກັນນັ້ນ,ທະນາຄານໄຄ່ໄທ້ຍັງໄດ້ຮ່ວມມືກັບ“ຈີ່ຟູ້ປາວ”ທີ່ເປັນເວທີຊຳລະບັນຊີທີ່ສັງກັດກຸ່ມບໍລິສັດອາລີບາບາ,ໃນຕໍ່ໜ້ານີ້,ລູກຄ້າຈີນສາມາດໃຊ້“ຈີ່ຟູ້ປາວ”ໃນການຊື້ສິນຄ້າຂອງໄທ.

ນັກທຸລະກິດການຄ້າທາງອິນເຕີເນັດຂ້າມຊາດຂອງລາວຍັງຢູ່ໃນຂັ້ນເບື້ອງຕົ້ນແຫ່ງການພັດທະນາ, ປະຈຸບັນ,ການຈຳໜ່າຍສິນຄ້າທາງອິນເຕີເນັດຢູ່ລາວສ່ວນຫຼາຍແມ່ນຈຳໜ່າຍຢູ່ທາງ facebook,ສິນຄ້າສ່ວນຫຼາຍແມ່ນມາຈາກຈີນ ແລະ ໄທ.ໃນນັ້ນ,ສິນຄ້າຈາກເວັບໄຊ TAOBAO.COM ຂອງຈີນກວມສ່ວນຫຼາຍ.ເພາະວ່າສິນຄ້າຢູ່ໃນເວັບໄຊ TAOBAO.COM ຫຼາກຫຼາຍຊະນິດ,ມີລາຄາຖືກ,ຮູບງາມ,ຈຶ່ງເປັນທາງເລືອກອັນດັບໜຶ່ງຂອງຜູ້ບໍລິໂພກທາງອິນເຕີເນັດຂອງລາວ.

ຕາມຕົວເລກສະຖິຕິຂອງບໍລິສັດຂົນສົ່ງກົ້ງເສີງກວາງໂຈ່ວຈີນ,ແຕ່ລະມື້ພຽງແຕ່ບໍລິສັດເຂົາເຈົ້າແຫ່ງດຽວກໍ່ຈະຂົນສົ່ງພັດສະດຸໄປສະນີທີ່ລູກຄ້າປະເທດລາວຊື້ຈາກເວັບໄຊTAOBAO.COM ນັ້ນ 100 ກວ່າອັນ,ຕົວເລກນີ້ຍັງບໍ່ທັນລວມທັງທີ່ສິນຄ້າຄົນຈີນຢູ່ລາວຊື້ແລ້ວຝາກໃຫ້ເຂົາເຈົ້າສົ່ງໄປນະຄອນຫຼວງວຽງຈັນ.ສຳລັບຕົວເລກດັ່ງກ່າວແມ່ນເພີ່ມຂຶ້ນທຸກເດືອນ,ເມື່ອ 1 ປີກ່ອນ,ໃນເວລາທີ່ບໍລິສັດຂົນສົ່ງກົ້ງເສີງກວາງໂຈ່ວຫາກໍ່ເປີດບໍລິການ,ຈຳນວນຂົນສົ່ງສິນຄ້າທຸກມື້ມີແຕ່ 10 ກວ່າລາຍເທົ່ານັ້ນ.

ຄຽງຄູ່ກັບຜູ້ບໍລິໂພກເຂົ້າສູ່ຖັນແຖວຈັດຊື້ສິນຄ້າທາງອິນເຕີເນັດ,ຕະຫຼາດການຄ້າທາງອິນເຕີເນັດຢູ່ປະເທດລາວກໍ່ກຽມພ້ອມແລ້ວຈະເຕີບໂຕຢ່າງວ່ອງໄວ.

BBL
-BEST BUY LAO-



BBL农业资源（老挝）有限公司是一家专业致力于开发老挝野生资源、提供老挝本地特产的企业。公司总部设在老挝首都万象，在老挝川矿省、占巴色省、他曲省、丰沙里省等都设有办事处收购当地特产。

公司主要收购老挝本地农民从原始森林中收集的野生物产，包括石斛、灵芝、大树茶、松茸、红蘑菇、蜂蜜、沉香等。采用天然晾晒等办法保存产品，不使用任何化学原料处理，为纯天然有机无公害食品。欢迎广大客户订购。

公司地址：
老挝万象市赛色塔县T4路
东南亚市场往里第三排Asean Mall
联系电话：030-9658213
020-59526888
网址：www.bestbuylao.com
微信公众号：老挝特产网

ບໍລິສັດພວກເຮົາ
ຮັບຊື້ເຄື່ອງປ່າຂອງດົງຂອງທ້ອງຖິ່ນທີ່ວປະເທດລາວ,
ເຄື່ອງປ່າຂອງດົງທີ່ພວກເຮົາຮັບຊື້ລວມມີກ້ອຍໄມ້ສະກຸນຫວາຍລາວ, ເຫັດຫຼິນຈື, ຕົ້ນຊາບູຮານ, ເຫັດ matsutake, ເຫັດແດງ, ນ້ຳເຜິ້ງ, ໄມ້ເກດສະໜາ ແລະ ອື່ນໆ.
ຖ້າພວກທ່ານມີຜະລິດຕະພັນເຄື່ອງປ່າຂອງດົງດັ່ງກ່າວ,
ກະລຸນາຕິດຕໍ່ຫາພວກເຮົາ.
ເບີໂທຕິດຕໍ່: 030-9658213
020-59526888






古茶树


松茸


灵芝


野生蜂蜜

# ແຂວງຢູນນານສ້າງຊື່ສຽງໃຫ້ແກ່ຜະລິດຕະພັນຕ່າງໆ

## 云南叫响“云系列”品牌

经过多年发展，云南高原特色农业如今已经向世界递出了一张写满“丰富多样、生态环保、安全优质、四季飘香”优势的名片。为加大“云系列”资源的挖掘和推广，打造特色品牌，由云南省人民政府新闻办公室牵头组织的“魅力彩云南·特色云系列”新闻发布会日前在昆明拉开帷幕。



ຊາວກະສິກອນປູກດອກໄມ້ລັ□ຂາຍດອກກຸລາບພາຍໃນຕະຫລາດດອກໄມ້ເຕີນານເມືອງເຊີນກົງ ນະຄອນຄຸນໝິງແຂວງຢູນນານ
花农在云南昆明呈贡斗南花卉市场内出售玫瑰花　新华社 图

ຫຼັງຈາກການພັດທະນາເປັນເວລາຫຼາຍປີມານີ້,ກະສິກຳສີສັນພູພຽງຂອງແຂວງຢູນນານໄດ້ສະເໜີນາມບັດທີ່ມີທ່າແຮງ“ອຸດົມສົມບູນ,ອະນຸລັກສິ່ງແວດລ້ອມ,ປອດໄພຄຸນນະພາບດີ,ມີຜົນຜະລິດຕະຫຼອດປີ”ຕໍ່ໂລກ.ຫວ່າງກ່ອນນີ້ບໍ່ດົນ,ເພື່ອເພີ່ມທະວີການບຸກເບີກ ແລະ ເປີດກວ້າງເຜີຍແຜ່ຊັບພະຍາກອນ,ສ້າງຍີ່ຫໍ້ຊື່ດັງ,ຫ້ອງການຖະແຫຼງຂ່າວອົງການປົກຄອງແຂວງຢູນນານໄດ້ເປັນເຈົ້າພາບຈັດກອງປະຊຸມຂ່າວພາຍໃຕ້ຫົວຂໍ້ “ຢູນນານທີ່ມີສະເໜ່ຜະລິດຕະພັນຢູນນານທີ່ມີສີສັນພິເສດ”ຢູ່ທີ່ນະຄອນຄຸນມິງ.ກອງປະຊຸມຂ່າວຄັ້ງນີ້ໄດ້ພົວພັນເຖິງ 8 ຫົວຂໍ້ໃຫຍ່,ຄື:ກາເຟຢູນນານທີ່ມີຄຸນນະພາບດີ,ການລ້ຽງສັດທີ່ເປັນມິດກັບສິ່ງແວດລ້ອມ,ຊາຢູນນານກັບວັດທະນະທຳ,ຜັກຢູນນານທີ່ໄວ້ໃຈໄດ້,ຢາຢາຢູນນານເປັນເວລາຮ້ອຍປີ,ເຫັດຢູນນານທີ່ປອດສານພິດ,ນ້ຳມັນຢູນນານທີ່ປອດໄພ,ແລະ ຂີດໝາຍດ້ານພູມສາດ,ເຊິ່ງໄດ້ກວມລວມຈຸດພົ້ນເດັ່ນ ແລະ ສີສັນພິເສດທຸກຢ່າງໃນກະສິກຳສີສັນພູພຽງຂອງຢູນນານ.

ແຂວງຢູນນານແມ່ນແຂວງໜຶ່ງທີ່ມີປະເພດພືດຫຼາຍກວ່າໝູ່ໃນທົ່ວປະເທດຈີນ,ຖືກເອີ້ນວ່າ“ອານາຈັກພືດ”ຕະຫຼອດມາ.ໃນຈຳນວນ 3 ໝື່ນຊະນິດຂອງພືດລະດັບສູງໃນທົ່ວປະເທດນັ້ນ, ແຂວງຢູນນານມີ 247 ຈຳພວກ, 2076 ປະເພດ,1 ໝື່ນ 7 ພັນແນວ.ຢູ່ຢູນນານ,ເພິ່ນໄດ້ອະນຸລັກສັດ ແລະ ພືດອັນລ້ຳຄ່າຊະນິດຕ່າງໆເປັນຢ່າງດີ,ແລະ ພວມບຸກເບີກຊັບພະຍາກອນຊີວະນານາພັນຢ່າງສົມເຫດສົມຜົນ,ພ້ອມກັນນັ້ນ,ການປູກໃບຢາສູບ,ຢາງພາລາ,ໃບຊາ,ຢາພື້ນເມືອງ,ແລະ ໝາກໄມ້ເຂດຮ້ອນໄດ້ມີຂະໜາດໃຫຍ່ສົມຄວນ,ຂະແໜງການດອກໄມ້,ກາເຟ ແລະ ເຄື່ອງຫອມກຳລັງຈະເລີນຂຶ້ນ.

ກອງປະຊຸມຄັ້ງນີ້,ບໍ່ພຽງແຕ່ໄດ້ສະໜອງໂອກາດໃຫ້ຜະລິດຕະພັນພິເສດຂອງທ້ອງຖິ່ນຕ່າງໆພົບກັບນັກຂ່າວແບບໜ້າຕໍ່ໜ້າ,ຍັງສ້າງເວທີໃຫ້ບາງວິສາຫະກິດວາງສະແດງເຕັກໂນໂລຊີພິເສດ,ແນວພັນດີເດັ່ນ ແລະ ວິທີການປູກຝັງຕ່າງໆ.ທ່ານ ທຽນຫູຊິ່ງ,ຮອງຫົວໜ້າຫ້ອງການຖະແຫຼງຂ່າວອົງການປົກຄອງແຂວງຢູນນານກ່າວວ່າ,ຈຸດປະສົງຂອງກອງປະຊຸມຂ່າວຄັ້ງນີ້,ແມ່ນເພື່ອເຮັດໃຫ້ວົງການຕ່າງໆໃນສັງຄົມຮັບຮູ້ຜະລິດຕະພັນກະສິກຳຂອງຢູນນານ,ແລະ ຍົກລະດັບຊື່ສຽງ,ເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງຂອງລັດຖະບານ,ວິສາຫະກິດ,ອົງການຄົ້ນຄວ້າວິທະຍາສາດ,ແລະ ສິ່ງມວນຊົນລົງເລິກປຶກສາຫາລືຢ່າງເລິກເຊິ່ງໂດຍປິ່ນອ້ອມສະພາບການພັດທະນາໃນປະຈຸບັນກໍ່ຄືວິທີຮັບມື,ສະພາບແວດລ້ອມດ້ານການພັດທະນາ,ການຄ້ຳປະກັນດ້ານວິທະຍາສາດເຕັກໂນໂລຊີ,ແລະ ຕະຫຼາດທຶນຮອນເປັນຕົ້ນ.ພ້ອມກັນນັ້ນ,ພາຍໃຕ້ສະພາບເສດຖະກິດໃນປະຈຸບັນ,ກໍ່ແມ່ນເພື່ອເພີ່ມຄວາມໝັ້ນໃຈໃຫ້ແກ່ຂະແໜງການ,ແລະ ຊຸກຍູ້ການພັດທະນາຂອງຂະແໜງການ.

ໃນງານຖະແຫຼງຂ່າວ“ກາເຟຢູນນານທີ່ມີຄຸນນະພາບດີ”ທີ່ເປັນຮອບທຳອິດໃນກອງປະຊຸມຄັ້ງນີ້,ທ່ານອາງຜິງຮວາ,ຮອງຫົວໜ້າພະແນກກະສິກຳແຂວງຢູນນານໃຫ້ຮູ້ວ່າ,ກາເຟຢູນນານມີຄຸນນະພາບທີ່ດີເດັ່ນ.ຢູນນານຕັ້ງຢູ່ພູພຽງ ແລະ ເສັ້ນຂະໜານຕ່ຳ,ມີເງື່ອນໄຂເອື້ອອຳນວຍດ້ານດິນຟ້າອາກາດໃນການຜະລິດກາເຟລະດັບໂລກ.ກາເຟຂອງຢູນນານມີຈຸດພິເສດທີ່ວ່າ“ຂຸ້ນແຕ່ບໍ່ຂົມ,ຫອມແຕ່ບໍ່ປຸກ,ມີລົດຊາດສົ້ມແບບໝາກໄມ້ໜ້ອຍໜຶ່ງ”,ຄຸນນະພາບໂດຍລວມດີກວ່າກາເຟຂອງເບຼຊິນ,ແລະ ເທົ່າທຽມກັບກາເຟເມັດນ້ອຍຂອງໂກລົມບີ.

ທ່ານ ເສີນອີຊິ້ວ,ປະທານບໍລິສັດໝາກໄມ້ເປືອກແຂງຢູນອ້າວຕາຢູນນານທີ່ເຂົ້າຮ່ວມກອງປະຊຸມຄັ້ງນີ້ກ່າວວ່າ,ເມື່ອ 25 ປີກ່ອນ,ແນວພັນໝາກໄມ້ເປືອກແຂງຂອງອົສຕຼາລີໄດ້ເດີນທາງໄກແສນໄກມາຮອດແຂວງຢູນນານ,ແລະ ເລີ່ມເຜີຍແຜ່ຢູ່ເຂດເສັ້ນຂະໜານຕ່ຳຢູ່ພູພຽງຢູນນານອັນສວຍງາມ,ເຊິ່ງມີດິນແດນ ແລະ ດິນຟ້າອາ




ຜະລິດຕະພັນຢາຂາວຢູນນານ
云南白药产品　半 清 图



ປຸນນານຊຸກຍູ້ຜະລິດຕະພັນສີຂຽວພາຍໃນແຂວງສູ່ພາຍນອກ
云南向外推广省内绿色产品 半 清 图

ກາດທີ່ເໝາະແກ່ການປູກຝັງ.ປະຈຸບັນ,ບໍ່ພຽງແຕ່ໄດ້ແຕກດອກອອກຜົນ,ຍັງມີຄຸນນະພາບດີກວ່າແຫຼ່ງຜະລິດດັ້ງເດີມອີກ,ທັງກາຍເປັນແຫຼ່ງລາຍໄດ້ສໍາລັບຄອບຄົວກະສິກອນຢູ່ເຂດຊົນເຜົ່າສ່ວນໜ້ອຍ ແລະ ເຂດຊາຍແດນຂອງແຂວງປຸນນານ.

ທ່ານເລີ່ງຣວາ,ຮອງຫົວໜ້າພະແນກປ່າໄມ້ແຂວງປຸນນານແລະເຈົ້າໜ້າທີ່ອື່ນໆກ່າວວ່າ,ກອງປະຊຸມຂ່າວຄັ້ງນີ້ ໄດ້ຮັບປະສິດທິຜົນທີ່ດີ,ບໍ່ພຽງແຕ່ມີຜົນດີຕໍ່ການສົ່ງເສີມຜະລິດຕະພັນກະສິກໍາທີ່ມີສີສັນພິເສດກ້າວອອກຈາກແຂວງປຸນນານໄປສູ່ທົ່ວປະເທດ,ພ້ອມທັງໄດ້ເປີດຊ່ອງທາງໃຫ້ແກ່ວົງການຕ່າງໆໃນສັງຄົມຮັບຮູ້ຜະລິດຕະພັນກະສິກໍາຂອງແຂວງປຸນນານ,ມີຜົນດີຕໍ່ການລົງເລິກຊອກຮູ້ການພັດທະນາຂອງຂະແໜງການທີ່ກ່ຽວຂ້ອງ.


砌、抹方便快捷
节省人力、物力

标准
机器自动控制生产过程，标准高于红砖和水泥。每块砖尺寸标准，可承重23kg/cm²

放热耐火是
普通红砖的 6 倍

节省
隔热隔音效果高于红砖和水泥砖，这有助于节省用电量，降低外来噪音；
重量较轻，是普通建材的一半，有助于降低建筑造价，砌、抹方便快捷，节省抹灰和人力

砖块充满微小气泡，不沉于水
隔音效果好

ໂຮງງານເບຕົງຜະລິດວັດຖຸກໍ່ສ້າງວານິດ
哇尼混凝土建材生产厂
电话: 020 2353 7652 / 020 9164 1888

轻型砖品质

一质量
二标准
三节约

万象市占塔布里区 电话: 021 215392
瓦占村召阿努街 手机: 020 91641888
Email:vanithgroup@hotmail.com/ 传真:021 240693


## ບໍລິສັດ ກວາງໂຈວກົງເຊີນ ຂົນສົ່ງຈໍາກັດ
## ກວາງໂຈວຈີນ ວຽງຈັນລາວ ບໍລິການຂົນສົ່ງດ່ວນ 4 ມື້

-ບໍລິສັດ ກວາງໂຈວ ກົງເຊີນຂົນສົ່ງ ຈໍາກັດ ເລີ່ມສະໜອງບໍລິການຂົນສົ່ງ ແລະ ຊໍາລະດ່ານ ລະຫວ່າງລາວກັບຈີນແຕ່ປີ 2008 ເປັນຕົ້ນມາ.ບໍລິສັດເຮົາໄດ້ສ້າງສໍານັກງານຂຶ້ນທີ່ ແຂວງກວາງໂຈວ, ນະຄອນຫລວງວຽງຈັນ, ເມືອງຍີວູ, ເມືອງນານນິງ, ເມືອງພິງຊຽງ, ເມືອງຄຸນໝິງ, ເມືອງມໍ່ຫານ ແລະ ມີຕາໜ່າງຄອບຄຸມຢ່າງຮອບດ້ານ. ບໍລິສັດເຮົາມີທີມງານບໍລິການທີ່ປະກອບດ້ວຍຄົນຈີນ, ຄົນລາວ, ຄົນ ໄທ ແລະ ຄົນຫວຽດນາມປະມານ 60 ກ່ວາຄົນ. ບໍລິສັດເຮົາໄດ້ເປີດເສັ້ນທາງແຕ່ຈີນ-ລາວ ໂດຍຜ່ານຫວຽດນາມໃນເມື່ອປີ 2011, ເຮັດໃຫ້ເວລາ ຂົນສົ່ງແຕ່ 15 ມື້ຢຸບເປັນ 4 ມື້ ແລະ ສໍາຄັນ ແມ່ນໄດ້ສົ່ງເສີມການຄ້າລະຫ່ວາງປະເທດລາວກັບປະເທດຈີນອີກດ້ວຍ.

-ບໍລິສັດເຮົາໄດ້ສະໜອງບໍລິການ ທາງດ້ານວິສະວະກໍາໃຫ້ແກ່ເຂື່ອນໄຟຟ້າ, ສະຖານທີ່ກໍ່ສ້າງ, ໄຟຟ້າ,ການຄຸດຄົ້ນແຮ່ທາດແລະອື່ນໆ.ທອດຖອນບົດຮຽນດ້ານຈໍລະຈອນຢ່າງສົມບູນ. ໂດຍສະເພາະແມ່ນບົດຮຽນມຈາກໂຄງການ ຂົນສົ່ງ ກໍ່ສ້າງຫໍປະຊຸມ ASEM ລາວ, ຍ້ອນບໍລິການຂົນສົ່ງທີ່ປອດໄພ ແລະ ໃຊ້ເວລາອັນສັ້ນຊຶ່ງໄດ້ຮັບການຕີລາຄາສູງຈາກຂະແໜງການທີ່ກ່ຽວຂ້ອງ.

ບໍລິສັດເຮົາສະໜອງບໍລິການດັ່ງລຸ່ມນີ້:

-ກວາງໂຈວຈີນຮອດວຽງຈັນລາວຂົນສົ່ງດ່ວນ 4 ມື້

-ບໍລິການຂົນສົ່ງສົມທົບທາງທະເລ ແລະ ທາງບົກຈາກກວາງໂຈວຈີນທາງວຽງຈັນລາວໂດຍຜ່ານບາງກອກ

-ບໍລິການຂົນສົ່ງ ຈາກປະເທດລາວໄປຫາປະເທດຈີນອື່ນໆ

ໂທລະສັບຈີນ: 86 20 36517965
ໂທລະສັບລາວ: 020 98000013
ພາສາລາວ: 020 98209598
EMAIL: ocean@transgz.com
ເວບໄຊ:www.transgz.com



广州共成运输代理有限公司
中国广州—老挝万象 4天快运服务

——广州共成运输代理有限公司从2008年开始提供中国和老挝之间的运输与清关服务。我司在广州、万象、义乌、南宁、凭祥、昆明、磨憨等都设有办事处，网络全面。 公司有一支60多名包括中国、老挝、泰国、越南籍同事组成的服务团队。

——我司在2011年初开辟的中国经越南到老挝线路，把原本需要15天物流的时间缩短到了4天，大大促进了中老贸易。

——我司多次为水电站、建筑工地、电力、矿山等提供工程物流服务，积累了丰富的项目物流经验。特别是老挝欧亚峰会场馆的建设项目运输，我们安全快速的运输服务得到了相关部门高度赞扬。

我司提供的服务项目：

——中国广州到老挝万象4天汽车快运

——中国广州经曼谷到万象的海陆联运服务

——老挝出口到中国等国家的物流服务

中国热线：86 20 36517965
老挝热线：020-98000013
老挝文： 020-28140016
EMAIL:ocean@transgz.com
网址：www.transgz.com



文 / 王志谦　图 / 半　清

# ລະດູບານໃໝ່ເຕັມເມືອງພ້ອມກັບອາລົມແຫ່ງດອກໄມ້ຫອມ

## 春满花都花意浓

昆明被誉为“春城”，素有“花都”之美誉。“天气常如二三月，花枝不断四时春”。大自然赐予春城四季如春的独特气候，特别适宜各种花木繁衍生长。每年二三月，浓浓的春色溢满春城，城市的大街小巷、居民社区，公园、湖边、池塘边，乡村、寺院、山林间 ...... 随处都能看得见含苞绽放的花朵。花潮涌动，春意阑珊花醉人，春城无处不飞花。

ເວົ້າຜູ້ສາວຂຸນທີ່ມາເຖິງຄຸນໝິງແບບຫຼັບໄຫຼຢູ່ໃນຝູງຄົນທັງຫຼາຍຢ່າງບໍ່ຮູ້ເມື່ອ.ລະດູບານໃໝ່ເປັນລະດູການທີ່ດອກໄມ້ເບັ່ງບານສະຫວ່າງສະໄຫວ,ທັງເປັນວັນທີ່ຊາວຄຸນໝິງເດີນຍ່າງຕາມຊານເມືອງຊົມດອກໄມ້, ຄົ້ນຫາໃນລະດູບານໃໝ່.

ເດືອນ 2-3 ທຸກໆປີ,ສີສັນລະດູບານໃໝ່ທີ່ເຂັ້ມຂຸ້ນເຕັມປ່ຽມຢູ່ໃນເມືອງຂຸນເຊີນ,ຖະໜົນຫົນທາງ,ຄຸ້ມບ້ານຊາວເມືອງ,ຮ່ອມນ້ອຍ,ສວນອຸທິຍານໃນຕົວເມືອງ ແລະແຄມໜອງ,ແຄມບຶງ,ຊົນນະບົດ,ວັດວາອາຣາມ,ພູຜາປ່າດົງ...ທຸກໆແຫ່ງຫົນລ້ວນແຕ່ເຫັນດອກດວງໄມ້ຈໍ່ຈູມທີ່ຄອຍໆເບັ່ງບານ.ກະແສດອກໄມ້ກະຈາຍອອກ,ອາລົມລະດູບານໃໝ່ດອກໄມ້ເຮັດໃຫ້ຄົນຮູ້ສຶກຜ່ອນຄາຍເບົາສະບາຍ,ເມືອງຂຸນເຊີນອາບໄປດ້ວຍດອກໄມ້ທຸກໆແຫ່ງຫົນ.

ຄຸນໝິງມີນາມມະຍົດເປັນ“ເມືອງລະດູບານໃໝ່”,ທັງເອີ້ນວ່າ“ເມືອງດອກໄມ້”.ດິນຟ້າອາກາດຕະຫລອດປີເໝືອນດັ່ງເດືອນ 2 ເດືອນ 3,ມີກິ່ງງ່າດອກໄມ້ຕະຫຼອດ 4 ລະດູ.ທຳມະຊາດທານໃຫ້ດ້ວຍດິນຟ້າອາກາດທີ່ມີເອ



ກະລັກສະເພາະສີ່ລະດູເໝືອນດັ່ງລະດູບານໃໝ່ໃຫ້ຄຸນໝິງ,ໂດຍສະເພາະເໝາະສົມປູກດອກໄມ້ ແລະ ຫຍ້າທຸກຊະນິດ.ປະເພດດອກໄມ້ຂອງຄຸນໝິງມີສີສັນຫຼາກຫຼາຍ,ສີສັນແລະ ຄຸນນະພາບສົດຊື່ນທີ່ສຸດ,ປັດຈຸບັນນີ້ມີດອກໄມ້ 400ກວ່າຊະນິດ, ໂດຍສະເພາະມີດອກໄມ້ທີ່ມີຊື່ສຽງ 6 ປະເພດໃຫຍ່ເຊັ່ນ: ດອກຊາ,ຕົ້ນນົກແຂກເຕົ້າ(ດອກແດງເຕັມພູ),ດອກຈຳປີ,ກ້ວຍໄມ້(ດອກເຜີ້ງ),ດອກພັນໄມ້(ປາວຂຸນ)ຊະນິດໜຶ່ງ,ດອກບົວບົກຂາວ.ຊາວຄຸນໝິງນິຍົມດອກໄມ້ມີອາລົມເອກະລັກສະເພາະ.ຮັກດອກໄມ້,ປູກດອກໄມ້,ລ້ຽງດູດອກໄມ້,ຊົມດອກໄມ້,ດື່ມດອກໄມ້,ກິນດອກໄມ້,ແຕ້ມດອກໄມ້,ຮ້ອງເພງດອກໄມ້,ຂຽນກາບກອນດອກໄມ້,ດຳລົງຊີວິດຢູ່ໃນໂລກແຫ່ງດອກໄມ້,ໄດ້ສ້າງວັດທະນະທຳດອກໄມ້ທີ່ເຂັ້ມຂຸ້ນຊະນິດໜຶ່ງ.ກໍໄດ້ຮັບຂອງຂວັນທີ່ສວຍງາມສຸດໂດຍບໍ່ເຫັນແກ່ຕົວສຸດຈາກດອກໄມທີ່ມີຕໍ່ມວນມະນຸດ.

ດວງຕາວັນ ແລະ ດວງເດືອນໝູນວຽນກັນມາ,ສີ່ລະດູຜັດປ່ຽນກັນ.ດອກຊາ,ຕົ້ນນົກແຂກເຕົ້າ,ດອກຊາກຸລະ,ດອກຄາຍ,ດອກເມີຍ,ດອກປາວຂຸນທີ່ປາຍງ່າໄມ້ນັ້ນຈະເບັ່ງບານໄວກວ່າໝູ່ຍ່ອມຈະປ່ຽນເປັນສີສວຍງາມຕາໃນເວລາຜູ້ຄົນທັງຫຼາຍແນມເບິ່ງຊົ່ວພິບຕາ,ກໍໄດ້ເພີ່ມຄວາມສີສັນທີ່ສວຍງາມຂອງທຳມະຊາດແກ່ເມືອງຄຸນໝິງ.ນຳເອົາຄວາມຕົກຕະລຶງ ແລະ ຄວາມດີໃຈໃນເວລາລະດູບານໃໝ່ໃກ້ຈະມາເຖິງ.

ດອກເມີຍພັນຕົ້ນພັນບຶງທາມ,ລົມລະດູບານໃໝ່ມາເຖິງປຸນນານກ່ອນໝູ່,ສວນເຮີລົງທານຊານເມືອງເໜືອຄຸນໝິງມີດອກໄມ້ອັດສະຈັນ ແລະ ຫຍ້າແປກປະລາດ,ແຕ່ໃດມາກໍຖືກຜູ້ຄົນທັງຫຼາຍຍ້ອງຍໍສັນລະເສີນ, ໂດຍສະເພາະແມ່ນດອກເມີນລາຊະວົງຖັງໃນສານເຈົ້າເຮີຊວຍແລະ ຕົ້ນຊາລາຊະວົງໝິງທີ່ມີຊື່ສຽງໂດ່ງດັງກວ່າໝູ່.ຕົ້ນດອກເມີຍທີ່ມີຊີວິດຢູ່ໃນປັດຈຸບັນນີ້,ທັງເອີ້ນວ່າ“ຕົ້ນດອກເມີຍບູຮານລົງຊວຽນ”ສັງກັດໃນຕະກຸນດອກເມີຍແດງ. ເຖິງວ່າແມ່ນມີອາຍຸເກົ່າແກ່ຫຼາຍແລ້ວ,ຕົ້ນຄາຍຄືຕົ້ນໄມ້ຕາຍແຫ້ງແລ້ວ,ແຕ່ວ່າ,ເມື່ອຮອດກ່ອນກຸດຈີນ,ກໍແມ່ນມັນເບັ່ງບານໄວກວ່າໝູ່.ດວງດອກກີບຊ້ຳສີແດງອ່ອນສົ່ງກິ່ນຫອມອອກມາໃຫ້ແຂກທ່ຽວຊົມ.ຕົ້ນຊາລາຊະວົງໝິງຕົ້ນນັ້ນ,ເອີນວ່າດອກເມີຍແດງບານໄວ.ເມື່ອເຖິງທ້າຍລະດູໜາວຕົ້ນລະດູບານໃໝ່,ດອກຊາອື່ນໆຍັງເປັນດອກຈູມຢູ່,ມັນໄດ້ເບັ່ງບານເໝືອນໄຟ,ສີສົດຄືດອກຄາຍ.ຝາກຄວາມຮັກແພງທີ່ເຂັ້ມຂຸ້ນໃຫ້ເຢັນສະບາຍ,ສີຄືແສງອຸໄທທີ່ມີຊີວິດຊີວາ,ແມ່ນດອກໄມ້ອື່ນໆມາປຽບທຽບບໍ່ໄດ້ເລີຍ.ດ້ວຍເຫດນີ້,ໄດ້ດຶງດູດແຂກທີ່ມັກຮັກດອກໄມ້ເປັນຈຳນວນຫຼວງຫຼາຍມາຊົມເບິ່ງ.ປັດຈຸບັນນີ້,ໄດ້ປູກ





ຕົ້ນດອກເນີຍປ່າງກວ້າງຂວາງໃນພູຫລັງສວນເຣີລົງທານ.ສວນດອກເນີຍເຣີລົງທານທີ່ມີເນື້ອທີ່ 427 ມູ,ແມ່ນໜຶ່ງໃນສວນດອກເນີຍໃຫຍ່ສຸດຂອງຈີນ.ໄດ້ປູກຕົ້ນດອກເນີຍສີແດງ,ສີຂາວ,ສີຂຽວ ແລະ ອື່ນໆ 90 ກວ່າປະເພດ, 6000 ກວ່າຕົ້ນ,ໄດ້ປະກອບເປັນທິວທັດໃໝ່ແຫ່ງໜຶ່ງ— "ລົງຊວຽນທັນໄຣ".

ໃນລະຫວ່າງເດືອນ 2-3, "ກະແສນິຍົມດອກໄມ້ປ່ອນທອງ".ໄດ້ດຶງດູດຄົນສະເພາະ,ດອກຊາກຸລະໃນສວນປ່ອນທອງເບັ່ງບານຄືໄຟໄໝ້, ມີຄວາມສວຍສົດງົດງາມທີ່ສຸດ,ຄ້າຍຄືນາງສາວເກັ່ງກ້າໃນບູຮານ,"ພະຍາຍາມສູ້ຊົ່ວຊີວິດ,ໃຫ້ທ່ານເບີກບານແຕ່ນີ້ດຽວ".ຕົ້ນດອກເນີຍລຽນຕິດກັນເປັນປີກແຜ່ນດກາຍເປັນທະເລແຫ່ງດອກໄມ້ທີ່ມີສີສັນສວຍງາມ,ສີສັນເຮືອງຮຸ່ງ,ກິ່ນຫອມເຕັມທົ່ວແດນ,ເຮັດໃຫ້ສວນປ່ອນທອງອາບດ້ວຍຄວາມອົບອຸ່ນຫລູຫລາທີ່ມີກິ່ນຫອມດອກໄມ້ຫອມໄປທົ່ວ,ໄດ້ດຶງດູດຊາວຄຸນໜິງທີ່ມັກຮັກດອກຊາກຸລະໝົດທຸກຄອບຄົວຂຶ້ນພູໄປຊົມເບິ່ງດອກໄມ້ບານ. ມ່ວນຊື່ນຢູ່ໃນທ່າມກາງດອກໄມ້,ກໍໄດ້ເກີດມີຄວາມຮັກແພງຫລົງໃຫລຊະນິດໜຶ່ງຂຶ້ນ.

ດອກໄຫຖາງໃນສວນຊີຮວາຄຸນໜິງແບ່ງປັນສີສັນລະດູບານໃໝ່,ຍາດແຍ່ງກັນບານສີສົດໃສ, ມີແດນຟ້າຕ່າງຫາກ,ໃນສວນຊີຮວາໄດ້ປູກຕົ້ນດອກໄຫຖາງຫຼາຍສິບຕົ້ນເຊິ່ງລຽບຕາມສອງຝາກທາງນ້ອຍອ້ອມຂ້າງດິນຫຍ້າໃນສວນ,ສ້າງເປັນລະບຽງຄຶດມົນດ້ວຍດອກໄຫຖາງ,ໄດ້ສັບໄຂ້ວກັນກັບຕົ້ນດອກໄມ້ຕ່າງໆ, ຕົ້ນປາລົມ,ຕົ້ນວູຖົງທີ່ໃຫຍ່ສູງ,ປ່າໄຜ່ໜາມ,ພູມໄມ້ຕ່ຳ,ສັບຊ້ອນກັນເປັນລະບຽບ,ແມ່ນບາດໜຶ່ງທິວທັດໜຶ່ງ.ໂດຍສະເພາະແມ່ນຢູ່ພາຍໃຕ້ການສະທ້ອນເງົາເຊິ່ງກັນ ແລະ ກັນດ້ວຍດອກໄຫຖາງຢູ່ແຄມໜອງສວຍສົດງົດງາມ, ນ້ຳໄສ.ສາລາ,ທ້ອງຟ້າສີຄາມ,ເມກຂາວ,ເໝືອນດັ່ງພາບແຕ້ມທີ່ສວຍງາມພາບໜຶ່ງ.ແຂກທ່ອງທ່ຽວເລາະຫຼິ້ນຢູ່ໃນທັ້ນແມ່ນມີຄວາມຮູ້ສຶກອອນຊອນສະບາຍອົກສະບາຍໃຈ.

"ດອກໄມ້ທີ່ເຄີຍເຫັນຕະຫລອດໃນພາກກາງຢຸນນານ, ໂດຍສະເພາະແມ່ນດອກຊາແດງໃນຍາມໜາວ". ຕົ້ນດອກໄມ້ຢຸນນານແມ່ນດອກຊາແດງເປັນອັນດັບທີໜຶ່ງ, ຢືນຢູ່ແຖວໜ້າຂອງດອກໄມ້ຊື່ດັງ 8 ແນວຂອງຢຸນນານ. ທັງເປັນດອກໄມ້ປະຈຳເມືອງຄຸນໜິງ,"ດອກຊາຄຸນໜິງມີຊື່ສຽງທົ່ວພິພົບ".ພາກໃຕ້ພູໜິງຟອງສວນປ່າໄມ້ລະດັບຊາດວັດຄຳຄຸນໜິງໄດ້ກໍ່ສ້າງສວນດອກຊາທີ່ມີເນື້ອທີ່ 150 ມູເຊິ່ງເປັນສວນດອກຊາສະເພາະທີ່ໃຫຍ່ກວ່າໝູ່ຂອງຈີນ.ດອກຊາທຸກໆດອກເໝືອນດອກໄຟ,ສິ່ງແສງສະທ້ອນແດງສູ່ທ້ອງຟ້າ.ກົກໄມ້,ປ່າດົງບູຮານໃນປ່າດົງດຶກດຳບັນໄດ້ສະແດງອອກເຖິງລົດຊາດຂອງປ່າທີ່ງຽບສະຫງົບ ແລະ ສວຍສົດງົດງາມຂອງປ່າດົງພົງໄພ,ລະດູບານໃໝ່ທຸກປີ,ຊາວຄຸນໜິງເຄີຍເລາະຫຼິ້ນຜ່ານປ່າດົງທີ່ທີ່ງຽບສະຫງົບດັ່ງກ່າວນີ້,ຍ່າງເດີນຜ່ານທາງນ້ອຍຮ່ອມພູທີ່ຄົດໆລ້ຽວໆ,ທັງຫາຍໃຈເອົາອາກາດສົດຊື່ນໃນປ່າດົງ,ທັງຊົມເບິ່ງດອກໄມ້,ເໝືອນກັນມຶນເມົາຫລົງໃຫລກັບເມືອບ້ານ.

ຊົມເບິ່ງດອກຈຳປີແມ່ນສວນດອກຈຳປີຄຸນໜິງມີຊື່ສຽງໂດ່ງດັງກວ່າໝູ່.ສວນດອກຈຳປີຄຸນໜິງຕັ້ງຢູ່ທິດຕາເວັນອອກວັດຮວາຖິງເຂດທ່ອງທ່ຽວພູຊີຊານ,ໄດ້ສືບທອດທ່າແຮງພຶກສາຊາດຂອງດອກຈຳປີວັດໄທຮວາພູຊີ,ຕະຫລອດ 4 ລະດູແຫ່ງດອກໄມ້ບານ,ສາລາດອກຈຳປີມີຊື່ສຽງໂດ່ງດັງກວ່າ. ສວນດອກຈຳປີມີເນື້ອທີ່ 66 ມູ,ແມ່ນສວນສະເພາະດອກຈຳປີໃຫຍ່ກວ່າໝູ່ຂອງຈີນ. ໃນສວນປູກມີດອກຈຳປີສີຂາວ,ດອກຈຳປີສີກ່ຳ,ດອກຈຳປີສີມ່ວງ ແລະ ສີອື່ນໆເປັນຈຳນວນ 1000 ກວ່າຕົ້ນ,ເມື່ອເຂົ້າສູ່ສວນດອກຈຳປີແລ້ວ,ເງົາຈຳປີທີ່ສວຍງາມ ແລະ ກິ່ນຫອມຂອງມັນພາກັນບິນພຸ່ງມາໃສ່,ອັນຄ້າຍຄືທ່ວງທຳນອງ ແລະ ຄວາມຄິດທາງດ້ານສິລະປະອັນມີສັກສີ ແລະ ຄວາມບໍລິສຸດຜຸດຜ່ອງເໝືອນດັ່ງວາງຕົວຢູ່ໃນເມືອງລັບແລທີ່ມີຄວາມໄຝ່ຝັນຫຼົງໄຫຼຢ່າງນັບບໍ່ຖ້ວນ.

ເມື່ອເວລາອາລົມແຫ່ງລະດູບານໃໝ່ພວມເຂັ້ມຂຸ້ນນັ້ນ,ອາລົມແຫ່ງດອກໄມ້ແຜ່ຂະຫຍາຍອອກໄປ,ລະດູບານໃໝ່ປະດັບດ້ວຍດອກໄມ້ຍິ່ງສວຍງາມ.ສະນັ້ນ,ທຳມະຊາດກັບມະນຸດຢູ່ຮ່ວມກັນດ້ວຍຄວາມກົມກຽວປອງດອງກັນຢ່າງສວຍງາມ,ຈະຕ້ອງຕັ້ງໃຈປົກປັກຮັກສາ,ສຳຜັດ ແລະ ເອື້ອເຟື້ອ,ໃຫ້ພວກເຮົາພ້ອມກັນກ້າວເຂົ້າສູ່ທຳມະຊາດ,ໄປເດີນຍ່າງຕາມຫຍ້າຂຽວໃນຊານເມືອງລະດູບານໃໝ່,ຊົມດອກໄມ້,ຄົ້ນຫາລະດູບານໃໝ່,ຮ້ອງເພງສັນລະເສີນລະດູບານໃໝ່,ຮ້ອງເພງສັນລະເສີນຊີວິດການເປັນຢູ່ທີ່ດີງາມຂອງພວກເຮົາ.



文、图 / 白 艳

# ປ່າຊາຍສີ—ມະຫັດສະຈັນທຳມະຊາດທີ່ເຫັນຍາກໃນໂລກ



世界罕见的自然奇观—彩色沙林

在云南省曲靖市陆良县境内，有一片形成于几亿年前的地壳运动，规模庞大的自然地理奇观—彩色沙林，它与石林、土林并称为“三林”，是迄今世界上唯一发现并公布的多色彩大规模沙景观，其“聚沙成林”的自然奇观举世罕见。

ໂດຍຜ່ານການເຄື່ອນເໜັງເປືອກໜ່ວຍພິພົບເປັນເວລາຫຼາຍຮ້ອຍລ້ານປີກ່ອນຢູ່ພາຍໃນເມືອງລູລຽງນະຄອນຊີຊິງແຂວງຢຸນນານໄດ້ກາຍເປັນປ່າຊາຍສີ—ມະຫັດສະຈັນທໍລະນີສາດທຳມະຊາດທີ່ມີຂະໜາດກວ້າງໃຫຍ່ໄພສານແຫ່ງໜຶ່ງທີ່ໄດ້ເປັນຮູບເປັນຮ່າງຂຶ້ນ,ມັນໄດ້ຮຽກລວມກັນກັບປ່າຫີນ, ປ່າດິນ“ເປັນສາມປ່າ”,ມັນແມ່ນທິວທັດຊາຍທີ່ມີຫຼາຍສີຢ່າງຂະໜາດໃຫຍ່ຂອງໂລກໃນປັດຈຸບັນນີ້ທີ່ປະກົດເຫັນແຕ່ແຫ່ງດຽວ. ມັນແມ່ນທິວທັດອັດສະຈັນທຳມະຊາດທີ່ເຕົ້າໂຮມຂີ້ຊາຍເປັນປ່າທີ່ເຫັນໄດ້ຍາກໃນໂລກ.

ເຂດທິວທັດປ່າຊາຍສີຕັ້ງຢູ່ພາກຕາເວັນອອກສຽງໃຕ້ເມືອງລູລຽງເຊິ່ງຫ່າງຈາກຕົວເມືອງປະມານ 18 ຫຼັກ,ກວມເອົາເນື້ອທີ່ 25 ກິໂລຕາແມັດ,ເຂດທິວທັດທ່ອງທ່ຽວລະດັບຊາດ AAAA.ເຕັກໂຕນິກທໍລະນີສາດທີ່ມີສີສັນປ່າຊາຍເປັນເອກລັກສະເພາະເຊິ່ງຖືກອຸທົກໄພໄຫລເຊາະເປັນເວລາຫຼາຍພັນປີໄດ້ກາຍເປັນໂລກແຫ່ງຄວາມຝັນທີ່ມີສີສັນຫຼາກຫຼາຍຫຼາຍຮູບຫຼາຍແບບ.ຂີ້ຊາຍແຫ່ງນີ້ໂດຍແມ່ນດິນຊາຍແກ້ວເປັນຫຼັກທີ່ມີທາດອະນຸມູນ 48 ຊະນິດ,ພາບວິວປ່າຊາຍເປັນຮູບເປັນຮ່າງຂຶ້ນຍ້ອນມາຈາກປັດໃຈການກະທົບແຜ່ນດິນໄຫວ,ການເຄື່ອນເໜັງເປືອກໂລກ,ຫີນມັກມາພົ້ນ,ລົມພັດຝົນຊຶມກັດ ແລະ ອື່ນໆ,ກາຍເປັນຈອມຊາຍ,ເສົາຊາຍ,ຝາກຳແພງຊາຍ,ກຸ່ມຊາຍ,ຮ່ອມຊາຍ,ທີ່ມີຮູບຮ່າງແຕກຕ່າງກັນ,ລ້ວນແຕ່ເຊື່ອງຊ້ອນລຶດນິຍົມທີ່ນັບບໍ່ຖ້ວນ.ບ່ອນໃດກໍເປັນໜ້າຮັກ,ເຮັດໃຫ້ຜູ້ຄົນຫລົງໄຫລ.ສີປ່າຊາຍໂດຍແມ່ນສີແດງ,ສີເຫຼືອງ,ສີຂາວເປັນສີຫຼັກ,ແລະ ປົນກັນກັບສີບອບ,ສີຄາມ,ສີດຳ,ສີຂີ້ເທົ່າ,ສີແດງເປັນຕົ້ນ 12 ສີ,ປ່າຊາຍຈະປະກົດເຫັນພາບວິວອັດສະຈັນທີ່ມີສີແຕກຕ່າງກັນໃນເວລາຕອນເຊົ້າ,ຕອນຄ່ຳ,ຍາມຝົນ,ຟ້າແດດ,ລະດູບານໃໝ່,ລະດູຝົນ,ລະດູໃບໄມ້ຫລົ່ນ,ລະດູໜາວ ແລະ ຕາມແສງສະຫວ່າງແຮງຫຼືອ່ອນ ແລະ ຕາມມຸມແຈທີ່ຕ່າງກັນ.ເໝືອນດັ່ງພາບຈິນຜູ້ນ້ຳທີ່ສວຍສົດງົດງາມພາບໜຶ່ງ.ປະກົດເຫັນສີສັນຫຼາກຫຼາຍທຸກຊະນິດອອກມາ,ເຮັດໃຫ້ຜູ້ຄົນທັງຫຼາຍຫລົງໄຫລກັບບ້ານ.

ເມື່ອຍ່າງເຂົ້າສູ່ປ່າຊາຍ,ເໝືອນດັ່ງທ່ຽວຊົມ“ໂລກທີ່ມີສີ”ລວງຕາແຫ່ງໜຶ່ງ,ເລາະຫຼິ້ນໃນສະໜາມຣົບບູຮານສາມກົກທີ່ມີຄວັນໄຟສູ້ຣົບ,ພູມີປະເທດປ່າຊາຍສັບສົນຫຼາຍ,ຮູບຮ່າງຈອມປ່າຊາຍປະຖົມປະຖານ,ຮູບແບບອັດສະຈັນ,ສີສັນຫຼາກຫຼາຍ ແລະ ອຸດົມສົມບູນແບບ,ໄດ້ຮັບຄວາມນິຍົມຊົມຊອບຈາກນັກສະແດງໂທລະພາບ ແລະ ຮູບເງົາເປັນຈຳນວນຫຼວງຫຼາຍ.ນັບແຕ່ປ່າຊາຍບຸກເບີກເປັນຕົ້ນມາ,ໄດ້ຖ່າຍທຳຮູບເງົາ“ສາມກົກ”,“ເຊີນຕຽວເຊຍນີ”,“ແຊວອາວຈຽງຫູ”ແລະ ລະຄອນໂທລະພາບ 30 ກວ່າເລື່ອງ. ໄດ້ມີພາບນອກບູຮານສະຖານເປັນຈຳນວນຫຼວງຫຼາຍເຊິ່ງມີນາມມະຍົດ“ໂຮງລະຄອນຮູບເງົາ ແລະ ໂທລະພາບທຳມະຊາດ”.

ປ່າຊາຍໄດ້ເຕົ້າໂຮມແຖບຊາຍສີທຸກຮູບທຸກແບບຢູ່ນຳກັນແມ່ນເຫັນໄດ້ຍາກໃນໂລກ.ປະຕິມະກຳຊາຍ(ການແກະສະຫຼັກຊາຍ)ແມ່ນສິລະປະກຳທາງບົກທີ່ມີເນື້ອທີ່ກວ້າງຂວາງມະໂຫລານ,,ຜ່ານການກອງໄວ້,ຂູດ,ສະຫຼັກ,ຈົກ ແລະ ວິທີອື່ນໆກາຍເປັນຮູບແບບຕ່າງໆພົ້ນທີ່ຂອງມັນໃຫຍ່ໂຄ້ງແມ່ນການສະຫຼັກທີ່ເປັນມູນເຊື້ອນັ້ນຍາກທີ່ປຽບເໝືອນບໍ່ໄດ້ເລີຍ.ເຊິ່ງມີກຳລັງກະທົບຢ່າງແຂງແຮງທາງຈັກຂຸວິນຍານ.ແຫ່ງນີ້ໄດ້ຈັດງານບຸນ





ສະຫຼັກຊາຍສີແຕ່ແຫ່ງດຽວໃນໂລກຢ່າງສຳເລັດຜົນ, ກາຍເປັນສວນສະຫຼັກຊາຍສີໃຫຍ່ກວ່າໝູ່ທີ່ເປັນຫົວຂໍ້ໃນທົ່ວໂລກ.ໄດ້ເຊື້ອເຊີນສາດສະດາຈານສີລະປະສະຫຼັກຊາຍພາຍໃນປະເທດ ແລະ ທົ່ວໂລກ,ເຮັດໃຫ້ສິ່ງທີ່ເປັນທຳມະດາກາຍເປັນອັດສະຈັນ.ເອົາປ່າຊາຍສີທີ່ເປັນທຳມະດາກາຍເປັນຜະລິດຕະພັນທີ່ຍອດຢ້ຽມສີລະປະສະຫຼັກຊາຍ.ໃນຂະນະແຂກທ່ອງທ່ຽວຢ້ຽມຊົມປ່າຊາຍສີນັ້ນທັງຊົມຊົມງານລ້ຽງໃຫຍ່ວັດທະນະທຳທີ່ມີເອກະລັກສະເພາະ.ເມື່ອຍ່າງເຂົ້າສູ່ເຂດປ່າຊາຍສີ,ຜູ້ຄົນທັງຫຼາຍສາມາດຊົມເບິ່ງສິ່ງຍອດຢ້ຽມສີລະປະສະຫຼັກຊາຍສີທີ່ມີທ່າທາງມະຫາສານ ແລະ ຮູບຮ່າງເອກະລັກສະເພາະເປັນໜ່ວຍໆໜຶ່ງ.

ຢູ່ແຫ່ງນີ້,ແຂກທ່ອງທ່ຽວສາມາດຂີ່ມ້າ,ນັ່ງເກີຍ,ນັ່ງລົດສູ້ຣົບໄດ້,ສຳຜັດສີສັນທ້ອງຖິ່ນທີ່ເຂັ້ມຂຸ້ນທີ່ເປັນເອກະລັດສະເພາະ.ປ່າຊາຍສີແມ່ນມະນຸດກັບທຳມະຊາດໂດຍໂສມໜ້າຢູ່ຮ່ວມກັນຢ່າງກົມກຽວ.ເຮັດໃຫ້ຄົນທັງຫຼາຍຍິ່ງຫຼາຍກວ່າເກົ່າຮັບຮູ້ສິ່ງດັ່ງກ່າວ,ກ້າວເຂົ້າສູ່ສິ່ງດັ່ງກ່າວ,ຊົມເບິ່ງລົດຊາດສິ່ງດັ່ງກ່າວ.ຢູ່ທີ່ນີ້,ບໍ່ພຽງແຕ່ສາມາດໄດ້ຮັບຄວາມຮູ້ທຳມະຊາດທີ່ມີຊີວິດຊີວາເໝືອນດັ່ງຂອງແທ້ເທົ່ານັ້ນຍັງສາມາດຫວນຄືນເຖິງສິ່ງຂອງບູຮານອີກດ້ວຍ. ມັນແມ່ນຂອງປະເສີດອັນໜຶ່ງທີ່ທຳມະຊາດອຸທິດໃຫ້ມະນຸດ,ຮູບຊົງທຳມະຊາດທຸກສິ່ງທຸກຢ່າງຂອງມັນຄ້າຍຄືຮູບແທ້ຈິງຫຼາຍ,ເຮັດໃຫ້ແຂກທ່ອງທ່ຽວມີຄວາມຮູ້ສຶກວ່າຊົມເບິ່ງແຕ່ທີ່ຍອດຢ້ຽມບໍ່ພຽງພໍເປັນ.





ລາວຟີວເຈີ LB 老挝商城 360LAOSBUY.COM






老挝商城
让老挝未来，现在就来

http://www.360laosbuy.com 搜索

ເຄື່ອງປ່າຂອງດົງລາວ ແລະ ໄມ້ເນື້ອແຂງຂອງລາວ | 特产红木

ບໍລິການຈັດຫາງານ | 求职招聘

ບໍລິການເຊົ່າລົດແລະການທ່ອງທ່ຽວ | 旅游租车

ການບໍລິການທຸລະກິດການຄ້າ | 商务服务

ບໍລິການຈຳໜ່າຍ ລົດ ແລະ ສ້ອມແປງລົດ | 汽车及服务

ອະສັງຫາລິມະຊັບ | 房地产

扫一扫，进入老挝商城

文 / 楚然　图 / 新华社

# ສິລະປະກຳປະຊາຊົນຮ້ອຍປີ—ຕັດສະຫຼັກເຄື່ອງປັ້ນດິນເຜົາ

## 百年民间工艺——剪瓷雕

在中国闽南、潮汕一带，经常可见庙宇、祖祠等古建筑屋脊上各式做工精细的人物造型和风景图案。这些精美的造型其实是用破瓷碎碗粘贴而成的，这便是有着百年历史的民间工艺——剪瓷雕。

ຮູບຊົງຂອງບຸກຄົນ ແລະ ພາບວິວທິວທັດລະອຽດປານີດທີ່ສວຍງາມທຸກຮູບທຸກແບບຢູ່ເທິງຫລັງຄາວັດວາອາຣາມ ແລະ ສານເຈົ້າໃນເຂດພາກໃຕ້ຝູຈຽນ ແລະ ແຕ້ຈິວ,ຊວນເທົາວາງຕຸງ.ຮູບຊົງທີ່ຍອດຢ້ຽມສວຍງາມນັ້ນ,ທີ່ແທ້ແລ້ວມັນແມ່ນນຳໃຊ້ເຄື່ອງປັ້ນດິນເຜົາແຕກຖ້ວຍແຕກທີ່ມີສີສົດຕິດກັນປະກອບເປັນຮູບເປັນຮ່າງຂຶ້ນ.ອັນນີ້ກໍແມ່ນສິລະກຳປະຊາຊົນທີ່ມີປະຫວັດຮ້ອຍປີ—ຕັດສະຫຼັກເຄື່ອນປັ້ນດິນເຜົາ.

ການຕັດສະຫຼັກແມ່ນທັກສະຫັດຖະກຳທີ່ເປັນມູນເຊື້ອຊະນິດໜຶ່ງ,ກໍຄືຄັດເລືອກຖ້ວຍເຄື່ອງປັ້ນດິນເຜົາສີ,ຈານເຄື່ອງປັ້ນດິນເຜົາສີ,ເປືອກຫອຍ ຫຼື ນຳໃຊ້ເຄື່ອງປັ້ນດິນເຜົາສີແຕກລາຄາຄາຖືກເປັນວັດຖຸດິບ,ອີງຕາມຄວາມຕ້ອງການໃຊ້ເຄື່ອງມືເຊັ່ນ: ຄີມ, ຄ້ອນຕີໄມ້,ລໍ້ຂັດມາຕັດ,ຕີ,ຝົນເປັນແຜ່ນນ້ອຍເຄື່ອງປັ້ນດິນເຜົາທີ່ມີທຸກຮູບທຸກແບບນ້ອຍໃຫຍ່ບໍ່ທໍ່ກັນ,ແລ້ວໃຊ້ຝຸ່ນນ້ຳຕານຕິດຕັດເປັນສັດ ແລະ ນົກປີກ,ດອກໄມ້,ນົກແມງ ແລະ ປາ,ບຸກຄົນບູຮານທີ່ມີຮູບຊົງແຕກຕ່າງກັນຢູ່ໃນລອກແບບ ແລະ ອື່ນໆ,ປະດັບປະດາລຽນຝັງຢູ່ເທິງຫລັງຄາ,ເຂົາເຮືອນ,ໃຕ້ສາຍຄາ,ຝາກຳແພງ ແລະ ອື່ນໆ.ມັນມີສີສັນສົດຊື່ນ,ຮູບຊົງມີຊີວິດຊີວາ,ມີຄວາມຮູ້ສຶກພື້ນທີ່ແຮງ,ບໍ່ອອກສີຕະຫລອດໄປ.





ສະຫຼັກເຄື່ອງປັ້ນດິນເຜົາແບ່ງອອກເປັນສະຫຼັກເຄື່ອງປັ້ນດິນເຜົາຮາບພຽງ,ສະຫຼັກເຄື່ອງປັ້ນດິນເຜົານູນ,ສະຫຼັກເຄື່ອງປັ້ນດິນເຜົາຊໍ້າຊ້ອນ,ສະຫຼັກເຄື່ອງປັ້ນດິນເຜົາເຄິ່ງລອຍ,ແມ່ນສິລະປະຕົກແຕ່ງສະຖາປະນິກແຫ່ງການເຊື່ອມໂຍງຮູບປັ້ນດ້ວຍດິນໜຽວ,ພາບແຕ້ມ,ແກະສະຫຼັກ ແລະ ອື່ນໆ.ສິລະປະກຳທີ່ເປັນເອກະລັກສະເພາະອັນນີ້ຫລັງຈາກສະໄໝລາຊະວົງຖັງສືບທອດມາສູ່ເຂດພາກໃຕ້ຝູຈຽນໂດຍຜ່ານຊ່າງໄມ້ທ້ອງຖິ່ນ,ນັກສິນລະປິນດຳເນີນການດັດສ້າງ ແລະ ປະດິດສ້າງໃໝ່ຢ່າງຕໍ່ເນື່ອງ,ຄ່ອຍໆກາຍເປັນສິລະປະປະດັບປະດາສະຖາປະນິດທີ່ມີສີສັນເອກລັກສະເພາະເຂດພາກໃຕ້ຝູຈຽນ.

ສິລະປະແກະສະຫຼັກທີ່ຍອດຢ້ຽມທີ່ມີຄຸນຄ່າຊົ່ວນິລັນດອນເປັນຫົວກະທິເຕົ້າໂຮມສະຕິປັນຍາ ແລະ ສິລະປະຂອງຜູ້ອອກແຮງງານບູຮານຂອງຈີນ.ສິລະປະຕັດເຄື່ອງປັ້ນດິນເຜົາເບິ່ງໄປແລ້ວຄືຊິແມ່ນມະຍົກມະຍ່ອຍ,ແຕ່ວ່າ,ໄດ້ເຊື່ອມໂຍງກັບວັດທະນະທຳທີ່ເປັນມູນເຊື້ອອັນຍິ່ງໃຫຍ່ມະໂຫລານ,ຖ້າວ່າ,ບໍ່ມີຄວາມຮູ້ດ້ານປະຫວັດສາດມະນຸດສາດ,ພູມີສາດ,ແລະ ສາສະໜາອັນອຸດົມສົມບູນ,ຍາກທີ່ຈະຜະລິດສ້າງຜົນງານຕັດສະຫຼັກເຄື່ອງປັ້ນດິນເຜົາອັນສັບສົນອອກມາໄດ້.ເປັນຖານະ 1 ໃນຂອງປະເສີດສິລະປະທີ່ເປັນມູນເຊື້ອຂອງຈີນ.ຕັດເຄື່ອງປັ້ນດິນເຜົາໄດ້ມີຜົນສະທ້ອນຫຼາກຫຼາຍໃນເຂດຝູຈຽ້ນ,ໄຕ່ຫວັນ ແລະ ອາຊີຕາເວັນອອກສຽງໃຕ້ຢູ່ໃນສະຖາປະນິກບູຮານ ແລະ ສະຖາປະນິກແບບສວນປ່າໄມ້ທີ່ເຂດພາກໃຕ້ຝູຈຽນລ້ວນແຕ່ມີການປະດັບປະດາແບບຕັດເຄື່ອງປັ້ນດິນເຜົາ,ກາຍເປັນຄວາມງາມເອກກະລັກສະເພາະຂອງສິລະປະສະຖາປະນິກທີ່ເປັນມູນເຊື້ອໃນພາກໃຕ້.

文/筱 岚 图/新华社

# ຫີນແກະສະຫຼັກຮຸ້ຍອ່ານ: ສິລະປະແກະສະຫຼັກນິກາຍພາກໃຕ້ຈີນ

## 惠安石雕：南派雕刻艺术之花

位于福建省东南沿海湄洲湾和泉州湾之间的惠安，依山临海。雕刻艺术产业是惠安的传统产业，也是惠安的支柱产业，同时又是惠安文化产业中的重要组成部分。

ຮຸ້ຍອ່ານຕັ້ງຢູ່ລະຫວ່າງອ່າວເມີຍໂຈ່ວ ແລະ ອ່າວຊວນໂຈ່ວທີ່ຢູ່ແຄມທະເລທາງຕາເວັນອອກສຽງໃຕ້ຂອງແຂວງຟູຈ້ຽນຈີນ,ແປະກັບພູດອຍ ແລະ ມຸ້ງໜ້າສູ່ທະເລ. ອະແໜງການແກະສະຫຼັກແມ່ນອະແໜງການມູນເຊື້ອຂອງຮຸ້ຍອ່ານ,ກໍ່ແມ່ນອະແໜງການເສົາຄ້ຳຂອງຮຸ້ຍອ່ານ,ພ້ອມທັງເປັນພາກສ່ວນອັນສຳຄັນໃນອະແໜງການວັດທະນະທຳຂອງຮຸ້ຍອ່ານ.

ສິລະປະແກະສະຫຼັກຂອງຮຸ້ຍອ່ານມີປະຫວັດສາດມາແຕ່ດົນນານແລ້ວ,ໃນພັນກວ່າປີທີ່ຜ່ານມາ,ບຸກພະຊົນຂອງຮຸ້ຍອ່ານໄດ້ເຊື່ອມໂຍງວັດທະນະທຳພາກກາງແຜ່ນດິນໃຫຍ່ຈີນ,ວັດທະນະທຳມິ່ນຫວຽດທີ່ຢູ່ແຄມທະເລ,ແລະວັດທະນະທຳທະເລ,ສືບທອດສິ່ງດີເດັ່ນຈາກສະໄໝບູຮານຂອງຈີນ,ເຮັດໃຫ້ສິລະປະແກະສະຫຼັກນິກາຍພາກເໜືອຈີນທີ່ກຳເນີດມາຈາກລ້ອງແມ່ນ້ຳເຫຼືອງນັ້ນ,ຄ່ອຍໆຫັນປ່ຽນມາເປັນສິລະປະນິກາຍພາກໃຕ້ທີ່ມີຄວາມງາມປານີດ,ຄຽງຄູ່ກັບການພັດທະນາຂອງສິລະປະສະຖາປັດຕະຍະກຳນັບມື້ນັບຈະເລີນຂຶ້ນ,ໄດ້ກາຍເປັນສິ່ງດີເດັ່ນໃນວັດທະນະທຳອັນເປັນມູນເຊື້ອຂອງຈີນ.



ສວນຈີເມີຍອາວປວນທີ່ສ້າງຂຶ້ນໃນຊຸມປີ 1950 ເພື່ອລະນຶກທ່ານເສີນເຈ່ຍເກິງທີ່ເປັນຈີນຕ່າງດ້າວຮັກຊາດ,ເຊິ່ງໄດ້ລວມສູນສະແດງໃຫ້ເຫັນລະດັບສິລະປະແກະສະຫຼັກຫີນໃນຍຸກປະຈຸບັນຂອງຮຸ້ຍອ່ານ.ຮູບແກະສະຫຼັກຫີນ 650 ໜ່ວຍໃນສວນນັ້ນ,ໄດ້ວາງສະແດງປະຫວັດສາດບູຮານ,ປະຫວັດສາດປະຕິວັດຂອງຈີນ ແລະ ການສ້າງສາພັດທະນາປະເທດຈີນໃໝ່,ເປັນສິ່ງອັດສະຈັນດ້ານຈິດຕະກຳຂອງຈີນ,ແລະ ຖືເປັນສວນລວມສູນສິລະປະແກະສະຫຼັກຫີນຂອງຈີນ.

ນອກນີ້,ຊ່າງແກະສະຫຼັກຂອງຮຸ້ຍອ່ານໄດ້ເຂົ້າຮ່ວມການຜະລິດຮູບແກະສະຫຼັກ ແລະ ໂຄງການຂີດໝາຍຈຳນວນຫຼວງຫຼາຍທີ່ມີຄວາມໝາຍປະຫວັດສາດຢູ່ປູສະນີຍະສະຖານ ແລະ ແຫຼ່ງທ່ອງທ່ຽວຕ່າງໆທັງພາຍໃນ ແລະ ຕ່າງປະເທດ,ຕົວຢ່າງວ່າ,ພື້ນຫີນຂອງເສົາຄ້ຳໃນຫໍສະພາປະຊາຊົນທີ່ນະຄອນຫຼວງປັກກິ່ງ,ຮູບແກະສະຫຼັກຂອງອະນຸສາວະລີລະລຶກວິລະຊົນປະຊາຊົນ,ຮູບແກະສະຫຼັກຢູ່ຫໍລະນຶກທ່ານປະທານເໝົາເຈີຕຸ່ງ,ຮູບແກະສະຫຼັກທ່ານປະທານເໝົາເຈີຕຸ່ງໄລຍະໜຸ່ມຢູ່ເຫຼີມຈີຈີໂຈ່ວທີ່ນະຄອນຊາງຊ່າແຂວງຫູນານຈີນ,ຮູບແກະສະຫຼັກຢູ່ສວນສຸສານທ່ານສີຈົງຊຸນຢູ່ຟູ້ຜີງຂອງແຂວງສານຊີ່,ຮູບແກະສະຫຼັກຢູ່ວັດຈີເລີ້ຢູ່ເປນັງຂອງມາເລເຊຍ,ດັ່ງນີ້ເປັນຕົ້ນ.

ສິລະປະແກະສະຫຼັກຮຸ້ຍອ່ານມີຫຼາຍປະເພດ,ເຊັ່ນ,ແກະສະຫຼັກຫີນ,ໄມ້,ດິນຈີ່,ດິນ,ເຄື່ອງເຄືອບ ແລະ ອື່ນໆ,ໂດຍສະເພາະແມ່ນການແກະສະຫຼັກຫີນແບ່ງອອກເປັນຫຼາຍຊະນິດ.ວັດຖຸດິບມີຫີນກຼານິດ,ຫີນອ່ອນ,ຫີນຊາ,ແລະຫີນຢົກເປັນຕົ້ນ.ຜະລິດຕະພັນແກະສະຫຼັກຈະໄດ້ນຳໃຊ້ເປັນສິລາຈາລຶກ,ຮູບແກະສະຫຼັກທີ່ໄວ້ຢູ່ໃນສວນສາທາລະນະຂອງຕົວເມືອງ,ສ່ວນປະກອບຂອງສິ່ງກໍ່ສ້າງຫຼືວັດສະດຸກໍ່ສ້າງ,ຮູບແກະສະຫຼັກທາງສາສະໜາ,ເຄື່ອງເຟີນີເຈີ,ແລະ ເຄື່ອງຫັດຖະກຳເປັນຕົ້ນ.ເຄື່ອງຫັດຖະກຳແກະສະຫຼັກຫີນແມ່ນອອກແບບ ແລະ ແກະສະຫຼັກຕາມຮູບເດີມຂອງວັດຖຸດິບ.ເຄື່ອງຫັດຖະກຳແກະສະຫຼັກຂອງຮຸ້ຍອ່ານມີເນື້ອໃນຢ່າງອຸດົມສົມບູນ,ມີຫຼາຍຮູບຫຼາຍແນວ,ແກະສະຫຼັກຢ່າງລະອຽດປານີດ,ແລະ ມີຄຸນຄ່າດ້ານສິລະປະໃນລະດັບສູງ,ມີລັກສະນະຕົວແທນໃຫ້ແກ່ວັດທະນະທຳມູນເຊື້ອ ແລະ ສິ່ງຍອດຢ້ຽມໃນສິລະປະພື້ນເມືອງຂອງຮຸ້ຍອ່ານ.

ປະຈຸບັນ,ຢູ່ຮຸ້ຍອ່ານມີວິສາຫະກິດແກະສະຫຼັກຫີນ 800 ກວ່າແຫ່ງ,ເຊິ່ງມີຜູ້ປະກອບອາຊີບ 1 ແສນກວ່າຄົນ.ຢູ່ທົ່ວເມືອງມີຊ່າງຈິດຕະກຳດ້ານຫັດຖະກຳລະດັບຊາດ 2 ຄົນ,ຊ່າງສິລະປະແກະສະຫຼັກຫີນລະດັບຊາດ 6 ຄົນ.ຊ່າງຈິດຕະກຳດ້ານຫັດຖະກຳແຂວງຟູຈ້ຽນ 17 ຄົນ,ນັກຈິດຕະກຳລະດັບແຂວງ 48 ຄົນ,ຈິດຕະກອນລະດັບກາງ ແລະ ສູງ 600 ກວ່າຄົນ.ຊ່າງລະດັບເບື້ອງຕົ້ນ 2100 ກວ່າຄົນ, ມີຄອບຄົວທີ່ສືບທອດສິລະປະແກະສະຫຼັກ 23 ຄອບຄົວ,ໂຮງຮຽນຖ່າຍທອດສິລະປະແກະສະຫຼັກ 4 ແຫ່ງ.

文 / 楚然

# ມະຫາວິທະຍາໄລສ້າງຄູຢຸນນານ



## 云南师范大学

云南师范大学是一所历史悠久、传统优良的省属重点师范大学，是云南省人民政府和中国教育部共建高校、国家中西部基础能力提升工程重点建设的 100 所高校之一。

ມະຫາວິທະຍາໄລສ້າງຄູຢຸນນານແມ່ນມະຫາວິທະຍາໄລທີ່ເປັນຈຸດສຸມສັງກັດແຂວງຢຸນນານທີ່ມີປະຫວັດຍາວນານ ແລະ ມີມູນເຊື້ອອັນດີງາມແຫ່ງໜຶ່ງ.ແມ່ນໜຶ່ງໃນໂຮງຮຽນຊັ້ນສູງຂອງອຳນາດການປົກຄອງແຂວງຢຸນນານ ແລະ ກະຊວງສຶກສາທິການຈີນຮ່ວມກັນສ້າງຂື້ນທັງເປັນ 1 ໃນໂຮງຮຽນ 100 ແຫ່ງໃນການກໍ່ສ້າງທີ່ເປັນຈຸດສຸມຂອງໂຄງການຍົກສູງຄວາມສາມາດພື້ນຖານໃນພາກກາງ,ພາກຕາເວັນຕົກຂອງລັດ.

ໂຮງຮຽນມີເນື້ອທີ່ 3330 ມູ,ຕັ້ງມີ 24 ຄະນະ,ຍັງມີ 2 ຄະນະທີ່ເປັນເອກລາດ,40 ກວ່າອົງການຄົ້ນຄວ້າ.ເຊິ່ງມີສາຂາວິຊາ 10 ປະເພດເຊັ່ນ:ອັກສອນສາດ,ປະຫວັດສາດ,ປັດຊະຍາ,ນິຕິສາດ,ການສຶກສາ,ບໍລິຫານສາດ,ວິທະຍາເຕັກນິກ,ເສດຖະສາດ,ສິລະປະສາດ;ກາຍເປັນສະຖານະພາບວິຊາສະເພາະ ແລະ ສາຂາວິຊາທີ່ມີຫຼາຍວິຊາພັດທະນາຢ່າງກົມກຽວ.

ໂຮງຮຽນໂດຍຜ່ານການປະຕິຮູບ ແລະ ປະດິດສ້າງໃໝ່ຫຼາຍດ້ານເຊັ່ນ:ເນື້ອໃນການສຶກສາ,ວິທີການສິດສອນ,ລະບົບບົດສອນ,ບຳລຸງກໍ່ສ້າງບຸກຄະລາກອນເປັນຕົ້ນໄດ້ສຳເລັດການຫັນປ່ຽນຮູບແບບຈາກການສຶກສາສ້າງຄູທີ່ເປັນມູນເຊື້ອຫັນເປັນໂຮງຮຽນການສຶກສາຄູສອນທີ່ທັນສະໃໝ,ຈາກວິທະຍາຄານສ້າງຄູທີ່ເປັນມູນເຊື້ອຫັນເປັນມະຫາວິທະຍາໄລແບບຄົ້ນຄວ້າການສິດສອນໂດຍແມ່ນການສຶກສາສ້າງຄູເປັນຈຸດພິເສດ.

ໂຮງຮຽນໄດ້ສ້າງຕັ້ງເວທີຄົ້ນຄວ້າລະດັບຊາດ,ລະດັບແຂວງ ແລະ ຖານທີ່ໝັ້ນເຊັ່ນ:ສູນກວດກາຄຸນນະພາບນ້ຳເຄື່ອງທຳນ້ຳຮ້ອນດ້ວຍພະລັງແສງຕາເວັນແຫ່ງຊາດ,ສູນຄົ້ນຄວ້າພັດທະນາພະລັງແສງຕາວັນລະຫວ່າງຈີນ-ອັງກິດ,ຫ້ອງທົດລອງຮ່ວມສຳພັນພະລັງງານທີ່ເກີດໃໝ່ຈີນ-ລາວ,ສູນຄົ້ນຄວ້າອາເມລິກາພຸລິເຕີ,ສູນຄົ້ນຄວ້າການາດາລາງນິນ,ແລະ ສູນຄົ້ນຄວ້າຍຸດທະສາດພັດທະນາ ແລະ ການສຶກສາບຸກຄະລາກອນຄຸນໜິງ.ຈີນທົ່ວອາຊີ ແລະ ອື່ນໆ.

ໂຮງຮຽນມີຄູອາຈານ ແລະ ພະນັກງານພະລາກອນເປັນຈຳນວນ 2300 ກວ່າຄົນ,ໃນນັ້ນມີນັກຊ່ຽວຊານທີ່ມີຄຸນງາມຄວາມດີດີເດັ່ນຕໍ່ຊາດ,ຜູ້ໄດ້ເງິນບຳເນັດພິເສດຈາກຄະນະລັດຖະບານ,ຜູ້ໄດ້ລາງວັນ"ໂຄງການບຸກຄະລາກອນເປັນລ້ານເປັນໂກດ"ແຫ່ງຊາດ, "ແຜນການຮ້ອຍຄົນ"ສະຖາບັນວິທະຍາສາດຈີນ,ລາງວັນຄູອາຈານຊາວໜຸ່ມໂຮງຮຽນຊັ້ນສູງກະຊວງສຶກສາທິການ,ຜູ້ທີ່ເລືອກເຟັ້ນໃນ"ແຜນການສະໜັບສະໜູນບຸກຄະລາກອນທີ່ດີເດັ່ນສະຕະວັດໃໝ່"ຂອງກະຊວງສຶກສາທິການ,ບຸກຄະລາກອນວິທະຍາສາດເຕັກໂນໂລຊີຊັ້ນສູງແຂວງຢຸນນານເປັນຕົ້ນ.ທ່ານ ຢາງເຈິງນິນ ຜູ້ໄດ້ຮັບລາງວັນໂນແບນ,ທ່ານຢາງໂລ,ກົວປາຍລິນ,ທ່ານ ໄຕຢູອວຍ,ສະມາຊິກສະພາບັນດິດສະຖາບັນວິທະຍາສາດຈີນ,ທ່ານ ອາມັກລາທອງກາ ສາສະດາຈານມະຫາວິທະຍາໄລຈຽນຊຽວ,ສະມາຊິກສະພາບັນດິດວິສະວະກຳພະລາຊະອັງກິດ,ທ່ານພິຊະລິເຕີສ໌ຜູ້ໄດ້ຮັບລາງວັນໂນແບນເສດຖະສາດ,ສະມາຊິກສະພາບັນດິດສະຖາບັນວິທະຍາສາດສັງຄົມໃນປີ 2010,ທ່ານ ສີໂມ ໂທມາກອະດີດຫົວໜ້າບັນນາທິການໃຫຍ່"ໜັງສືພິມນິວຢອກທາມ"ອະດີດປະທານຄະນະກຳມະການຕີລາຄາລາງວັນພຸລິເຈີ ດຣ ຢໍຫານ ໄນສ໌ບິກ ແລະ ນັກຊ່ຽວຊານ,ນັກປາດເປັນຕົ້ນເປັນຈຳນວນ 100 ກວ່າທ່ານ 40 ກວ່າປະເທດໄດ້ຖືກຮັກສະໝັກເຊື້ອເຊີນເປັນສາສະດາຈານກິຕິມະສັກ,ສາສະດາຈານການສິດສອນ ຫຼື ສາສະດາຈານທີ່ມີຕຳແໜ່ງຂອງໂຮງຮຽນ.

ໂຮງຮຽນໄດ້ສ້າງຕັ້ງສະຖາບັນຂົງຈື້ 1 ແຫ່ງ,ຫ້ອງຮຽນຂົງຈື້ 3 ຫ້ອງ,ສູນວັດທະນະທຳພາສາຈີນ 5 ແຫ່ງຢູ່ຕ່າງປະເທດ,ໄດ້ດຳເນີນການຮ່ວມມື ແລະ ແລກປ່ຽນກັບມະຫາວິທະຍາໄລ ແລະ ອົງການຄົ້ນຄວ້າ 150 ກວ່າແຫ່ງ 60 ກວ່າປະເທດ ແລະ ເຂດແຄ້ວນເຊັ່ນ:ອາເມລິກາ,ອັງກິດ,ການາດາ,ອົດສະຕຣາລີ,ນູເວນເຊລັງ ແລະ ຮົງກົງ,ມາກາວ,ໄຕຫວັນ ແລະ ອື່ນໆໄດ້ຮັບເອົານັກສຶກສາ 13000 ກວ່າຄົນ.ປັດຈຸບັນນີ້ມີນັກສຶກສາທຸກປະເພດ 1705 ຄົນ,ເປັນໂຮງຮຽນທີ່ມີນັກສຶກສາກຳລັງຮຽນຢູ່ເປັນຈຳນວນຫຼາຍກວ່າໝູ່ຂອງແຂວງຢຸນນານ.

ໃນໄລຍະພັດທະນາປະຫວັດສາດໃໝ່,ໂຮງຮຽນໄດ້ປະຕິບັດຍຸດທະສາດ"ການພັດທະນາລວມສູນກວມລວມ,ມີເນື້ອຫາທີ່ມີສີສັນພິເສດຈັດທຳໂຮງຮຽນ"ແລະ ວັດທະນະທຳຈັດທຳໂຮງຮຽນທີ່ວ່າ"ຍອມຮັບເຊື່ອມໂຍງ,ແບບແຜນສຸພາບບຸລຸດ"ບາກບັ່ນສູ້ຊົນເພື່ອການສ້າງສາໂຮງຮຽນນີ້ກາຍເປັນມະຫາວິທະຍາໄລສ້າງຄູແບບສິດສອນຄົ້ນຄວ້າທີ່ເປັນ 1 ພາຍໃນປະເທດຈີນ ແລະ ກາຍເປັນມະຫາວິທະຍາໄລທີ່ມີລະດັບສູງໃນພາກພື້ນເຊິ່ງມີສີສັນພິເສດສົດໃສໃນພາກຕາເວັນຕົກສ່ຽງໃຕ້ຂອງຈີນ.

文／筱岚 图／新华社

# ເຜົ່າເຕີອາງ

## 德昂族

德昂族，为云南独有民族，主要居住在云南省潞西县与镇康县，少数散居于盈江、瑞丽、陇川、保山、梁河、耿马等地，与傣族、景颇族、傈僳族、佤族、汉族等民族交错而居。

ເຜົ່າເຕີອາງແມ່ນຊົນເຜົ່າໜຶ່ງທີ່ອາໄສຢູ່ພຽງແຕ່ແຂວງຢຸນນານບ່ອນດຽວເທົ່ານັ້ນ,ສ່ວນຫຼາຍແມ່ນອາໄສຢູ່ເມືອງລູ້ຊີ່ ແລະ ເມືອງເຈີ້ນຄ່າງຂອງແຂວງຢຸນນານ,ມີຈຳນວນໜຶ່ງອາໄສຢ່າງກະແຈກກະຈາຍຢູ່ຢີງຈ່ຽງ,ຢຸຍລີ້,ລົງຊ່ວນ,ປາວສ່ານ,ລຽງເຫີ,ແລະ ເກິ້ງມາເປັນຕົ້ນ,ຢູ່ຮ່ວມກັນກັບເຜົ່າລື້,ເຜົ່າຈິງໂພ່,ເຜົ່າລີ້ຊູ້,ເຜົ່າວາ ແລະ ເຜົ່າຫານ.

ເຜົ່າເຕີອາງແມ່ນຊົນເຜົ່າສ່ວນໜ້ອຍທີ່ມີປະຫວັດສາດອັນຍາວນານຢູ່ພາກຕາເວັນຕົກສ່ຽງໃຕ້ຂອງຈີນ,ເຄົ້າມາຈາກຊາວພູໃນສະໄໝບູຮານ,ແລະ ມີສາຍພົວພັນຢ່າງໃກ້ຊິດກັບອ້າຍລາວ.ເມື່ອກ່ອນ ຄ.ສ ສະຕະວັດທີ 2 ກໍ່ອາໄສຢູ່ສອງຝັ່ງແມ່ນ້ຳນູ້ຈ່ຽງ,ເປັນຊົນເຜົ່າທີ່ບຸກເບີກແຖວປາວສ່ານ ແລະ ເຕີຫົງໃນສະໄໝບູຮານ.

ເຜົ່າເຕີອາງມີພາສາ ແລະ ຕົວໜັງສືຂອງຕົນຈັດຢູ່ໃນສາຂາຫວາເຕີອາງໝວດພາສາມອນ-ຂະແມຕະກຸນພາສາອັອດສະໂຕຣອາເຊຍຕິກ,ແຕ່ຕົວໜັງສືເຜົ່າເຕີອາງບໍ່ໄດ້ເຜີຍແຜ່ຢ່າງກວ້າງຂວາງປານໃດ,ຕົ້ນຕໍແມ່ນໃຊ້ໃນການບັນທຶກປະຫວັດສາດ,ສິນທຳ,ກົດລະບຽບຂອງຊົນເຜົ່າຕົນ ແລະ ຂຽນຄຳພີພຸດທະສາສະໜາ.ປະຊາຊົນເຜົ່າເຕີອາງຫຼາຍຄົນຍັງຮູ້ພາສາເຜົ່າລື້,ພາສາເຜົ່າຫານ ແລະ ພາສາເຜົ່າຈິງໂພ່.

ວັນນະຄະດີເຜົ່າເຕີອາງຕົ້ນຕໍແມ່ນວັນນະຄະດີພື້ນເມືອງ,ມີຫຼາຍຮູບຫຼາຍແບບ,ເຊັ່ນ,ເທບນິຍາຍ,ນິທານ,ມະຫາກາບ(ບົດກາບກອນປະຫວັດສາດ),ສຸພາສິດ,ເລື່ອງຕະຫຼົກ,ແລະ ບົດກະວີເປັນຕົ້ນເຊິ່ງສ່ວນຫຼາຍແມ່ນສືບທອດກັນມາແບບປາກຕໍ່ປາກ,ໃນນັ້ນຈຳນວນໜຶ່ງແມ່ນຈົດບັນທຶກດ້ວຍພາສາເຜົ່າລື້,ຫຼືໃຊ້ໜັງສືເຜົ່າລື້ຕາມການຜັນສຽງຂອງພາສາເຜົ່າເຕີອາງ,ເຊິ່ງປາກົດເປັນ "ເພງບູຮານ",ຕົວຢ່າງວ່າ,"ດາກູດາເລີງເກີໄລປຽວ".

ເຜົ່າເຕີອາງຖືການຜະລິດກະສິກຳເປັນຫຼັກ,ກໍ່ມີຄວາມຊຳນານໃນການປູກຊາ,ແລະ ຖືກເອີ້ນວ່າ "ຊາວປູກຊາມາແຕ່ບູຮານ".ໃບຊາແມ່ນແຫຼ່ງລາຍໄດ້ທີ່ສຳຄັນສຳລັບເຜົ່າເຕີອາງ.ໃນເວລາດົນນານມານີ້,ເຜົ່າເຕີອາງກໍ່ມີຊ່າງເງິນຂອງຕົນ,ສາມາດຜະລິດປອກເງິນ,ສາຍແຂນເງິນ,ສາຍຄໍເງິນ,ກະດຸມເງິນ,ຍັງມີຄວາມຊຳນານໃນການແກະສະຫຼັກລວດລາຍຢູ່ເທິງເຄື່ອງເງິນຊະນິດຕ່າງໆຢ່າງງາມປະນີດ.

ເຜົ່າເຕີອາງຍັງມີສິລະປະເຄື່ອງຖັກແສ່ວ,ສະຖາປັດຕະຍະກຳ ແລະ ຮູບແກະສະຫຼັກຢ່າງອຸດົມສົມບູນ.ສິລະປະສະຖາປັດຕະຍະກຳ ແລະ ແກະສະຫຼັກຂອງເຜົ່າເຕີອາງເຄີຍມີຍຸກສະໄໝອັນສະຫງ່າລາສີໃນປະຫວັດສາດ,ປະຈຸບັນ,ຢູ່ບາງທ້ອງຖິ່ນຍັງຄົງມີຊາກອາຄານຂອງສິ່ງກໍ່ສ້າງທີ່ສ້າງຂຶ້ນໂດຍເຜົ່າເຕີອາງ.ເຜົ່າເຕີອາງຍັງມີສີມືຜະລິດດິນຈີ່ ແລະ ເຄື່ອງປັ້ນດິນເຜົາໃນລະດັບສູງ.ເສື້ອຜ້າຂອງເຜົ່າເຕີອາງມີສີສັນຊົນເຜົ່າຢ່າງເຂັ້ມຂຸ້ນ,ໄດ້ສະແດງໃຫ້ເຫັນເຖິງທັດສະນະຄວາມງາມ ແລະ ການສະແຫວງຫາຄວາມງາມແບບພິເສດຂອງເຜົ່າເຕີອາງ.

ຈຸດພິເສດຂອງເສື້ອຜ້າແມ່ຍິງເຜົ່າເຕີອາງມີຢູ່ວ່າ,ຖືເສັ້ນຫວາຍມັດແອວເປັນເຄື່ອງເອ້. ເຄື່ອງເອ້ປະດັບຫົວຂອງແມ່ຍິງເຜົ່າເຕີອາງມີຈຸດພິເສດອັນພົ້ນເດັ່ນ.ເພດຍິງຂອງເຜົ່າເຕີອາງຈະບໍ່ຈິ່ງຜົມ,ລ້ວນແຕ່ແຖເປັນຫົວລ້ານ,ແລະເອົາຜ້າພັນຫົວ,ສອງສົ້ນຂອງຜ້າພັນຫົວປ່ອຍຢູ່ທາງຫຼັງເໝືອນດັ່ງຜົມເປຍ.ໃນເຄື່ອງເອ້ຂອງເຜົ່າເຕີອາງ,ອັນທີ່ປະຈັກຕາທີ່ສຸດກໍ່ແມ່ນລູກຂົນຫ້າສີ,ຜູ້ບ່າວຈະຫ້ອຍລູກຫ້າສີມັດເປັນຮ້ອຍຢູ່ໜ້າເອິກ,ຜູ້ສາວກໍ່ຈະປະດັບລູກຂົນຢູ່ນອກຄໍເສື້ອ.ຜູ້ຊາຍຈະໃຊ້ຜ້າສີດຳ ແລະ ສີຂາວພັນຫົວ,



ໃສ່ຕຸ້ມຫູໃຫຍ່,ແລະ ສາຍຄໍເງິນ,ສ່ວນຫຼາຍຈະໃສ່ເສື້ອສີຟ້າແກ່,ແລະໂສ້ງສົ້ນຂາກວ້າງ.

# ການແນະນຳເຄື່ອງຊົງນ້ຳຊາປະເພດຕ່າງໆ

## 不同茶类的冲泡茶器介绍

冲泡茶叶，除了好茶、好水外，还离不开好的器皿。日常生活中，选择使用什么茶具，需要根据茶叶的种类、人数以及各地饮茶习惯而定。

ໃນເວລາຊົງນ້ຳຊາ,ນອກຈາກຕ້ອງມີໃບຊາ ແລະ ນ້ຳທີ່ດີແລ້ວ,ຍັງຂາດເຄື່ອງຊົງນ້ຳຊາທີ່ດີບໍ່ໄດ້.ໃນຊີວິດປະຈຳວັນ,ການຈະເລືອກເຄື່ອງຊົງນ້ຳຊາແນວໃດ,ແມ່ນຕ້ອງອີງຕາມປະເພດໃບຊາ,ຈຳນວນຄົນ ແລະ ຄວາມຊິນເຄີຍກ່ຽວກັບການດື່ມນ້ຳຊາຂອງທ້ອງຖິ່ນຕ່າງໆ.

ໜຶ່ງ, ຊາຂຽວ: ຊາລົງຈິງຂອງໝອງຊີ່ຫູ,ຊາປີ້ລົວຊຸ່ນຂອງໝອງຕົ້ງຖິງ,ຊາອິນເຈິ່ນຂອງພູຈຸ່ນຊ່ານ,ຊາມາວເຟິງຂອງພູຫວງສ່ານ ແລະ ອື່ນໆ,ເຊິ່ງເປັນຊາຂຽວທີ່ມີຄວາມນຸ້ມດີ ແລະ ມີລາຄາສູງ,ຄວນໃຊ້ຈອກແກ້ວທີ່ໂປ່ງໃສໃນການຊົງນ້ຳຊາ.ສຳລັບຊາຂຽວລະດັບກາງ ແລະ ສູງ,ເຊັ່ນ,ຊາວຊິ່ງ,ຈູຊາ,ແລະ ຫົ່ງຊິ່ງເປັນຕົ້ນ,ແມ່ນໃຊ້ນາຈິບ ແລະ ແກ້ຄວາມຫິວນ້ຳ,ຄວນຊົງນ້ຳຊາດ້ວຍຈອກເຄື່ອງເຄືອບ.ຊາຂຽວລະດັບກາງ ແລະ ລະດັບຕ່ຳມີທາດໃຍຫຼາຍ,ມີກິ່ນປຸກ ແລະ ທົນທານຊົງໄດ້ຫຼາຍເທື່ອ,ຄວນໃຊ້ເຕົ້ານ້ຳຊາ.ຖ້າວ່າໃຊ້ເຕົ້ານ້ຳຊາຊົງໃບຊາທີ່ນຸ້ມດີ,ຈະມີນ້ຳຫຼາຍ ແລະ ອຸນຫະພູມຫຼຸດຕ່ຳລົງຍາກ,ເຮັດໃຫ້ໃບຊາຖືກຕົ້ມຈົນສຸກ,ເຮັດໃຫ້ໃບຊາເສຍກິ່ນຫອມແຫ່ງຄວາມສົດຊື່ນ.

ສອງ,ຊາແດງ: ຕາມປົກກະຕິແລ້ວ,ການຊົງຊາແດງລະດັບສູງ ແລະ ຊາແດງຊຽວຈົງນັ້ນ,ຈະເລືອກເອົາຖ້ວຍທີ່ມີຝາ,ເຊິ່ງເປັນເຄື່ອງເຄືອບສີຂາວ ແລະ ເຮັດດ້ວຍແກ້ວ.ໃນດ້ານໜຶ່ງ,ນ້ຳຊາແດງລະດັບສູງຈະມີສີແດງສົດໆ,ເຄື່ອງເຄືອບທີ່ເປັນສີຂາວ ແລະ ສີນ້ຳນົມນັ້ນຈະສະແດງໃຫ້ເຫັນສີນ້ຳຊາແດງຢ່າງແທ້ຈິງ,ເຊິ່ງສະດວກໃຫ້ແກ່ການຊື່ນຊົມສີນ້ຳຊາ.ໃນອີກດ້ານໜຶ່ງ,ການໃຊ້ຖ້ວຍມີຝາຈະສາມາດແຜ່ກິ່ນຫອມ ແລະ ລົດຊາດຂອງຊາແດງ,ຈະບໍ່ທຳລາຍລົດຊາດຂອງໃບຊາ,ເຊິ່ງ

ສະດວກໃຫ້ແກ່ການຊີມນໍ້າຊາ ແລະ ດົມກິ່ນຫອມ.ສໍາລັບຊາແດງຮູບແທ່ນແລ້ວ,ເຕົ້າຊົງນໍ້າຊາທີ່ເປັນເຄື່ອງປັ້ນດິນເຜົາຈີຊ່າຈະເປັນທາງເລືອກທີ່ດີ,ຈະເຮັດໃຫ້ຊາແດງມີລົດຊາດອັນເຂັ້ມຂຸ້ນເປັນເວລາດົນ.

ສາມ,ຊາອູໂລງ: ຊາອູໂລງຕົ້ນຕໍແບ່ງອອກເປັນ 4 ປະເພດ,ຄື: ຊາອູໂລງມິນນານ(ເຊັ່ນ:ເທຍກ່ວນອິ່ນ),ຊາອູໂລງມິນເປີຍ(ເຊັ່ນ: ຕ້າຫົງພາວ),ຊາອູໂລງກວາງຕຸ້ງ(ເຊັ່ນ: ຕ່ານຊົງ),ແລະ ຊາອູໂລ່ງໄຕ້ຫວັນ(ເຊັ່ນ: ອູໂລງຕົ້ງຕິງ).ສໍາລັບຊາອູໂລງມິນນານ,ໂດຍສະເພາະແມ່ນເທຍກ່ວນອິ່ນແລ້ວ,ນອກຈາກຈິບຊີມນໍ້າຊາ ແລະ ດົມກິ່ນຫອມແລ້ວ,ການແຍງເບິ່ງຄວາມງາມຂອງໃບຊາກໍ່ສໍາຄັນຫຼາຍ,ຖ້າຊີມດ້ວຍຖ້ວຍມີຝາແລ້ວກໍມີຄວາມສະດວກໃຫ້ແກ່ຜູ້ດື່ມນໍ້າຊາໃນການຊົມຄວາມງາມຂອງໃບຊາ ແລະ ດົມກິ່ນຫອມ.ສໍາລັບຊາອູລົງມິນເປີຍ ແລະ ຊາອູໂລງກວາງຕຸ້ງແລ້ວ,ການຊົງນໍ້າຊາດ້ວຍຖ້ວຍມີຝາຈະສາມາດເຮັດໃຫ້ໃບຊາມີລົດຊາດ ແລະ ກິ່ນຫອມຍິ່ງຂຶ້ນ,ຖ້າຊົງດ້ວຍເຕົ້າເຄື່ອງປັ້ນດິນເຜົາຈີຊ່າ,ຈະເຮັດໃຫ້ນໍ້າຊາມີລົດຊາດອັນເຂັ້ມຂຸ້ນ,ກິ່ນຫອມກໍບໍ່ຈືດຈາງຫ່າງຫາຍໄປ.ການຊົງນໍ້າຊາດ້ວຍເຕົ້ານໍ້າຊາຈີຊ່າ,ຄວນໃຊ້ເຕົ້າໜ່ວຍດຽວໂດຍສະເພາະໃນການຊົງນໍ້າຊາຊະນິດໜຶ່ງ,ບໍ່ຄວນໃຊ້ເຕົ້າໜ່ວຍດຽວຊົງນໍ້າຊາຫຼາຍຊະນິດ,ຖ້າບໍ່ດັ່ງນັ້ນຈະເຮັດໃຫ້ລົດຊາດນໍ້າຊາປົນກັນ.

ສີ່, ຊາດອກໄມ້: ການຊົງນໍ້າຊາດອກໄມ້ລະດັບສູງ, ເຊັ່ນ,ຊາມາວເຟິງ,ຊາອິ່ນຫາວ ແລະ ຊາໂລງຈູ່ ທີ່ມີໃບຊານຸ້ມດີນັ້ນ,ຄວນໃຊ້ຈອກແກ້ວທີ່ໂປ່ງໃສ.ໃນເວລາຊົງນໍ້າຊາ,ວາງຈອກໄວ້ໃນຈານຮອງ,ໃສ່ໃບຊາ 2-3 ກຼາມ,ຊົງດ້ວຍນໍ້າຮ້ອນທີ່ມີອຸນຫະພູມປະມານ 90 ອົງສາ,ຫຼັງຈາກນັ້ນກໍ່ອັດຝາໄວ້ເພື່ອປ້ອງກັນບໍ່ໃຫ້ກິ່ນຫອມຈາງຫາຍໄປ. ການຊົງໃບຊາດອກໄມ້ລະດັບກາງ,ຄວນໃຊ້ຈອກເຄື່ອງເຄືອບສີຂາວທີ່ມີຝາອັດ,ຊົງດ້ວຍນໍ້າຮ້ອນ 100 ອົງສາແລ້ວອັດຝາໄວ້,ຫຼັງຈາກນັ້ນປະມານ 5 ນາທີກໍ່ດົມກິ່ນຫອມ ແລະ ຊີມລົດຊາດຂອງນໍ້າຊາ.ການຊົງນໍ້າຊາດອກໄມ້ລະດັບກາງ ແລະ ຕໍ່າຫຼືຝຸ່ນຊາດອກໄມ້,ຄວນໃຊ້ເຕົ້ານໍ້າຊາທີ່ເປັນເຄື່ອງເຄືອບສີຂາວ,ຍ້ອນວ່າມີນໍ້າຮ້ອນອ່າວຫຼາຍໃນເຕົ້ານໍ້າຊາ,ຈຶ່ງສາມາດຮັກສາຄວາມຮ້ອນດີກວ່າຈອກຊາ.


丰清 图





文／杨晓梅 蓝 天

## 一、日常用语 ຄຳເວົ້າທີ່ໃຊ້ປະຈຳວັນ

### 情景会话：聊聊名人苏轼

### ສົນທະນາ: ລົມກັບທ່ານຊູຊື (sushi) ຄົນຊື່ດັງ

nǐ zhī dào xí jìn píng yòng diǎn zhōng
A. 你知道《习近平用典》中

yǐn yòng diǎn gù zuì duō de gǔ dài míng
引用典故最多的古代名

rén shì shuí ma
人是谁吗？

ທ່ານຮູ້ຈັກບໍ່ວ່າ《ທ່ານສີຈິ້ນຜິງນຳໃຊ້ສຳນວນບູຮານ》ແມ່ນໄດ້ນຳໃຊ້ຂອງຜູ້ໃດຫຼາຍກວ່າໝູ່?

dāng rán zhī dào shì sòng dài wén xué
B. 当然知道！是宋代文学

jiā zhèng zhì jiā sū shì xí zǒng shū ji
家、政治家苏轼。习总书记

duō cì biǎo shì tā hěn xǐ huan sū shì de
多次表示他很喜欢苏轼的

yí jù míng yán zuò guān qí biàn ér bù
一句名言："坐观其变而不

wéi zhī suǒ zé kǒng zhì yú bù kě jiù zhè
为之所，则恐至于不可救。"这

duàn huà biǎo dá de sī xiǎng shì zuò guān
段话表达的思想是"坐观

qí biàn ér bú duì huò luàn cǎi qǔ cuò shī
其变"而不对祸乱采取措施，

nà me huò luàn jiù huì fā zhǎn dào wú kě
那么祸乱就会发展到无可

wǎn huí de dì bù
挽回的地步。

ແນ່ນອນຮູ້ຈັກ.ແມ່ນຂອງທ່ານ ຊູຊື ນັກວັນນະຄະດີ,ນັກການເມືອງລາຊະວົງສົ້ງ.ທ່ານ ສີຈິ້ນຜິງ ກ່າວຫຼາຍເທື່ອວ່າ,ທ່ານມັກຄຳສຸພາສິດຄຳໜຶ່ງຂອງທ່ານ ຊູຊື ທີ່ວ່າ,ນັ່ງເບິ່ງການປ່ຽນແປງຂອງມັນ,ແຕ່ບໍ່ນຳໃຊ້ມາດຕາການປະຕິບັດຮັບມືຕໍ່ໄພພິບັດ,ໄພພິບັດກໍຈະຕ້ອງຂະຫຍາຍເຖິງບາດກ້າວທີ່ກອບກູ້ເອົາຄືນບໍ່ໄດ້.

shì de sū shì bú dàn shì sòng dài zuì
A. 是的，苏轼不但是宋代最

zhù míng de wén xué jiā ér qiě yě shì
著名的文学家，而且也是

zhèng zhì jiā
政治家。

ແມ່ນແທ້,ທ່ານຊູຊືບໍ່ພຽງແຕ່ເປັນນັກວັນນະຄະດີທີ່ມີຊື່ສຽງໂດ່ງດັງສຸດເທົ່ານັ້ນທັງເປັນນັກການເມືອງລາຊະວົງສົ້ງອີກດ້ວຍ.

wǒ zhī dào tā wéi guān nián jīng lì guò
B. 我知道他为官40年，经历过

sān cì jù dà de cuò zhé dàn yì zhí jiān chí
三次巨大的挫折，但一直坚持

wéi guān yǐ mín wéi běn lǐ zhèng yǐ lián
为官以民为本，理政以廉

wéi shàng
为上。

ຂ້ອຍຮູ້ຈັກລາວເປັນເຈົ້ານາຍ 40 ປີ,ໄດ້ປະສົບຄວາມພ່າຍແພ້ອັນມະຫາສານ 3 ຄັ້ງ,ແຕ່ວ່າ,ລາວຍັງຄົງຍຶດໝັ້ນເປັນເຈົ້ານາຍຖືປະຊາຊົນເປັນກົກ,ປົກຄອງລັດດ້ວຍຈິດໃຈກົງໄປກົງມາສຸດຈະລິດເປັນຫຼັກ.

sū shì de fù qīn shì sū xún jí sān zì
A. 苏轼的父亲是苏洵，即《三字

jīng lǐ tí dào de èr shí qī shǐ fā fèn
经》①里提到的"二十七，始发奋"

de sū lǎo quán sū shì qí míng shì yuán
的"苏老泉"。苏轼其名"轼"，原

yì wéi chē qián de fú shǒu qǔ qí mò mò wú
意为车前的扶手，取其默默无

wén què fú wēi jiù kùn bù kě huò quē zhī
闻却扶危救困，不可或缺之

yì sū shì chéng míng hòu de bié chēng shì
意；苏轼成名后的别称是

sū dōng pō
苏东坡。

ພໍ່ຂອງທ່ານຊູຊືແມ່ນ ຊູຊຸນ,ຄື:ຢູ່ໃນ《ຄຳພີສາມໂຕ》ເວົ້າວ່າ "ຊາວເຈັດປີ,ເລີ່ມບາກບັ່ນ"ກໍແມ່ນ ຊູລາວຊວຽນ ແລ້ວ.ຊື່ ຊູຊື ຂອງລາວເຊິ່ງມີຄວາມໝາຍເດີມແມ່ນຮາວຂອງລົດແກວນ,ນຳເອົາຊື່ສຽງໂດ່ງດັງ,ຊ່ວຍພັດອຸ້ມຊູຄວາມອັນຕະລາຍ,ກອບກູ້ເອົາຄົນທຸກຍາກ.ທີ່ມີຄວາມໝາຍຂາດເຂີນບໍ່ໄດ້.ຫລັງຈາກ ຊູຊື ມີຊື່ສຽງແລ້ວ,ປ່ຽນຊື່ເປັນຊູຕຸງໂພ.

ò zhè ge wǒ zhī dào sū dōng pō hái shì
B. 哦，这个我知道，苏东坡还是

měi shí jiā zhù míng de cài yáo dōng pō
美食家，著名的菜肴"东坡

ròu jiù shì sū dōng pō chuàng zhì de ma
肉"就是苏东坡创制的嘛！

ໂອ໋,ອັນນີ້ຂ້ອຍຮູ້ຈັກເດີ, ທ່ານ ຊູຕຸງໂພ ຍັງເປັນນັກແຕ່ງອາຫານທີ່ແຊບນົວ,ອາຫານຊີ້ນໝູຕຸງໂພທີ່ມີຊື່ສຽງກໍແມ່ນທ່ານຊູຕຸງໂພຄົ້ນຄິດຜະລິດສ້າງອອກມາ.

guān yú tā de zhè yì shēng hòu rén yǒu
A. 关于他的这一生，后人有

xǔ duō píng jià qí zhōng lín yǔ táng de
许多评价，其中林语堂的

gài kuò hěn yǒu yì si shuō sū shì shì yí
概括很有意思，说苏轼是"一

gè bǎi xìng de péng yǒu yí gè dà wén háo
个百姓的朋友、一个大文豪、

dà shū fǎ jiā chuàng xīn de huà jiā yí
大书法家、创新的画家、一

wèi yú jiā xiū xíng zhě fó jiào tú jù rú
位瑜伽修行者佛教徒、巨儒

zhèng zhì jiā yí gè huáng dì de mì shū
政治家、一个皇帝的秘书、

jiǔ xiān hòu dào de fǎ guān yí wèi zài
酒仙、厚道的法官、一位在

zhèng zhì shàng zhuān chàng fǎn diào de
政治上专唱反调的

rén
人。"

ຖືກແລ້ວ,ກ່ຽວກັບໄລຍະຊົ່ວຊີວິດຂອງທ່ານ,ຜູ້ຄົນລຸ້ນຫລັງຕີລາຄາດີຕໍ່ທ່ານແມ່ນມີຫຼາຍ,ໃນນັ້ນ,ຄຳຕີລາຄາຂອງທ່ານ ລິນຢູຖັງ ຕໍ່ຊູຕຸງໂພມີຄວາມໝາຍອີຫລີ,ທີ່ວ່າ:ເວົ້າວ່າຊູຕຸງໂພເປັນເພື່ອນຜູ້ໜຶ່ງຂອງລາຊະດອນ,ແມ່ນປາລາມາຈານວັນນະຄະດີທີ່ຍິ່ງໃຫຍ່ຜູ້ໜຶ່ງ,ນັກສິລະປະການຂຽນໂຕໜັງສືຈີນໃຫຍ່ຜູ້ໜຶ່ງ,ນັກແຕ້ມພາບປະດິດສ້າງໃໝ່ຜູ້ໜຶ່ງ,ສາສະນິກະຊົນສາສະໜາພຸດທີ່ບຳເພັນຢູກາຜູ້ໜຶ່ງ,ນັກການເມືອງຂົງຈື້ທີ່ຍິ່ງໃຫຍ່ຜູ້ໜຶ່ງ,ເລຂານຸການຜູ້ໜຶ່ງຂອງເຈົ້າຊີວິດ,ເທວະດາກິນເຫຼົ້າ,ຜູ້ພິພາກສາທີ່ຊື່ສັດຜູ້ໜຶ່ງ,ຜູ້ທີ່ມີຄວາມເຫັນສະເພາະຄັດຄ້ານທາງການເມືອງຜູ້ໜຶ່ງ.

duì rú guǒ xiǎng duì sū shì yǒu gèng jiā
B. 对，如果想对苏轼有更加

shēn rù de le jiě kě yǐ qù dú dú yǒu
深入的了解，可以去读读有

guān tā de yī xiē zhuàn jì hé shī zuò
关他的一些传记和诗作。

ຖືກແລ້ວ.ຖ້າຫາກວ່າ,ຈະຕ້ອງເຂົ້າໃຈຢ່າງເລິກເຊິ່ງຍິ່ງຂຶ້ນຕໍ່ຊູຊື,ຈຶ່ງໄປອ່ານເລື່ອງປະຫວັດ ແລະ ບົດປະພັນຂອງທ່ານໄດ້.

**注释：ໝາຍເຫດ:**

①《三字经》是中国古代经典中最通俗的读本。在格式上，三字一句朗朗上口，取材包括文学、历史、哲学、天文地理、人伦义理、忠孝节义等等，背诵《三字经》的同时，就了解了常识、传统国学及历史故事，以及故事内涵中的做人做事道理。

《ຄຳພີສາມໂຕ》ແມ່ນປຶ້ມອ່ານງ່າຍທີ່ສຸດໃນສຳນວນບູຮານຈີນ,ທາງດ້ານຮູບແບບສາມໂຕໜັງສືເປັນປະໂຫຍກໜຶ່ງອ່ານລ່ຽນດີເຊິ່ງເລືອກເອົາມາຈາກວັນນະຄະດີ,ປະຫວັດສາດ,ອຸຕຸນິຍົມ,ພູມີສາດ,ຄວາສຳພັນມະນຸດສາດ,ຊື່ສັດກະຕັນຍູ,ແລະ ອື່ນໆໃນຂະນະທ່ອງຂຶ້ນໃຈ《ຄຳພີສາມໂຕ》ນັ້ນ,ກໍຈະເຂົ້າໃຈຄວາມຮູ້ຮອບຕົວ,ປະຫວັດສາດບູຮານຄະດີທີ່ເປັນມູນເຊື້ອ,ແລະ ນິທານປະຫວັດສາດ ແລະ ເຫດຜົນເປັນຄົນຈາກເນື້ອໃນນິທານປະຫວັດສາດ.

## 二、词汇积累 ສະສົມຄຳສັບ

kǒng pà
恐怕 ຢ້ານວ່າ,ອາດຈະ

tiān qì mēn rè kǒng pà jiù yào xià yǔ le
天气闷热，恐怕就要下雨了。

ອາກາດຮ້ອນເອົ້າ,ອາດຈະມີຝົນຕົກລະ.

kuān
宽 ກວ້າງ

liè chē kāi dòng yǐ hòu yōng jǐ de chē
列车开动以后，拥挤的车

xiāng lüè wéi kuān sōng le yì xiē
厢略为宽松了一些。

ເມື່ອລົດໄຟອອກເດີນທາງແລ້ວ, ຕູ້ລົດທີ່ແອອັດຈະກວ້າງຂວາງເລັກນ້ອຍ.

kùn
困 ເມື່ອຍ

tā dǎ hā qian biǎo míng tā kùn le
她打哈欠表明她困了

ນາງຫາວນອນແລ້ວ,ສະແດງໃຫ້ເຫັນວ່ານາງເມື່ອຍແລ້ວ.

kùn nan
困难 ຫຍຸ້ງຍາກ

kùn nan shì kuáng fēng qiáng zhě shì fēng
困难是狂风，强者是风

zhōng de fān ruò zhě shì fēng zhōng de shā
中的帆，弱者是风中的沙。

ຄວາມຫຍຸ້ງຍາກແມ່ນລົມພະຍຸ,ຜູ້ເຂັ້ມແຂງແມ່ນໃບເຮືອໃນລົມພະຍຸຜູ້ອ່ອນແອແມ່ນຂີ້ຊາຍໃນລົມພະຍຸ.

kuò dà
扩大 ຂະຫຍາຍ

biān jí men zhèng zài tǎo lùn kuò dà zhàn
编辑们正在讨论扩大《占

bā fā xíng liàng de jiàn yì
芭》发行量的建议。

ບັນດາບັນນາທິການກຳລັງອະພິປາຍຂໍ້ສະເໜີກ່ຽວກັບການຂະຫຍາຍຈຳນວນພິມຈຳໜ່າຍຂອງວາລະສານຈຳປາ.

## 三、文化知识 ຄວາມຮູ້ວັດທະນະທຳ

**1. 但愿苍生俱饱暖，不辞辛苦出山林（dàn yuàn cāng shēng jù bǎo nuǎn bù cí xīn kǔ chū shān lín）。**

**ມີຄວາມປາຖະໜາໃຫ້ລາດຊະດອນກິນອີ່ມນຸ່ງອຸ່ນ,ບໍ່ຢ້ານທຸກຍາກເພື່ອປະຊາຊົນ.**

释义：本句出自明代名臣于谦所作的《咏煤炭》诗。作者以煤炭自喻，托物言志，抒发了自己为民效力的抱负和情怀。

ການອະທິບາຍຄວາມໝາຍ: ປະໂຫຍກນີ້ອອກມາຈາກກາບກອນຂອງເສນາບໍດີຕົງຊຽນລາຊະວົງໝິງ.ຜູ້ຂຽນອຸປະມາເອງດ້ວຍຖ່ານຫີນ, ເວົ້າຄວາມມຸ້ງມາດປາຖະໜາດ້ວຍວັດຖຸສິ່ງຂອງ,ລະບາຍຄວາມມຸ້ງມາດປາຖະໜາ ແລະ ອາລົມຈິດຂອງຕົນເພື່ອຮັບໃຊ້ປະຊາຊົນ.

解读：习近平在《干在实处 走在前列·在检查节日市场供应和物价情况时的讲话》等文中引用这句诗，就是要求各级干部以“天下大事，必作于细”的态度抓实做细民生工作，努力办实每件民生小事。他在不同场合都说过，“心无百姓莫为官”。为官一任，就要造福一方；手握公权，就要为民办事。

ການບັນລະຍາຍ: ຄຳໂອວາດຂອງທ່ານ ສີຈິ້ນຜິງ ກ່າວຢູ່ໃນ《ເຮັດແທ້ທຳຈິງ,ຍ່າງຢູ່ແຖວໜ້າ.ໃນເວລາກວດກາການສະໜອງຕະຫລາດວັນບຸນ ແລະ ສະພາບການລາຄາສິ່ງຂອງ》ໄດ້ນຳໃຊ້ຄຳກອນປະໂຫຍກດັ່ງກ່າວນີ້.ໝາຍຄວາມວ່າຮ້ອງຂໍພະນັກງານທຸກຂັ້ນຈະຕ້ອງຖືເອົາທ່າທີເຮັດວຽກບ້ານການເມືອງຈຳຕ້ອງເຮັດໃຫ້ລະອຽດລະອໍກໍາແໜ້ນເຮັດວຽກຊີວິດການເປັນຢູ່ຂອງປະຊາຊົນໃຫ້ລະອຽດ,ພະຍາຍາມເຮັດວຽກນ້ອຍຊີວິດການເປັນຢູ່ຂອງປະຊາຊົນທຸກປະການໃຫ້ດີ.ທ່ານໄດ້ເຄີຍເວົ້າຫຼາຍເທື່ອໃນສະພາບແວດລ້ອມແຕກຕ່າງກັນ.“ໃນໃຈບໍ່ມີປະຊາຊົນຢ່າເປັນເຈົ້ານາຍ”.ເປັນເຈົ້ານາຍສະໄໝໜຶ່ງ,ກໍຈະຕ້ອງສ້າງຄວາມຜາສຸກແກ່ປະຊາຊົນ;ມີກຳສິດອຳນາດ,ກໍຈະຕ້ອງເຮັດວຽກໃຫ້ປະຊາຊົນ.

**2. 乐民之乐者，民亦乐其乐；忧民之忧者，民亦忧其忧（lè mín zhī lè zhě mín yì lè qí lè yōu mín zhī yōu zhě mín yì yōu qí yōu）**

**ຜູ້ທີ່ເພື່ອຄວາມມ່ວນຊື່ນຂອງປະຊາຊົນເປັນຄວາມມ່ວນຊື່ນ,ປະຊາຊົນກໍຈະຖືຄວາມມ່ວນຊື່ນຂອງລາວເປັນຄວາມມ່ວນຊື່ນ.ຜູ້ທີຖືຄວາມທຸກຂອງປະຊາຊົນເປັນຄວາມທຸກ,ປະຊາຊົນກໍຈະຕ້ອງຖືຄວາມທຸກຂອງລາວເປັນຄວາມທຸກ.**

释义：上面这段话是孟子①对齐宣王②说的。意思是说，以百姓的快乐为快乐的人，百姓也会以他的快乐为快乐；以百姓的忧愁为忧愁的人，百姓也会以他的忧愁为忧愁。孟子认为人民是国家的主体，君主要想保证邦固国宁，就必须得民心、顺民意，与民同乐，这样才能得到人民的爱戴拥护。【注：①孟子（约公元前 372 年 – 公元前 289 年）是孔子学说的继承者，儒家的重要代表人物，因孔子被尊为圣人，所以世人尊称孟子为“亚圣”，并将两人的思想合称为“孔孟之道”；②齐宣王是战国时期的齐国第五代国君（公元前 319 —公元前 301 年在位），在位期间集中了儒、墨、道、法等各学派的学人，著书立说，开展学术研究，形成了前所未有的百家争鸣，创造了中国灿烂的“先秦文化”。】

ການອະທິບາຍຄວາມໝາຍ:ມົ້ງຈືເວົ້າຕໍ່ກັບເຈົ້າຊີວິດຈີຊວຽນຫວາງ, ມົ້ງຈືເຫັນວ່າ,ປະຊາຊົນເປັນສ່ວນປະກອບຫຼັກຂອງລັດ,ເຈົ້າແຜ່ນດິນຢາກຮັບປະກັນລັດໝັ້ນຄົງສະຫງົບ,ກໍຈຳຕ້ອງໄດ້ຮັບຄວາມນິຍົມຈາກປະຊາຊົນ,ຖືກໃຈກັບປະຊາຊົນ,ຮ່ວມທຸກຮ່ວມສຸກກັບປະຊາຊົນ,ເມື່ອເປັນແນວນີ້ແລ້ວ,ຈຶ່ງຈະໄດ້ຮັບການອຸ້ມຊູ ແລະ ສະໜັບສະໜູນຈາກປະຊາຊົນ.ໝາຍເຫດ: (1). ມົ້ງຈືແມ່ນຜູ້ສືບຕໍ່ຂອງຫຼັກສູດຂົງຈື (ກ່ອນ ຄ.ສ ປີ 372– ກ່ອນ ຄ.ສປີ 289).ບຸກຄົນຕົວແທນທີ່ສຳຄັນຂອງຫຼັກສູດຂົງຈື.ເນື່ອງຈາກວ່າ,ຂົງຈືຖືກເອີ້ນວ່ານັກປັດຊະຍາ,ດັ່ງນັ້ນ,ຜູ້ຄົນໂລກເອີ້ນລາວເປັນນັກປັດຊະຍາສຳຮອງ.ເອົາແນວຄິດທັງສອງຄົນເອົາເປັນທິດສະດີຂົງມົ້ງ; (2).ເຈົ້າຊີວິດຈີຊວຽນຫວ່າງເປັນສະໄໝທີ 5 ຂອງລັດຈີໃນສະໄໝຈັນກວາ(ກ່ອນ ຄ.ສ ປີ 319-- ກ່ອນ ຄ.ສ ປີ 301 ປະຈຳໜ້າທີ່).ໃນໄລຍະຄອງອຳນາດນັ້ນ,ໄດ້ລວມສູນນັກຮຽນຮູ້ທຸກພາກຝ່າຍຄື:ຂົງຈື,ເມີຈື,ຕ່າວ, ຝາ,ແຕ່ງປຶ້ມຕັ້ງຫຼັກສູດ,ດຳເນີນການຄົ້ນຄວ້າວິຊາການ,ໄດ້ປະດິດສ້າງເປັນວັດທະນະທຳກ່ອນລາຊະວົງສິນທີ່ຮຸ່ງເຮືອງເຫຼືອງເຫຼື້ອມຂອງຈີນ.

解读：习近平在《之江新语·为民办实事成于务实》等文中引用这段话，就是要强调，鱼水之情从来都是相互的，党员干部如果能够倾心为民，乐民之乐、忧民之忧，群众同样会以德报德，这样就能赢得群众发自内心的拥护和支持，实现党群关系的良性互动，在新时期重叙鱼水情谊。

ການອະທິບາຍ: ທ່ານສີຈິ້ນຜິງນຳໃຊ້ປະໂຫຍກນີ້ຢູ່ໃນບົດຄວາມ《ຈືຈຽງຊິນຢູ,ເຮັດວຽກເພື່ອປະຊາຊົນ,ຈະໄດ້ຮັບຜົນສຳເລັດຢູ່ນຳເຮັດແທ້ທຳຈິງ》.ກໍແມ່ນເນັ້ນໜັກຄວາມຮັກແພງລະຫວ່າງປາກັບນ້ຳແຕ່ໃດມາກໍເປັນສິ່ງເພິ່ງພາເຊິ່ງກັນ ແລະ ກັນ.ພະນັກສະມາຊິກພັກຖ້າຫາກວ່າຕັ້ງໃຈເພື່ອປະຊາຊົນ,ຜູ້ທີ່ເພື່ອຄວາມມ່ວນຊື່ນຂອງປະຊາຊົນເປັນຄວາມມ່ວນຊື່ນ,ປະຊາຊົນກໍຈະຖືຄວາມມ່ວນຊື່ນຂອງລາວເປັນຄວາມມ່ວນຊື່ນ.ຜູ້ທີ່ຖືຄວາມທຸກຂອງປະຊາຊົນເປັນຄວາມທຸກ,ປະຊາຊົນກໍຈະຕອ້ງຕອບບຸນແທນຄຸນເໝືອນກັນ.ເມືອເປັນແນວນີ້ແລ້ວ,ກໍຈະໄດ້ຮັບການສະໜັບສະໜູນ ແລະ ອຸ້ມຊູຈາກປະຊາຊົນທີ່ເກີດມາຈາກໃນດວງໃຈ.ບັນລຸເຖິງການຊ່ອຍຊູກັນຄວາມພົວພັນລະຫວ່າງພັກກັບປະຊາຊົນໄດ້,ໃນໄລຍະໃໝ່ຈະຕ້ອງເວົ້າມິດຕະພາບຄວາມພົວພັນລະຫວ່າງປາກັບນ້ຳອີກ.




SKY supermarket

# SKY SUPERMARKET 入驻爱的市场




ຕະຫຼາດໄອເຕັກ 爱的商場 ITECC MARKET CHỢ ITECC

ທ່າແຮງ

1.ທ່າແຮງດ້ານທີ່ຕັ້ງ:ເປັນຊັບພະສິນຄ້າແບບກວມລວມທີ່ໃຫຍ່ທີ່ສຸດໃນປະເທດ,ການຄົມມະນາຄົມສະດວກສະບາຍ,ຫ່າງຈາກໃຈກາງເມືອງປະມານ10ນາທີ. ໄລຍະຫ່າງທາງຊື່ ຈາກທາດຫລວງປະມານ2000ແມັດ,ຫ່າງຈາກຫໍປະຊຸມແຫ່ງຊາດ20ແມັດ,ຈຳນວນຄົນ–ມາແຕ່ລະມື້ບໍ່ຫລຸດ30,000ເທື່ອຄົນ.

2.ທ່າແຮງດ້ານສິ່ງອຳນວຍຄວາມສະດວກຄົບວົງຈອນ:ມີບ່ອນຈອດລົດໃຫຍ່3000ບ່ອນ,ບ່ອນຈອດລົດຈັກ20,000ບ່ອນ.ເນື້ອທີ່ດຳເນີນທຸລະກິດ70,000ຕາແມັດ.ມີເຄື່ອງເຢັນໃຫ້ບໍລິການຕະຫລອດມື້.ມີສູນຊັບພະສິນຄ້າຂະໜາດໃຫຍ່SKY SUPER MARKET ໂດຍການລົງທຶນຈາກຮົງກົງ ເປັນຜູ້ບໍລິຫານ.ມີສິນຄ້າເຄື່ອງນຸ່ງ,ເຄື່ອງສຳອາງ,ເຄື່ອງເພັດປະດັບ ແລະ ເຄື່ອງໄອທີໂທລະສັບຕ່າງໆ ໃຫ້ທ່ານເລືອກຊື້.ເປັນຮ້ານຄ້າປອດພາສີພຽງຮ້ານດຽວໃນປະເທດ,ມີເຂດໃຫ້ບໍລິການອາຫານທີ່ໃຫຍ່ທີ່ສຸດໃນປະເທດ ແລະ ມີສວນນ້ຳທີ່ໃຫຍ່ທີ່ສຸດໃນປະເທດ ຄອຍບໍລິການທ່ານ. ມີຫ້ອງຈັດງານລ້ຽງ – ງານດອງ ແລະ ລົດທ່ຽວຊົມ ຄອຍໃຫ້ບໍລິການທ່ານ. ເປັນສູນຊັບພະສິນຄ້າທີ່ໃຫຍ່ທີ່ສຸດໃນປະເທດ ທີ່ໃຫ້ບໍລິການດ້ານການພັກຜ່ອນ,ການເລືອກຊື້ສິນຄ້າ,ການກິນ,ການນຸ່ງ– ຮົ່ມ, ທີ່ພັກອາໄສ, ການນຳໃຊ້ ແລະ ການເດີນທາງ ຢ່າງຄົບວົງຈອນ.

3.ທ່າແຮງດ້ານວິຊາສະເພາະ:ມີທີມງານບໍລິຫານ–ຄຸ້ມຄອງ ທີ່ມາຈາກຫລາຍຕົວເມືອງແຄມທະເລ ທີ່ພັດທະນາແລ້ວໃນທະວີບອາຊີ,ຊຶ່ງລ້ວນແຕ່ມີບົດຮຽນປະສົບການບໍລິຫານ–ຄຸ້ມຄອງການຄ້າຂະໜາດໃຫຍ່ ເປັນເວລາຫລາຍກວ່າ11ປີ, ມີຄວາມສາມາດໃນການຄຸ້ມຄອງ–ບໍລິຫານທີ່ດີເລີດ,ມີການວິເຄາະຕົວເລກການຕະຫລາດທີ່ແມ່ນຍຳ. ມີຄວາມສາມາດວິເຄາະການປ່ຽນແປງຂອງຕະຫລາດຢ່າງມີພຶດໄຫວ.ເປັນກຳລັງໜຸ່ນຫລັງທີ່ແຂງແກ່ນ ໃຫ້ແກ່ການລົງທຶນຂອງທ່ານ.

4.ທ່າແຮງດ້ານລາຄາ:ລູກຄ້າທີ່ເຂົ້າມາຈັບຈອງຮ້ານຂອງພວກເຮົາ ຈະໄດ້ຮັບການຍົກເວັ້ນຄ່າບໍລິການ–ຄຸ້ມຄອງ,ຄ່າອານາໄມ,ຄ່າໄຟຟ້າ–ນ້ຳປະປາ,ເຊິ່ງທ່ານຈະບໍ່ໄດ້ຮັບພາລະຄ່າໃຊ້ຈ່າຍໃດໆອີກ.ຄ່າເຊົ່າຮ້ານສູງສຸດພຽງແຕ່88ໂດລາສະຫາລັດ/ແມັດກະເລ. ລູກຄ້າທີ່ເຊັນສັນຍາແລ້ວ ຈະໄດ້ຮັບຄູປ່ອງຊື້ສິນຄ້າໃນຊັບພະສິນຄ້າພວກເຮົາ ເຊິ່ງມີມູນຄ່າສູງສຸດ 1,000,000 ກີບ .ມີຄ່າເຊົ່າຫລາຍປະເພດໃຫ້ທ່ານເລືອກ,ເພື່ອອຳນວຍຄວາມສະດວກໃຫ້ແກ່ການໝູນວຽນເງິນທຶນຂອງທ່ານ

5.ທ່ານແຮງດ້ານເວລາ: ເວລາຄືເງິນ–ເງິນຄືເວລາ,ພວກເຮົາເປີດກິດຈະການ30ວັນ/ເດືອນ, 12ຊົ່ວໂມງ/ມື້ , ມີໄລຍະເຊົ່າຫລາຍປະເພດໃຫ້ທ່ານເລືອກ,ໄລຍະເວລາເຊົ່າສັ້ນທີ່ສຸດແມ່ນ1ປີ, ສາມາດຕອບສະໜອງຄວາມຕ້ອງການການລົງທຶນຂອງທ່ານໄດ້ຕະຫລອດເວລາ. ພວກເຮົາໃຫ້ຄຳໝັ້ນສັນຍາວ່າ ທຸກໆຮ້ານທີ່ໃຫ້ເຊົ່າຈະບໍ່ມີການຊື້–ຂາຍຮ້ານເດັດຂາດ,ມີແຕ່ໃຫ້ເຊົ່າເທົ່ານັ້ນ,ຊຶ່ງສາມາດຫລຸດຜ່ອນການໃຫ້ເຊົ່າຕໍ່ຂອງນັກລົງທຶນ,ເພື່ອເປັນການຫລຸດຜ່ອນຄວາມກົດດັນດ້ານຄ່າເຊົ່າໃຫ້ແກ່ລູກຄ້າ.

招商电话 ：020 – 5657 6161； 020 – 5657 5252. 座机：030 – 990 6666.

地址：爱的购物广场B1楼

# SKY SUPERMARKET ໄດ້ເປີດໃຫ້ບໍລິການແລ້ວໃນ ITECC MARKET

SKY supermarket






I. ເງື່ອນໄຂໃນການຊຳລະເງິນຄ່າເຊົ່າຮ້ານ

1. ເນື້ອທີ່ຂອງຮ້ານໃນ SYK SUPERMARKET ບໍ່ຄືກັນ, ທີ່ຕັ້ງກໍບໍ່ຄືກັນ, ດັ່ງນັ້ນ ລາຄາເຊົ່າກໍຈະບໍ່ຄືກັນ, ເຊິ່ງສາມາດຈັດແບ່ງເປັນປະເພດຕ່າງໆດັ່ງລຸ່ມນີ້: (ເບິ່ງໃນແຜນທີ່ໜ້າພຽງ ທີ່ຄັດຕິດມາພ້ອມ).

ປະເພດ A: 88 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ B: 78 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ C: 68 ໂດລາສະຫະລັດ ຕໍ່ ແມັດກາແລ

ປະເພດ D: 58 ໂດລາສະຫະລັດ ຕໍ່ ແມັດກາແລ

II. ນະໂຍບາຍພິເສດດັ່ງລຸ່ມນີ້:

A: ຊຳລະຄ່າເຊົ່າລ່ວງໜ້າ 3 ເດືອນ, ເງິນມັດຈຳລ່ວງໜ້າ 6 ເດືອນ, ສາມາດໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 300.000 ກີບ).

B: ຊຳລະຄ່າເຊົ່າລ່ວງໜ້າ 1 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 3%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 500.000 ກີບ).

C: ຊຳລະຄ່າເຊົ່າລ່ວງໜ້າ 2 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 7%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ໃບ (ມູນຄ່າ 800.000 ກີບ).

D: ຊຳລະຄ່າເຊົ່າລ່ວງໜ້າ 3 ປີ, ສາມາດໄດ້ຮັບສ່ວນຫລຸດຄ່າເຊົ່າ 10%, ໄດ້ຮັບຄູປອງສິນຄ້າ SKY ຈຳນວນ 1 ປີ (ມູນຄ່າ 1.000.000 ກີບ).

**一：铺位租赁价格付款条件**

1:SKY SUPERMARKET面积不同，位置不同，所以定价也就不　同，具体如下几种类型。(附平面图所示)

A类型每平方米SUD 88$元　　B类型每平方米SUD 78$元

C类型每平方米SUD 68$元　　D类型每平方米SUD 58$元

**二:优惠细则如下:**

A:按所选类型位置交纳3个月租金,6个月押金.可免费获得　SKY购物卡一张(价值300.000K)

B:按所选类型位置一次性交纳一年租金,可获得该金额的3%　的租金优惠.再送SKY购物卡一张(价值500.000K)

C:按所选类型位置一次性交纳两年租金,可获得该金额的7%　的租金优惠.再送SKY购物卡一张(价值800.000)

D:按所选类型位置一次性交纳三年租金,可获得该金额的　10%的租金优惠.再送SKY购物卡一张(价值1.000.000K):



ເບີໂທສອບຖາມ : 020 - 5657 6161; 020 - 5657 5252　　ເບີຕັ້ງໂຕະ : 030 - 990 6666

ສະຖານທີ່ : ຊັ້ນ B1 ຮ້ານຊັບປະສິນຄ້າລາວໄອເຕັກ

# SKY SUPERMARKET 入驻爱的市场

## ແນະນຳຫຍໍ້ກ່ຽວກັບ SKY SUPERMARKET

ບໍລິສັດ SKY supermarket ຮຸ້ນສ່ວນຮັບຜິດຊອບ ຈຳກັດ (ສາຂາປະຈຳປະເທດລາວ) ສ້າງຕັ້ງໃນປີ 2014 ເປັນບໍລິສັດແບບໃໝ່ທີ່ສ້າງຕັ້ງຂຶ້ນດ້ວຍເງິນລົງທຶນຂອງ ສປ ຈີນ ແລະ ຮົງກົງ. ໂດຍໄດ້ຮັບການສະໜັບສະໜູນຈາກລັດຖະບານ ແລະ ຂົງເຂດຕ່າງໆໃນສັງຄົມ, ໄດ້ກາຍມາເປັນຮ້ານຊັບພະສິນຄ້າທີ່ໃຫຍ່ທີ່ສຸດ ແລະ ດີທີ່ສຸດຂອງປະເທດ SKY supermarket (ITECC Branch, 6300 ຕາແມັດ 8 ເຖິງເວລານັ້ນ, ສາມາດສະໜອງ 100 ກວ່າຕຳແໜ່ງງານໃຫ້ກັບທ້ອງຖິ່ນ, ຈະກາຍເປັນສູນການຄ້າທີ່ໃໝ່ອ່ຽມໃຫ້ກັບປະຊາຊົນລາວ.

ບໍລິສັດ SKY ຖືເອົາການພັດທະນາເສດຖະກິດ ແລະ ສ້າງຄວາມຈະເລີນຮຸ່ງເຮືອງໃຫ້ກັບຕະຫຼາດເປັນໜ້າທີ່ຂອງຕົນ ບໍລິສັດ SKY ຈະຜ່ານການບໍລິຫານແບບວິຊາຊີບ, ການຄຸ້ມຄອງແບບເປັນລະບົບ, ການບໍລິການດ້ວຍມາດຕະຖານ ເພື່ອສ້າງເປັນວິສາຫະກິດດີເດັ່ນທີ່ທັນສະໄໝ ໂດຍຖືເອົາ ' ຜົນປະໂຫຍດຂອງລູກຄ້າເປັນຈຸດເລີ່ມຕົ້ນ, ຖືເອົາຊື່ສຽງຂອງບໍລິສັດເປັນຈຸດຢືນ " ເປັນຫຼັກການພື້ນຖານຂອງການເຮັດວຽກ, ສະໜອງການບໍລິການທີ່ດີເດັ່ນຢ່າງຮອບດ້ານ ແລະ ຫລາຍສະດັບໃຫ້ກັບລູກຄ້າ.

ປັດຈຸບັນ ບໍລິສັດ SKY ພວມອອກແຮງສ້າງສູນການຄ້າຂະໜາດໃຫຍ່ແຫ່ງທຳອິດຂອງລາວ ຄື SKY supermarket ບໍລິສັດ SKY ຈະນຳເອົາແນວຄວາມຄິດການບໍລິຫານວິສາຫະກິດຂາຍຍ່ອຍແບບສາກົນປະສານສົມທົບກັບຈຸດພິເສດຂອງຕະຫຼາດຂອງລາວ ເພື່ອສ້າງໃຫ້ເປັນສູນການຄ້າທີ່ມີການບໍລິການທີ່ດີເດັ່ນ, ມີລາຄາສິນຄ້າທີ່ຖືກ ແລະ ມີປະເພດສິນຄ້າທີ່ອຸດົມສົມບູນ ເພື່ອປະຊາຊົນລາວສາມາດສຳພັດກັບວິຖີຊີວິດຊອບປີ້ງກາງເມືອງທີ່ທັນສະໄໝດ້ວຍຕົວເອງ. ຮ່ວມມືກັນກັບຮ້ານຄ້າທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຜົນປະໂຫຍດ ແລະ ຊັບສິນຮ່ວມກັນ.

SKY SUPERMART 股份有限责任公司（老挝分公司）成立于 2014 年，以中国内地及香港投资资金成立的新型公司。在当地政府及社会各界朋友的鼎力支持下，建成国内最大最好的超级市场------SKY SUPERMART(ITECC branch，6300 平方米)。届时为当地直接提供就业岗位 100 多个。将为老挝人民呈现一个全新的购物中心。

SKY 以发展经济，繁荣市场为己任。SKY 将通过专业化经营，规范化管理，标准化服务，打造现代优秀企业。本着 ‘以顾客利益为出发点，以公司信誉为立足点；的工作准则，为顾客提供全方位，多层次的优质服务。

现 SKY 全力精心打造老挝首家标准化大型购物中心----SKYSUPERMART。SKY 将以国际化零售企业的经营理念，结合老挝市场和自身特点，精心打造以优质的服务，低廉的价格，丰富的商品为一体的商业购物中心。让老挝人民亲身体验都市时尚购物生活理念。与国内外商家携手共创双赢局面和财富前程！



招商电话 ：020 - 5657 6161；020 - 5657 5252.　　座机：030 - 990 6666.

地址：爱的购物广场B1楼

# 云南鼎顺货运代理有限公司

鼎顺货运
DINGSHUN LOGISTICS

## Yunnan Dingshun Freight Transport Agency Co.,Ltd

云南鼎顺货运代理有限公司响应“国家桥头堡战略”，服务“中国—东盟自由贸易区”，经云南省工商局、中国海关、国家外经贸部、商务部正式批准成立的一级国际货运代理专业公司。

为更好的服务客户，在中国昆明、云南边境口岸、老挝万象、泰国曼谷、缅甸仰光、越南河内、柬埔寨金边都设有办事处，能及时为客户补货，人员、车辆和设备提供过境转关服务。

Yunnan Dingshun Logistics Ltd. answered national development strategy service for “China ASEAN free trade zone” .Yun Nan Industrial and Commercial Bureau , China Customs, the State Trade and Economic Cooperation and Department of Commerce approved a freight forwarding business. In order to better serve customers, our company have branch office in frontier ports, Vientiane of Laos, Bangkok Thailand, Burma Yangon, Hanoi in Vietnam, Kampuchea Phnom Penh, replenishment cargo for custom in time. Provide the customs transit for personnel , vehicle and equipment in frontier ports.

**中国昆明、老挝、泰国、缅甸、越南、柬埔寨 货运专线　大型项目配套物流**

**海运、陆运、空运、国际运输、物资采购　保险代理、单证缮制、代理报关、外汇结算，提供门到门服务**

Freight line of China Kunming, Laos, Thailand, Burma, Vietnam, Kampuchea, Large projects logistics.
Transportation by sea, road transport, air transport, international transport, supplies purchasing, insurance agency, fill in the documents, customs declaration, foreign exchange settlement and door-to-door service



Http：www.dingshun88.com　E-MAIL：168606284@QQ.COM
Customer QQ：1459997464、168606284　TEL：0086-871-68381415
ADD:No.11C Entrance2 Building 7th Xichunyuan
Century Town Kunming Province Yunnan China

网站：www.dingshun88.com　E-MAIL：168606284@QQ.COM
商务QQ：1459997464、168606284　电话：0086-871-68381415
总部地址：云南省昆明市世纪城惜春苑7幢二单元11C



# ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດ

# 西双版纳远大进出口有限公司

ບໍລິສັດຢວນດາຂາອອກຂາເຂົ້າສິບສອງພັນນາຈຳກັດແມ່ນບໍລິສັດຈໍລະຈອນສິນຄ້າສັງລວມບໍລິສັດໜຶ່ງ,ກິດຈະການຕົ້ນຕໍຄື: ຮັບສົ່ງສິນຄ້າລະຫວ່າງຊາດຈີນ,ລາວ,ໄທ,ບໍລິການມີສາງໃຫ້ເຊົ່າ, ສິນຄ້າຂາອອກຂາເຂົ້າແຈ້ງ ພາສີແລະແຈ້ງດ່ານກວດໂລກພະຍາດແລະໄລ່ລຽງເງິນຕາຕ່າງປະເທດແລະອື່ນໆ. ສຳນັກງານໃຫຍ່ຕັ້ງຢູ່ເຂດພັດທະນາເສດຖະກິດບໍ່ຫານສິບສອງພັນນາ. ຍັງມີສຳນັກງານຕັ້ງຢູ່ຄູນໝິງຈີນ,ບາງກອກໄທ,ນະຄອນຫຼວງວຽງຈັນລາວແລະນາເຕີຍ,ບໍລິສັດມີສາງແລະທີມງານລົດຂົນສົ່ງເອງ.

ບໍລິສັດໄດ້ສ້າງສາຍພົວພັນດ້ານກິດຈະການກັບພາກສ່ວນທີ່ກ່ຽວຂ້ອງເປັນຢ່າງດີ, ຄື: ສະຖານທູດລາວ,ໄທ,ກຳປູເຈຍແລະດ່ານພາສີ,ດ່ານກວດກາຊາຍແດນແລະອື່ນໆ.ເພື່ອຍົກປະສິດທິພາບການຂົນສົ່ງແລະການສົ່ງເຖິງສິນຄ້າຢ່າງປອດໄພແລະວ່ອງໄວໃຫ້ສູງຂຶ້ນ.

ບໍລິສັດໄດ້ສະໜອງບໍລິການຄົບວົງຈອນແຕ່ກົກສຸດປາຍ,ເພື່ອສະໜອງບໍລິການ “ໂດຍໄວ, ມີຄວາມປອດໄພ,ມີຄວາມສະດວກແລະມີປະສິດທິພາບສູງ” ໃຫ້ແກ່ລູກຄ້າເປັນວັດຖຸປະສົງຖາວອນຂອງບໍລິສັດຕະຫລອດມາ.

西双版纳远大进出口有限公司是一家主要从事中、老、泰国际运输、仓储、进出口报关报检、结汇等综合性物流公司，总部设在西双版纳磨憨经济开发区，在中国昆明、泰国曼谷、老挝万象和那堆设有办事处，自有仓库和车队。

公司在工作中与相关单位（老挝、泰国、柬埔寨等大使馆及海关边防检查站等）都建立了良好的业务关系，从而提高了货物安全、迅速送达的效率。

公司提供一票到底的全程服务，为客户提供“快速、安全、便捷、高效”的服务一直是公司永恒的宗旨。



总经理：张惠平先生
ທ່ານ ຈາງຮຸ້ຍຜິງ

**主营业务**
★国际货代、货物进出口
★中国—老挝—泰国　专线往返海路、陆路运输
★中国、老挝、泰国代理报关

★ເປັນຕົວແທນຂົນສົ່ງສິນຄ້າລະຫວ່າງຊາດແລະສິນຄ້າຂາອອກຂາເຂົ້າ
★ການຂົນສົ່ງສະເພາະໄປກັບທາງທະເລ,ທາງບົກຂອງຈີນ-ລາວ-ໄທ
★ເປັນຕົວແທນແຈ້ງພາສີຈີນ-ລາວ-ໄທ

公司总部地址：云南省西双版纳州磨憨经济开发区小商品市场45-46号（紫薇路19-21号）
ສຳນັກງານໃຫຍ່ບໍລິສັດຕັ້ງຢູ່: ຖະໜົນຈືເວີຍເລກທີ 19-21 ເບີເຮືອນ45-46 ຕະຫຼາດສິນຄ້ານ້ອຍເຂດພັດທະນາບໍ່ຫານສິບສອງພັນນາ
电话TEL：0691-8811237、8811437 、13518799245(张惠平) E-MAIL: 168606284@qq.com
传真FAX：0691-8811237　客服QQ：783667765
网站：www.ydjck.com　E-mail: 783667765@qq.com
老挝万象办公室地址（OFFICE LAO)：万象市T2路（中国茅台酒专卖店对面）
ສຳນັກງານວຽງຈັນລາວ: ຖະໜົນ T2 ນະຄອນຫຼວງວຽງຈັນ ຕໍ່ໜ້າຮ້ານຂາຍເຫຼົ້າ ເມົາໄຕຈີນ
电话：00856-20-22992286、22564918　电话/传真：00856-21-214071
泰国曼谷办公室地址（OFFICE THAI）：41/54-55 M.7 T.Klongsong A.klongluang Pathumthani 12120
Tel:+66-838247785, +66-906364278 , 021-534852
Email: 168606284@QQ.com

# 云南阳光道桥股份有限公司

## YUNNAN SUNNY ROAD & BRIDGE CO.,LTD

## ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈໍາກັດ




具有五十多年历史的云南阳光道桥股份有限公司，拥有公路工程施工总承包一级资质及对外经济合作业务经营权。累计完成施工里程5000多公里，其中高等级公路1800多公里，获鲁班奖、中国首届诚信企业等多种奖项。通过了ISO9001质量管理体系、ISO14001环境管理体系和OHSAS18001职业安全卫生管理体系国际认证。所承建的工程遍布云南省各地州、中国众多省份和亚非许多国家。我们愿与世界各国、特别是东南亚各国的经济组织、高等院校、科研单位、政府机构等携手开展多层次、宽领域的合作，优势互补，共赢发展。

ບໍລິສັດຂົວທາງຫຸ້ນສ່ວນຢາງກ່ວາງຢຸນນານຈໍາກັດທີ່ມີປະຫວັດການມາໄດ້ 50 ກວ່າປີ ມີຄຸນວຸດທິຊັ້ນ 1 ໃນການຮັບເໝົາລວມວິສະວະກໍາສ້າງທາງ ແລະ ມີສິດດໍາເນີນທຸລະກິດໃນການຮ່ວມມືດ້ານເສດຖະກິດກັບຕ່າງປະເທດ.ລວມທັງໝົດໄດ້ສ້າງທາງສໍາເລັດໄດ້ 5,000 ກວ່າຫຼັກກິໂລແມັດ,ໃນນັ້ນ,ທາງຫຼວງລະດັບຊັ້ນສູງ1,800 ກວ່າກິໂລແມັດ,ໄດ້ຮັບລາງວັນຫຼາຍປະເພດເຊັ່ນ:ລາງວັນລູປານ,ລາງວັນວິສາຫະກິດທີ່ເຊື່ອໃຈໄດ້ຄັ້ງທໍາອິດຂອງຈີນ.ໄດ້ຜ່ານການຮັບຮອງຈາກລະບົບຄຸ້ມຄອງຄຸນນະພາບ ISO9001,ລະບົບຄຸ້ມຄອງສະພາບແວດລ້ອມ ແລະ ລະບົບສາກົນຄວາມປອດໄພ ແລະ ອານາໄມວິຊາຊີບ.ໂຄງການທີ່ຮັບເໝົານັ້ນແມ່ນຢູ່ບັນດາກິ່ງແຂວງ ແລະ ນະຄອນທົ່ວແຂວງຢຸນນານ,ບັນດາຫຼາຍແຂວງຂອງຈີນ ແລະ ຫຼາຍປະເທດໃນອາຊີແລະອາຟຼິກກາ.

ພວກເຮົາມີຄວາມຍິນດີຮ່ວມກັນກັບບັນດາອົງການຈັດຕັ້ງເສດຖະກິດ,ມະຫາວິທະຍາໄລ ແລະ ໂຮງຮຽນຊັ້ນສູງ,ອົງການຄົ້ນຄວ້າວິທະຍາສາດ,ອົງການປົກຄອງຂອງໂລກ ແລະ ຂອງບັນດາປະເທດອາຊີອາຄະເນຈັບມືກັນເປີດການຮ່ວມມືຫຼາຍຊັ້ນລະດັບ ແລະ ຂົງເຂດຢ່າງກວ້າງຂວາງ,ມີທ່າແຮງທົດແທນກັນ,ພັດທະນາຮ່ວມກັນໄດ້ຮັບຜົນປະໂຫຍດພ້ອມກັນ.

地址：中国 昆明市官南大道1588号
电话：0871-67017107　67017108
网址：WWW.YNROAD.COM

ສະຖານທີ່:ຖະໜົນກວນນານເລກທີ່ 1588 ນະຄອນຄຸນມິງ ສປ ຈີນ
ເບີໂທ: 0086-871-67017107　67017108
ເວັບໄຊ: WWW.YNROAD.COM

**做人守德　感恩做人　做事守道　负责做事**

ເປັນຄົນຕ້ອງມີຄຸນສົມບັດ　ຮູ້ຕອບບຸນແທນຄຸນ　ເຮັດວຽກປະຕິບັດຕາມຫຼັກການ　ກ້າແບກຫາບໜ້າທີ່ຮັບຜິດຊອບ




## Wow! ມາແລ້ວ

## ໂປໂມຊັ່ນ ພິເສດ

## Grandly Open

## On 2nd Dec. 2014




ສໍາລັບ ບັດສະມາຊິກ

ຂອງ VIENTIANE CENTER*

( ຂໍ້ມູນເພີ່ມເຕີມ ສາມາດຕິດຕໍ່ພົວພັນກັບທາງພວກເຮົາໄດ້ )

**More Than One Hundred International Brands**

Head the list of Vientiane Center Brands

OMEGA　PLATINUM cineplex　The PIZZA Company

TONY MOLY　benefit　SHISEIDO　Guy Laroche　LONGINES　Arrow
absorba　bsc　RADO　ENFANT　ESTÉE LAUDER　Dior
Wacoal　ELLE　St.Andrews　Wacoal Blouse　Little Walcoal　POPLINE
GUCCI　CLINIQUE　Mix-Self　How　LANCÔME　MAC

**Hotline/+856 20- 5922 5777　5922 6777**

投资商：云南建工集团有限公司暨云南省海外投资有限公司
ຜູ້ລົງທຶນໂຄງການ: ບໍລິສັດວິສະວະກໍາກໍ່ສ້າງຢູນນານກຸ່ມຈໍາກັດ-ບໍລິສັດລົງທຶນຕ່າງປະເທດແຂວງຢູນນານຈໍາກັດ
INVESTORS: YUNNAN CONSTRUCTION ENGINEERING GROUP CO.,LTD. AND YUNNAN PROVINCIAL OVERSEAS INVESTMENT CO.,LTD.

吉达蓬集团公司
ບໍລິສັດກິດຕະພົງກຸ່ມຈໍາກັດ
KRITTAPHONG GROUP CO.,LTD.

开发商：北隆赞湖综合发展有限公司
ຜູ້ພັດທະນາໂຄງການ: ບໍລິສັດພັດທະນາສູນເສດຖະກິດການຄ້າຄົບວົງຈອນໜອງຈັນຕອນເໜືອຈໍາກັດ
DEVELOPER: NORTH NONGCHAN COMPLEX DEVELOPMENT CO.,LTD.

◇Facebook:www.facebook.com/www.vientiane center.com.cn
◇Http:www.vclaos.com

项目地址：老挝万象市库央路
ທີ່ຢູ່ໂຄງການ: ຖະໜົນຄູວຽງ-ນະຄອນຫຼວງວຽງຈັນ
PROJECT ADDRESS:KHOU VIENG ROAD, VIENTIANE, LAOS

ການບິນລາວ
Lao Airlines

# More Miles, More Privileges







## ChamPa MuangLao Member card

**Gold Card**




**Silver Card**




ISO 9001:2008
CERTIFIED
TICKETING & RESERVATIONS

For more information please contact Lao Airlines ticketing office
Tel: +856 21 212 051-54 ; Fax: +856 21 212 056
Email: ticketing@laoairlines.com ; reservation@laoairlines.com
www.laoairlines.com

ໂຮງແຮມເມືອງທອງ
Muangthong Hotel

Tel : +856 71 254 976
Fax : +856 71 252 974
Email: reservation@meuangthonglpb.com

Champa Holidays

Tel : +856 21 212 051-54
Fax : +856 21 212 056
Email: tour@laoairlines.com